<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>

**Copyright © 2006 by BAPTISTWAY PRESS®.**
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມ ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບ ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ຂ004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-4
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 5-7
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 5-7
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 8-11
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8-11
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 12-13 & Christmas Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-12 & Christmast Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

## ບົດຮຽນທີ 1
## ຈົ່ງກາຍມາເປັນຜູ້ຕິດຕາມພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 9:18-26

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 9:18-50

**ຈຸດສຳຄັນຂອງບົດຮຽນນີ້:** ການຕິດຕາມພຣະເຢຊູຫມາຍຄວາມວ່າ ເດີນຕາມເສັ້ນທາງທີ່ພຣະເຢຊູເດີນໄປ, ລວມທັງການກ້າວໄປສູ່ໄມ້ກາງແຂນ.

**ຄຳຖາມເພື່ອສຳຣວດ:** ຍັງອີກດົນປານໃດທ່ານຈຶ່ງຈະຕິດຕາມພຣະເຢຊູ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະສາມາດກ່າວໄດ້ວ່າຜູ້ຕິດຕາມພຣະເຢຊູ ຫມາຍຄວາມວ່າຕ້ອງເປັນຜູ້ຮູ້ຈັກຊົ່ງຊາຕີລາຄາໂດຍອົງພຣະເຢຊູ.

## ຄຳນຳ

ຂ້າພະເຈົ້າຈຳໄດ້ວ່າ ຂ້າພະເຈົ້າມີຄວາມຮູ້ສຶກຕື່ນເຕັ້ນຫລາຍ ເມື່ອໄປລຽບເລາະເບິ່ງເຂດຂອງປຶ້ມທີ່ກ່ຽວກັບສາສນາ ໃນບ່ອນຂາຍປຶ້ມແຫ່ງນຶ່ງໃນເມືອງ ດາລັດ ແລະກໍໄດ້ພົບປຶ້ມກ່ຽວກັບພຣະເຢຊູມາຫລາຍຫົວດ້ວຍກັນ. ຢ່າງໃດກໍຕາມ, ຄວາມຕື່ນເຕັ້ນກໍໄດ້ຜ່ອນຄາຍລົງ ເມື່ອເບິ່ງໄປມາແລ້ວກໍເຫັນປຶ້ມທີ່ນັກຂຽນຫລາຍທ່ານໄດ້ຂຽນກ່ຽວກັບການສຳມະນາຂອງພຣະເຢຊູ, ກ່ຽວກັບຈຸດເລັງໃສ່ພຣະອົງເອງແລະເປົ້າຫມາຍ ທີ່ຈະອະທິບາຍໃຫ້ເຫັນພຣະອົງຢ່າງຈະແຈ້ງວ່າພຣະອົງແມ່ນຜູ້ໃດແທ້. ເພາະວ່າຫລາຍຄົນທີ່ສຳມະນາຢູ່ນີ້ ແມ່ນຕ້ອງການຢາກຮູ້ເຣື່ອງອານາຄົດ: ພວກເຂົາຍັງສົງສັຍໃນການສຶກສານີ້ຢູ່ ແລະກໍສົງສັຍໃນປະວັດສາດທີ່ກ່າວຜ່ານມາ. ຄວາມຄິດເຫັນຂອງພວກເຂົາຈຶ່ງເປັນອັນວ່າບໍ່ຊັດເຈນ. ເມື່ອພິຈາລະນາເບິ່ງແລ້ວເຫັນວ່າ ນັກຮຽນສຳມະນາທັງຫລາຍໄດ້ເຕັມລົ້ນໄປດ້ວຍຄຳຖາມວ່າພຣະເຢຊູແມ່ນຜູ້ໃດ.

ເຊັ່ນດຽວກັນ ຄຳຖາມທີ່ຍັງຂ້ອງໃຈຂອງຄົນທັງຫລາຍເຊັ່ນ: ຜູ້ທີ່ຈ້ອງມອງເບິ່ງພຣະເຢຊູສະແດງອັສຈັນ, ຟັງຄຳສິດສອນອັນແປກປລາດໃນຂະນະທີ່ພຣະອົງແລະພວກສາວົກ ກຳລັງເດີນທາງໃນແຖບຄາລີເລ. ແມ່ນແຕ່ສາວົກຂອງພຣະອົງເອງ, ພຣະອົງກໍຍັງຈັບໄດ້ໃນເວລາພວກເຂົາສົນທະນາກັນ. ດັ່ງນັ້ນ ພຣະອົງຈຶ່ງໄດ້ອະທິບາຍແລະແນະນຳໃຫ້ພວກເຂົາຟັງໃນເວລາທີ່ພຣະອົງນຳພວກເຂົາໄປອະທິຖານພິເສດ.

**ຄຸນລັກສະນະຂອງພຣະເຢຊູ** (ລູກາ 9:18-20)

ຢູ່ໃນພຣະທັມຕອນນີ້ ຊຶ່ງແມ່ນພຣະກິດຕິຄຸນລູກາ ໄດ້ສະລູບເຖິງການປ່າວປະກາດຂອງອົງພຣະເຢຊູໃນແຖບຄາລີເລ ແລະກໍຍັງໄດ້ກ່າວເຖິງຈຸດຈົບຂອງການເດີນທາງທີ່ກຸງເຢຣູຊາເລັມແລະເທິງກາງແຂນ. ບັນດາສາ ວົກທັງຫລາຍກໍມີຄວາມສັບສົນວຸ້ນວາຍ. ເມື່ອພຣະອົງຊົງປິ່ນປົວຄົນເຈັບປ່ວຍໃຫ້ຫາຍຈາກພະຍາດ ແລະ ສຳແດງອັສຈັນຫລາຍຢ່າງ. ຫລັງຈາກຊົງລ້ຽງຄົນຫ້າພັນຄົນແລ້ວ ພຣະອົງຈຶ່ງຊົງນຳສາວົກຂອງພຣະອົງ ໄປສຳມະນາຊຶ່ງພຣະອົງຍັງບໍ່ທັນໄດ້ກະທຳ. ໃນການສຳມະນານີ້ ພຣະອົງໄດ້ໃຊ້ຊີວິດຢ່າງໃກ້ຊິດກັບພວກເຂົາ ແລະ ກັບພຣະບິດາດ້ວຍ. ໃນເວລາສຳມະນານີ້ ພຣະອົງຢາກຈະໃຫ້ບັນດາສາວົກທັງຫລາຍໄດ້ເຂົ້າໃຈພຣະອົງຢ່າງຈະແຈ້ງວ່າພຣະອົງ ແມ່ນຜູ້ ໃດ.ພຣະອົງຈຶ່ງຊົງຖາມເຂົາວ່າ "ປະຊາຊົນເວົ້າກັນວ່າເຮົາແມ່ນຜູ້ໃດ?" ລູກາ 9:18

ຕໍ່ຄຳຖາມນີ້ ພວກສາວົກກໍພາກັນຕອບໄປຕ່າງໆນາໆ ໂດຍອີງໃສ່ຜູ້ພະຍາກອນສມັຍທີ່ຜ່ານມາເຊັ່ນ: ບາງຄົນວ່າແມ່ນໂຢຮັນບັບຕິສໂຕ, ບາງຄົນກໍວ່າແມ່ນເອລີຢາ ຫລືຄົນອື່ນໆອີກ..... ແລ້ວພຣະອົງກໍໄດ້ຍ້ອນ ຖາມພວກເຂົາອີກວ່າ: "ພວກທ່ານເດວ່າເຮົາແມ່ນຜູ້ໃດ?" ພຣະເຢຊູບໍ່ຢາກໄດ້ຍິນຄຳເວົ້າວ່າ ຄົນນັ້ນເວົ້າຢ່າງນັ້ນ, ຄົນນີ້ເວົ້າຢ່າງນີ້ ຊຶ່ງເປັນຄຳເວົ້າແບບພັງເພີຍ ພຣະອົງຈຶ່ງເນັ້ນວ່າ "ພວກທ່ານ" ສະແດງວ່າຄົນທີ່ຢູ່ທີ່ນີ້ ຄົນທີ່ຢູ່ລວມກັນນີ້ພວກທ່ານວ່າເຮົາເປັນຜູ້ໃດ.

ເປໂຕ ດູເຫມືອນວ່າຈະເປັນຄົນກ້າເວົ້າກ້າວ່າລາວຈຶ່ງຕອບອອກມາ, ລາວອາດຈະໄດ້ສົນທະນາກັບຫມູ່ຄູ່ສາວົກດ້ວຍກັນມາແລ້ວ. ຄຳຕອບຂອງເປໂຕໃນມັດທາຍ 16:16 "ທ່ານເປັນພຣະຄຣິດ, ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່." ຄຳຕອບໃນລູກາ 9:20 ນີ້ ເປໂຕຕອບງ່າຍໆ ວ່າ "ແມ່ນພຣະຄຣິດມາແຕ່ພຣະເຈົ້າ"

ຄຳວ່າ "ຄຣິດ" ແມ່ນພື້ນຖານມາຈາກພາສາກຣີກຂອງຄຳວ່າ "ເມຊີອາ", ຜູ້ທີ່ພຣະເຈົ້າຊົງເຈີມແລ້ວ.

## <u>ຄຳແນະນຳຂອງພຣະເຢຊູ</u> (ລູກາ 9:21-22)

ພຣະເຢຊູ ກໍສະດຸ້ງທັນທີທີ່ໄດ້ຍິນຄຳຕອບຈາກສາວົກຂອງພຣະອົງວ່າ ທ່ານແມ່ນພຣະຄຣິດທີ່ມາຈາກພຣະເຈົ້າ. ພຣະອົງຈຶ່ງຊົງສັ່ງຫ້າມພວກເຂົາຢ່າງແຂງແຮງວ່າບໍ່ໃຫ້ບອກຜູ້ໃດ. (9:21)

### <u>ເປັນຫຍັງພຣະເຢຊູຈຶ່ງຫ້າມປາມພວກເຂົາເຊັ່ນນີ້?</u>

ຄຳວ່າ "ເມຊີອາ" ເປັນຄຳທີ່ແຜ່ຂຍາຍແລະກໍເປັນຄຳປຣິສນາໃນສັຕວັດທຳອິດໃນເຂດປາແລສໄຕ. ຄຳນີ້ ຍັງເປັນຄຳທີ່ໃຊ້ໃນວົງການເມືອງ ແລະໃຊ້ທົ່ວໄປຕາມສະພາບການຂອງມັນ. ປະຊາຊົນສ່ວນຫລາຍແມ່ນ ເຫັນຮູບພາບພຣະເມຊີອາຈະມາເປັນຜູ້ນຳກອງທະຫານທີ່ຍິ່ງໃຫຍ່ ເພື່ອຈະມາປົດປ່ອຍອິສຣາເອນໃຫ້ອອກຈາກອຳນາດການປົກຄອງຂອງກຸງໂຣມ. ແລະກໍຍັງເຂົ້າໃຈວ່າ ພຣະເມຊີອາຈະໃສ່ຊຸດນັກຮົບແລະຈະມີແຜນອຸບາຍຢ່າງແນບນຽນເຫນືອເຈົ້າຜູ້ປົກຄອງທັງຫລາຍ. ຢ່າງໃດກໍຕາມ, ພຣະເຢຊູບໍ່ແມ່ນພຣະເມຊີອາ ເຫມືອນດັ່ງປະຊາຊົນ ແລະພວກສາວົກຄິດເອົາໄວ້. ພຣະອົງເປັນພຣະເມຊີອາຊຶ່ງຖືກຕ້ອງຕາມພຣະຄັມພີຊົງ ບັນທຶກໄວ້. ພຣະອົງສະເດັດມາເພື່ອໃຫ້ພຣະຄັມດີສຳເຣັດ ບໍ່ແມ່ນສະເດັດມາເພື່ອລົບລ້າງພຣະບັນຍັດ. ໃນ ພຣະຄັມພີເດີມກ່າວວ່າພຣະອົງຈະມາເປັນຜູ້ຮັບໃຊ້ທີ່ຮັບຄວາມທຸກຍາກລຳບາກ (ເອຊາຢາ ບົດທີ 53) ກະ ສັດທີ່ສະເດັດມາ ຈະເປັນຄົນທີ່ອ່ອນສຸພາບແລະຊົງຄວາມຍຸດຕິທັມ ແລະຊົງຂີ່ລາ. (ເຊຄາຣີຢາ 9:9) ເມື່ອມາເຖິງຕອນນີ້ ພວກສາວົກຍັງບໍ່ເຂົ້າໃຈວ່າພຣະເຢຊູຈະເປັນພຣະເມຊີອາປະເພດໃດ. ດັ່ງນັ້ນພຣະເຢຊູຈຶ່ງຢາກໃຫ້ພວກເຂົາມິດຢູ່, ແຕ່ພຣະອົງກໍບໍ່ຢາກໃຫ້ພວກເຂົາງຶງງັນຈຶ່ງອະທິບາຍຕໍ່ໄປວ່າ "ບຸດມະນຸດຈະຕ້ອງທົນທຸກທໍຣະມານຫລາຍປະການ." (ລູກາ 9:22) ພຣະເຢຊູບໍ່ໄດ້ສະແດງເງື່ອນໄຂໃດໆທັງຫມົດ ແຕ່ພຣະອົງຊົງກ່າວວ່າພຣະອົງ "ຕ້ອງ" ຫມາຍຄວາມວ່າບໍ່ມີການຫລີກລ້ຽງໄດ້ເລີຍ. ພຣະອົງກໍຍັງກ່າວຕໍ່ໄປຊຶ່ງປະກາດເຖິງການສິ້ນພຣະຊົນຂອງພຣະອົງ. ເມື່ອເວົ້າເຖິງຄວາມຕາຍສາວົກນຶ່ງສົງສັຍຢ່າງໃຫຍ່. ພວກເຮົາບໍ່ສາມາດຈະບັນລະຍາຍທ່າທີການສະແດງອອກຂອງສາວົກຢ່າງໃດໄດ້ ໃນເມື່ອຜູ້ນຳຂອງພວກເຂົາຜູ້ທີ່ເຂົາຕິດຕາມເຊື່ອຖືປະກາດວ່າຈະຕ້ອງຕາຍ.

ເຖິງແມ່ນວ່າພວກເຂົາຈະສົງສັຍປານໃດກໍຕາມ, ພຣະເຢຊູກໍຍັງໄດ້ກ່າວອີກເຖິງສອງຄັ້ງໃນລູກາ 9:44; ແລະ 18:31-33. ການເຂົ້າໃຈທີ່ຊາບຊຶ້ງທີ່ສຸດຈະເກີດຜົນທີ່ແທ້ຈິງໄດ້ນັ້ນ ແມ່ນຫລັງຈາກການຟື້ນຄືນພຣະຊົນຢ່າງດຽວເທົ່ານັ້ນ.

## <u>ການເຊື້ອເຊີນຂອງພຣະເຢຊູ</u> (ລູກາ 9:23-27)

ເມື່ອຊົງກ່າວຢ່າງນັ້ນແລ້ວ ພຣະເຢຊູກໍໄດ້ທ້າທາຍຕໍ່ຝູງຊົນທັງຫລາຍວ່າ ເສັ້ນທາງທີ່ທຸກທໍຣະມານນີ້ ທຸກຄົນຈຳເປັນຕ້ອງໄດ້ເດີນ ຖ້າຜູ້ໃດມີຈຸດປະສົງທີ່ຈະຕາມເຮົາມາ. (9:23)

ທີ່ຈະປະຕິເສດຕົວເອງໄດ້ນັ້ນ ຄົນໆນັ້ນຈຳເປັນຕ້ອງອອກຈາກຊີວິດເດີມ ຄືຊີວິດທີ່ເຫັນແກ່ຕົວເອງ, ຊີວິດທີ່ອວດອົ່ງຈອງຫອງ, ຊີວິດທີ່ເຕັມໄປດ້ວຍຄວາມບາບກາຍມາເປັນຊີວິດທີ່ເພິ່ງຄວາມຊອບທັມຂອງພຣະເຈົ້າເພິ່ງພຣະກຳລັງຂອງພຣະເຈົ້າ.

ພວກສາວົກຈຳຕ້ອງແບກກາງແຂນຂອງຕົນທຸກວັນ ຫມາຍຄວາມວ່າຕ້ອງເດີນຕາມຮອຍພຣະບາດຂອງພຣະເຢຊູ ບໍ່ວ່າພຣະອົງຈະເປັນຢ່າງໃດ ແລະການເດີນຕາມນີ້ຈະຕ້ອງຕາມທຸກວັນໂດຍບໍ່ມີການລະເວັ້ນ. ເມື່ອພຣະເຢຊູທາການຮຽກຮ້ອງສາວົກໃນສັຕວັດທີນຶ່ງຢ່າງນີ້ ການຮຽກຮ້ອງຂອງພຣະອົງໃນສັຕວັດທີ 21 ກໍຍັງເປັນເຫມືອນເດີມ ສິ່ງທີ່ທ່ານສາມາດເຮັດໄດ້ກໍຄື ທ່ານຈະຕາມພຣະອົງຫລືຈະປະຕິເສດພຣະອົງ.

ຜົນທີ່ໄດ້ຈະຕາມມາ, ຖ້າຜູ້ໃດປະຕິເສດຜູ້ນັ້ນກໍຈະເສັຍຊີວິດ ແຕ່ຖ້າຜູ້ໃດຕາມພຣະອົງຊີວິດຂອງເຂົາກໍຈະພົ້ນ ຫມາຍຄວາມວ່າກໍຈະໄດ້ພົ້ນຈາກການຕັດສິນ (ພິພາກສາ)

ພຣະເຢຊູຈົບລົງດ້ວຍສອງຄຳເວົ້າຄື ຄຳເຕືອນແລະຄວາມຫວັງ. ຄຳເຕືອນໃນຂໍ້ທີ 26 ຖ້າຜູ້ໃດມີຄວາມລະອາຍບໍ່ຍອມຕ້ອນຮັບເອົາພຣະອົງ, ພຣະອົງກໍຈະມີຄວາມລະອາຍຕໍ່ຜູ້ນັ້ນເຫມືອນກັນ. ສຳລັບຄວາມຫວັງແລ້ວ ພຣະອົງຊົງກ່າວເປັນຄຳສັນຍາແບບເຊື່ອງສົ້ນ ໃນຂໍ້ທີ 27 ວ່າ: ມີລາງຄົນທີ່ຢືນຢູ່ທີ່ນີ້ຈະບໍ່ຮູ້ຣົດຂອງ ຄວາມຕາຍຈົນກວ່າຈະໄດ້ເຫັນຣາຊອານາຈັກຂອງພຣະເຈົ້າ. ຖ້າຜູ້ໃດເດີນຕາມພຣະອົງແຜ່ນດິນຂອງພຣະເຈົ້າແມ່ນຢູ່ໃກ້ເຂົາແລ້ວພຣະອົງຈະກັບມາໄວໆໃນບໍ່ຊ້າ.

ຢ່າງໃດກໍຕາມ, ພວກເຮົາຍັງຮູ້ວ່າການສິ້ນພຣະຊົນຂອງພຣະເຢຊູບໍ່ແມ່ນການທຳລາຍຂອງມານຊາຕານ ແຕ່ແມ່ນແຜນການຂອງພຣະເຈົ້າ ແລະແຜນການຂອງພຣະອົງກໍຍ່ອມໄດ້ຮັບຊັຍຊະນະທຸກເວລາ. ບາງຄັ້ງຄາວບັນດາພວກສາວົກກໍບໍ່ເຂົ້າໃຈໃນການປະກາດຕົວຂອງພຣະເຢຊູ. ແລະພວກເຮົາກໍເຊັ່ນດຽວກັນພວກເຮົາກໍບໍ່ຄວນລືມຊັຍຊະນະແລະຄວາມຫວັງທີ່ພວກເຮົາມີຢູ່ໃນພຣະເຢຊູ.

**<u>ບົດສະລຸບ:</u>**

ຄຳຖາມທີ່ພຣະເຢຊູຊົງຖາມໃນສັຕວັດທຳອິດເປັນຄຳຖາມທີ່ສຳຄັນ "ພວກທ່ານເດ ວ່າເຮົາແມ່ນຜູ້ໃດ?" ຊຶ່ງຄຳຕອບຈະເປັນການສຳແດງຄຸນພາບຂອງຊີວິດຢູ່ໃນປັດຈຸບັນນີ້ ແລະຍັງຈະເປັນເປົ້າຫມາຍຂອງຊີວິດຫລັງຈາກສິ້ນຊີວິດໄປແລ້ວ.

ຄຳຖາມນີ້ຍັງເປັນຄຳຖາມທີ່ສະເພາະເຈາະຈົງໃນສ່ວນຕົວ, ຖ້າເປັນຄຳຖາມໃນສ່ວນຕົວທ່ານຈະຕອບພຣະອົງວ່າຢ່າງໃດ. ຢ່າລືມວ່າທ່ານຈຳເປັນຕ້ອງຕອບຄຳຖາມນີ້ດ້ວຍຕົນເອງແລະດ້ວຍປາກຂອງທ່ານເອງ.

ເມື່ອວັນສຸດທ້າຍມາເຖິງ, ພຣະອົງຈະຕັດສິນໂລກດ້ວຍຄວາມຍຸດຕິທັມ ດັ່ງເປໂຕໄດ້ກ່າວຢູ່ໃນກິຈການ ບົດທີ 17:31

**<u>ຄຳຖາມ</u>**

1. ຕໍ່ຄຳຖາມທີ່ວ່າອົງພຣະເຢຊູຄືຜູ້ໃດ? ເພື່ອນບ້ານໃກ້ຄຽງ ແລະຜູ້ທີ່ຮ່ວມວຽກງານກັບທ່ານຈະຕອບທ່ານວ່າຢ່າງໃດ?

2. ເປັນຫຍັງພວກສາວົກລຸ້ນທຳອິດຈຶ່ງຮັບພຣະເຢຊູຍາກແທ້ໃນການທີ່ວ່າພຣະເມຊີອາຈະຊົງທົນທຸກທໍຣະມານນັ້ນ?

3. ຄວາມຈິງໃນພຣະຄັມພີກ່າວໄວ້ຢ່າງໃດ ກ່ຽວກັບບັນຫາເຣື່ອງພຣະເຢຊູໃນທຸກວັນນີ້?

4. ທ່ານຕ້ອງເສັຽຫຍັງແດ່ ທີ່ຈະກາຍມາເປັນຜູ້ຕິດຕາມພຣະເຢຊູ?

5. ເປັນຫຍັງຈຶ່ງເວົ້າວ່າສຳຄັນໃນການຕິດຕາມພຣະເຢຊູທຸກວັນ?

*ສຈ.ດຣ. ບຸນໂຮມ ພິມມະຈັນ*

# ບົດຮຽນທີ 2
# ຕິດຕາມພຣະເຢຊູພຽງຜູ້ດຽວ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ລູກາ 9:51-62
**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ລູກາ 9:51-62
**ຈຸດສໍາຄັນຂອງບົດຮຽນນີ້:** ຕິດຕາມພຣະເຢຊູຫມາຍຄວາມວ່າເລືອກເດີນຕາມທາງຂອງພຣະເຢຊູໂດຍສະເພາະ.
**ຄໍາຖາມເພື່ອສໍາຣວດ:** ແມ່ນຫຍັງຫລືຜູ້ໃດທີ່ທ່ານຈະເດີນຕາມ, ຖ້າທ່ານຫາກເດີນຕາມພຣະເຢຊູແລ້ວ?
**ຈຸດປະສົງຂອງບົດຮຽນ:** ເພື່ອຈະຊັ່ງຊາຕີລາຄາວ່າ ຂ້ອຍມີສິ່ງໃດທີ່ຈໍາເປັນກວ່າອົງພຣະເຢຊູ

## ຄໍານໍາ

ວັນນຶ່ງ ໃນຂະນະທີ່ຂ້າພະເຈົ້າຈອດລົດຢູ່ໄຟແດງ, ຫລຽວໄປຫລຽວມາກໍເລີຍເຫລືອກໄປເຫັນຣົດຄັນນຶ່ງຈອດຢູ່ຂ້າງໆ. ໃນຣົດຄັນນັ້ນມີສິ່ງນຶ່ງທີເຮັດໃຫ້ຂ້າພະເຈົ້າງົງ ກໍຄືວ່າສິ່ງທີ່ຫ້ອຍຢູ່ກະຈົກນັ້ນມີໄມ້ກາງແຂນແລະຮູບຜູ້ຍິງເປືອຍກາຍ ຊຶ່ງເປັນຫນ້າອັບອາຍຂາຍຫນ້າຫລາຍ. ພວກເຮົາຫລາຍຄົນກໍພາກັນກະທໍາສິ່ງເຫລົ່ານີ້ເຫມືອນກັນໃນການຖວາຍຕົວໃຫ້ກັບອົງພຣະເຢຊູ ພວກເຮົາອະລຸ້ມອະລ່ວຍໃນການທີ່ຈະຕັດສິນໃຈເອົາໃຜກັນແທ້.

ພວກສາວົກໃນສັຕວັດທໍາອິດກໍໄດ້ຍອມຮັບວ່າຕົນເອງໄດ້ອະລຸ້ມອະລ່ວຍໃນການຖວາຍຕົວໃຫ້ກັບພຣະເຢຊູແທນທີ່ຈະຖວາຍຕົວຢ່າງສຸດໃຈໃຫ້ກັບຄໍາສັ່ງຂອງອົງພຣະເຢຊູແຕ່ພຽງຜູ້ດຽວ. ດັ່ງນັ້ນ ເມື່ອໃກ້ຈະເຖິງກຸງເຢຣູຊາເລັມພຣະອົງຈຶ່ງຊົງພິຖີພິຖັນຫລາຍກ່ຽວກັບຄໍາສັ່ງທີ່ພຣະອົງຊົງສັ່ງພວກສາວົກ.

**ພຣະເຢຊູຊົງມຸ້ງຫນ້າສູ່ກຸງເຢຣູຊາເລັມ** (ລູກາ 9:51-56)
ລູກາ 9:51 ໄດ້ເປີດເຜີຍວ່າ ໃນການທີ່ພຣະເຢຊູກໍາລັງສະເດັດມຸ້ງຫນ້າສູ່ກຸງເຢຣູຊາເລັມນີ້ມີຄວາມຫມາຍຫລາຍກວ່າເຣື່ອງສາສນາແລະເຣື່ອງການເດີນທາງທັມດາ. ຂໍ້ພຣະຄັມພີກ່າວໄວ້ກ່ຽວກັບການສະເດັດສູ່ເຢຣູຊາເລັມ ກໍມີຢູ່ໃນບົດທີ 13:22, 31-33; 17:11,28-29. ສ່ວນຫລາຍພຣະອົງກໍມັກຈະເວົ້າເນັ້ນກັບພວກສາວົກເພາະໃກ້ຈະຈວນເວລາຂອງພຣະອົງແລ້ວ. ຂະນະທີ່ກໍາລັງເດີນໄປມາຢູ່ແຖບຄາລີເລພາກເຫນືອຈະເຂົ້າສູ່ຕອນໃຕ້ຂອງເຢຣູຊາເລັມພຣະອົງກໍໄດ້ເດີນທາງຜ່ານໄປທາງຊາມາເຣັຽ. ໃນສມັຍຂອງພຣະເຢຊູ ຊາມາເຣັຽ ເປັນເຂດທີ່ຖືກລັງກຽດຖ້ານກາງພວກຍິວທັງຫລາຍ. ເປັນຫຍັງຈຶ່ງຖືກລັງກຽດ? ແຕ່ຄາວກ່ອນອານາ ຈັກພາກເຫນືອໄດ້ຕົກຢູ່ໃຕ້ອໍານາດຂອງອັດຊີເຣັຽ ໃນປີ 721 ກ່ອນຄຣິຕສັກຣາດ. ຄົນອິສຣາເອນໄດ້ຖືກ ຂັບໄລ່ໄປຕັ້ງຖິ່ນຖານຢູ່ເຂດອື່ນ ແລະຄົນເຂດອື່ນໆກໍໄດ້ເຂົ້າມາຕັ້ງຖິ່ນຖານຢູ່ອິສຣາເອນ ຈຶ່ງເຮັດໃຫ້ມີການແຕ່ງກັບຄົນຕ່າງຊາດ ແລະການນະມັສການພຣະເຈົ້າກໍເລີຍມີການປ່ຽນແປງໄປດ້ວຍ. 2 ພກສ 17:6, 24-26 ຫລັງຈາກນັ້ນສມັຍຂອງເອສຣາແລະເນເຫມີຢາໄດ້ອອກຄໍາສັ່ງວ່າຕ້ອງນະມັສການພຣະເຈົ້າອົງບໍຣິສຸດພຽງອົງດຽວ. ພວກຊາວຊາມາເຣັຽ (ລູກເຄິ່ງ, ລູກຊອດ) ທັງຫລາຍຈຶ່ງກາຍມາເປັນທີ່ຖືກຕໍາຫນິແລະຖືກກຽດຊັງ ຂອງພວກຍິວລູກແທ້. ຄວາມກຽດຊັງໄດ້ຖືກຝັງແຫນ້ນໃນໃຈຂອງພວກເຂົາເປັນສັຕວັດໆ, ຈົນມາເຖິງສັຕວັດທໍາອິດ ຊຶ່ງເປັນສມັຍຂອງພຣະເຢຊູຊາມາເຣັຍກໍຍັງກາຍມາເປັນສິ່ງທີ່ຕ້ອງຫ້າມໃນການທີ່ຈະຄົບຄ້າສະມາຄົມກັບຊາວຍິວ ຊຶ່ງເຫັນໄດ້ໃນ ໂຢຮັນ 4:9

ການເດີນທາງຜ່ານຊາມາເຣັຽຄັ້ງນີ້ ສະແດງວ່າພຣະອົງຢາກຈະທໍາລາຍການແບ່ງແຍກຄວາມລັງກຽດຊຶ່ງກັນແລະ

ກັນ. ໃນການເດີນທາງຄັ້ງນີ້ ພຣະອົງໄດ້ສົ່ງຜູ້ຮັບໃຊ້ຂອງພຣະອົງລ່ວງໜ້າໄປກ່ອນເພື່ອຈັດແຈງໄວ້ສຳລັບພຣະອົງ ໃນບ້ານແຫ່ງນຶ່ງ. ໜ້າເສັຽດາຍ, ຊາວບ້ານທັງຫລາຍບໍ່ຍອມຕ້ອນຮັບພຣະອົງ (9:53)ເພາະພຣະອົງຕັ້ງໃຈໄວ້ວ່າຈະ ໄປນະມັສການທີ່ກຸງເຢຣູຊາເລັມ ຊຶ່ງຊາວຊະມາເຣັຽກໍບໍ່ມັກໜ້າເໝືອນກັນ.

ໂບອາເນີເຢ ແປວ່າ "ຄົນໃຈຮຸນແຮງ" (ພາສາລາວ) ລູກຟ້າຮ້ອງ (ພາສາໄທ) ມາລະໂກ 3:17 ໄດ້ທູນພຣະເຢຊູວ່າ ພຣະອົງຢາກໃຫ້ພວກຂ້ານ້ອຍເອີ້ນເອົາໄຟຈາກສວັນມາເຜົາຜານພວກເຂົາບໍ່, ແຕ່ພຣະອົງກໍຊົງໄດ້ຫ້າມປາມເຂົາ. ສາ ວົກມີຄວາມເສັຽໃຈຫລາຍເພາະຊາວຊະມາເຣັຽບໍ່ຍອມຕ້ອນຮັບພຣະອົງ, ພຣະເຢຊູຍິ່ງມີພະລັງ ມີອຳນາດເໜືອກວ່າ ຜູ້ປະກາດພຣະທັມທັງຫລາຍ. ພຣະອົງສົມຄວນແກ່ການຕ້ອນຮັບຂັບສູ້ຢ່າງເອົາຈິງເອົາຈັງ ເພາະພຣະອົງເໜືອກວ່າ ເອລີຢາຜູ້ສາມາດຮຽກຮ້ອງໄຟມາຈາກສວັນໄດ້. ( 2 ພົງກະສັດ 1:9-12 )

ລູກາບໍ່ໄດ້ບອກຢ່າງແນ່ນອນວ່າບ້ານໃດແດ່ທີ່ພຣະອົງຊົງຜ່ານໄປ ແຕ່ໃນຂະນະທີ່ເດີນທາງຮ່ວມກັບພວກສາວົກຢູ່ນັ້ນ ກໍມີຫລາຍຄົນໄດ້ມາຖາມພຣະອົງເຖິງເຣື່ອງການຕິດຕາມພຣະອົງ.

**<u>ຄົນສາມຄົນທີ່ຫັນຫລັງໃຫ້ກັບພຣະເຢຊູ</u>** (ລູກາ 9:57-62)

ເພື່ອຈະອະທິບາຍຖ້ອຍຄຳໃນຕອນນີ້ ຂໍຍົກຕົວຢ່າງນ້ອຍໆອັນນຶ່ງໃຫ້ທ່ານເຫັນຄືວ່າ: ຊາຍຄົນນຶ່ງນັ່ງເທິງຢູ່ໂຊຟາມືຈັບ ຣີໂມດຄອນໂທຣນ ແລ້ວກໍບີບຊ່ອງນັ້ນຊ່ອງນີ້ຕາມຄວາມຊອບໃຈ. ເມັຽຂອງລາວບອກລາວວ່າມື້ນີ້ຄືບໍ່ໄປຕັດຫຍ້າ ແດ່ມັນຍາວຫລາຍແລ້ວເດ. ຝ່າຍຜົວກໍຕອບວ່າ ເອີ້, ຂ້ອຍເອງກໍຄິດຢູ່ວ່າຊິເຮັດອັນໃດກ່ອນ, ຊິລ້າງຣົດກ່ອນບໍ ຫລືວ່າ ຊິທຳຄວາມສະອາດກາຣາກ່ອນ. ພວກເຮົາຄົງຈະເຫັນຄົນປະເພດນີ້ຫລາຍ ສ່ວນຫລາຍເຂົາຈະຄິດແຕ່ບໍ່ຍອມທີ່ຈະລົງ ມື. ພຣະເຢຊູໄດ້ຫມູນໃຈພວກສາວົກທີ່ຍັງມີຄວາມລັ່ງເລໃຈຢູ່, ໂດຍພຣະອົງໄດ້ໃຫ້ຄຳຕອບວ່າມີຄວາມໝາຍຢ່າງ ໃດໃນການຕິດຕາມພຣະອົງ.

ຕົວຢ່າງທຳອິດ, ພຣະເຢຊູກ່າວຕໍ່ຄົນທີ່ກ່າວກັບພຣະອົງວ່າທ່ານຈະໄປທີ່ໃດຂ້ານ້ອຍຈະຕິດຕາມທ່ານໄປທີ່ນັ້ນ "ໝາ ຈິ້ງຈອກກໍມີຮູ ແລະນົກປ່າກໍຍັງມີຮັງ ແຕ່ບຸດມະນຸດບໍ່ມີບ່ອນຈະວາງຫົວລົງ" (9:58) ໃນນີ້ອົງພຣະເຢຊູຊົງສັ່ງສອນ ພວກເຮົາວ່າພວກເຮົາບໍ່ສາມາດຈະກຳນົດກົດເກນຊີວິດໄດ້, ພວກເຮົາບໍ່ສາມາດຈະຈັດຕຽມຊີວິດຂອງຕົນເອງໃຫ້ຍາວ ຫລືສັ້ນໄດ້ ມີພຽງແຕ່ພຣະເຢຊູເທົ່ານັ້ນ. ຜູ້ທີ່ຕັດສິນໃຈຈະຕິດຕາມພຣະເຢຊູຜູ້ນັ້ນກໍຄວນຈະເປັນຜູ້ປະຕິບັດຕາມຄຳສັ່ງ ຂອງພຣະອົງເທົ່ານັ້ນ.

ຂ້າພະເຈົ້າເຄີຍມີປະສົບການໃນການຮຽກເອີ້ນໃນຊີວິດຂອງຂ້າພະເຈົ້າເອງ. ເວລາຂ້າພະເຈົ້າຍັງຢູ່ໃນສູນອົພຍົບ ພຣະ ເຈົ້າໄດ້ຄ່ອຍໆຮຽກເອີ້ນຂ້າພະເຈົ້າໃຫ້ມາເປັນຜູ້ປ່າວປະກາດ. ຂ້າພະເຈົ້າໄດ້ເລີ້ມສິດສອນ, ບາງຄັ້ງກໍເທສນາໄປດ້ວຍ ຕໍ່ຈາກນັ້ນມາການຮຽກເອີ້ນຂອງພຣະເຈົ້າກໍຈະແຈ້ງອອກ, ຂ້າພະເຈົ້າຈຶ່ງໄດ້ຍອມຖວາຍຕົວໃຫ້ເປັນຜູ້ຮັບໃຊ້ຂອງພຣະ ອົງ. ຂ້າພະເຈົ້າບໍ່ໄດ້ຄິດໄວ້ກ່ອນວ່າຈະກາຍມາເປັນຜູ້ນຳເຖິງ 4 ຄຣິສຕະຈັກດ້ວຍກັນໂດຍໄປຕາມຄຳສັ່ງຂອງພຣະ ອົງ.

ຕົວຢ່າງທີສອງ, ພຣະເຢຊູໄດ້ເອີ້ນໃຫ້ຕິດຕາມພຣະອົງວ່າ: "ຈົ່ງຕາມເຮົາມາ" ຜູ້ນັ້ນກໍຕອບວ່າ "ຂໍໂຜດອະນຸຍາດໃຫ້ ຂ້ານ້ອຍໄປຝັງສົບພໍ່ຂອງຂ້ານ້ອຍເສັຽກ່ອນ" ພຣະເຢຊູກ່າວຕອບຄົນນັ້ນອີກວ່າ: "ຈົ່ງປະໃຫ້ຄົນຕາຍຝັງກັນເອງເທາະ ແຕ່ສ່ວນທ່ານຈົ່ງໄປປະກາດຣາຊອານາຈັກຂອງພຣະເຈົ້າ" (9:60) ພຣະເຢຊູກ່າວຕໍ່ຄົນທີ່ຢາກໄປຝັງສົບພໍ່ຂອງຕົນ ເອງຢ່າງນີ້ ກໍເພາະວ່າບາງເທື່ອພໍ່ຂອງເຂົາອາດຈະຍັງບໍ່ທັນຕາຍເທື່ອ ລາວພະຍາຍາມແກ່ຍາວເວລາອອກໄປ ຫລືບໍ່ກໍ ແມ່ນຢາກອອກຈາກການຕິດຕາມພຣະເຢຊູ. ຄົນຢິວລູກຊາຍກົກກໍຈຳເປັນຕ້ອງໄດ້ຝັງສົບພໍ່ເສັຽກ່ອນ. ອີກປະການນຶ່ງ

ພຣະເຢຊູອາດໝາຍຄວາມວ່າປ່ອຍໃຫ້ຜູ້ທີ່ຕາຍຝ່າຍ ຈິດວິນຍານຝັງຜູ້ທີ່ຕາຍຝ່າຍຮ່າງກາຍໃຫ້ກັນເອງ. ເຮົາບໍ່ສາມາດຄວບຄຸມເວລາ ຫລືວ່າເລືອກເວລາໄດ້ນອກຈາກ ພຣະເຢຊູພຽງຜູ້ດຽວເທົ່ານັ້ນ ພວກເຮົາຈຳເປັນຕ້ອງຕັດສິນໃຈໂລດວ່າຕິດຕາມພຣະອົງຕາມຄຳຮຽກເອີ້ນຫລືບໍ່.

ໃນຈົດໝາຍຂອງອາຈານໂປໂລ ລາວໄດ້ເນັ້ນໜັກເຖິງການຮຽກເອີ້ນຂອງພຣະເຢຊູ ຊຶ່ງເຫັນໄດ້ໃນພຣະທັມຄັມພີເອເຟໂຊ. ລາວຮຽກເອີ້ນໃຫ້ຄຣິສຕຽນລະມັດລະວັງໃນການເປັນຄຣິສຕຽນ. "ເຫດສັນນັ້ນທ່ານທັງຫລາຍຈົ່ງລະວັງໃນການດຳເນີນຊີວິດໃຫ້ດີ ຢ່າໃຫ້ເຫມືອນຄົນໄຮ້ປັນຍາແຕ່ໃຫ້ເຫມືອນຄົນມີປັນຍາ ຈົ່ງສວຍເອົາໂອກາດເພາະວ່າທຸກວັນນີ້ເປັນຄາວຊົ່ວຮ້າຍ" ເອເຟໂຊ 5:15-16 ຄຳເວົ້າວ່າຈົ່ງສວຍໂອກາດແມ່ນໝາຍເຖິງເວລາ ຢ່າຢູ່ລ້າເພາະໂອກາດມີນ້ອຍ. ຢ່າມີແຕ່ຄິດຢູ່ລ້າໆ ຄຣິສຕຽນຈຳຕ້ອງເປັນຄົນທີ່ຕຽມພ້ອມທຸກເວລາ ສ່ວນທ່ານຈົ່ງໄປປະກາດຣາຊອາຈັກຂອງພຣະເຈົ້າ.

ຕົວຢ່າງທີສາມ, ທີ່ຄົນທີສາມຕອບຄຳຂອງພຣະເຢຊູ ໃນຂໍ້ 61 ຊຶ່ງມີຄວາມໝາຍວ່າ ຂ້ານ້ອຍຈະຕາມທ່ານຢູ່ແຕ່ວ່າຂໍໃຫ້ເວລາຂ້ານ້ອຍຈັກໜ້ອຍນຶ່ງຄືຂໍໃຫ້ກັບຄືນໄປລາພີ່ນ້ອງຢູ່ໃນເຮືອນທຸກໆຄົນເສັຍກ່ອນ. ຄຳວ່າ "ຈະຕາມທ່ານຢູ່ແຕ່ວ່າ......" ຄຳນີ້ມະນຸດພວກເຮົາມັກໃຊ້ຫລາຍເພື່ອໃຫ້ພໍໃຈຕົວເອງ ເຊັ່ນວ່າຂ້ອຍຮັກເຈົ້າ ແຕ່ວ່າ......; ຂ້ອຍຈະເອົາສິ່ງນີ້ໃຫ້ເຈົ້າ ແຕ່ວ່າ..... ຕໍ່ຄຳເວົ້ານີ້ພຣະເຢຊູຊົງຕອບວ່າ "ຜູ້ໃດເອົາມືຈັບງ້ອນໄຖແລ້ວຫລຽວຫລັງຄືນ ຜູ້ນັ້ນບໍ່ສົມຄວນກັບຣາຊອານາຈັກຂອງພຣະເຈົ້າ" ພຣະເຢຊູຊົງໝາຍຄວາມວ່າ ຖ້າຫລຽວຫລັງແລ້ວຈະເຮັດໃຫ້ຮອຍໄຖບໍ່ຊື່ຊັ້ນບໍ່? ຫລືວ່າພຣະອົງຊົງໝາຍຄວາມວ່າ ຖ້າຜູ້ໃດຕັດສິນ ໃຈທີ່ຈະມີອາຊີບເປັນຊາວນາແລ້ວຍັງຢາກຫ່ວງມີອາຊີບຢ່າງອື່ນຢູ່ບໍ່? ຖ້າເປັນຢ່າງນັ້ນໃຜຈະເປັນຜູ້ຕັດສິນ ໃຈໃນການກະທຳຕ່າງໆໄດ້ ມີແຕ່ພຣະເຢຊູພຽງຜູ້ດຽວເທົ່ານັ້ນ. ພວກເຮົາບໍ່ມີສິດຫຍັງທີ່ຈະເລືອກເອົາຂອງປະທານ ນອກຈາກພຣະເຢຊູຈະເປັນຜູ້ມອບໝາຍໃຫ້ພຽງເທົ່ານັ້ນ. ຄວາມຕ້ອງການຂອງເຮົາບໍ່ມີການຮັບປະກັນຫຍັງທັງນັ້ນ ພວກເຮົາຕ້ອງເຮັດຕາມພຣະເຢຊູເທົ່ານັ້ນ.

ຄຸນແມ່ເຕເຣຊາ ໄດ້ຊີ້ແຈງເຖິງການເຊື່ອຟັງພຣະເຢຊູວ່າ ລາວດີໃຈຫລາຍທີ່ໄດ້ເປັນຄຣູແລະກໍໄດ້ເປັນຜູ້ອຳນວຍການໂຮງຮຽນ. ແຕ່ວ່າພາຍຫລັງມາ ລາວກໍໄດ້ລາຈາກຊີວິດທີ່ມີຄວາມອຸດົມສົມບູນ ແລ້ວກໍໄປຢູ່ຂ້າງຖນົນແຖບເມືອງກາກຸລຕາ ປະເທດອິນເດັຽ. ການໃຊ້ຊີວິດຢູ່ເປັນເວລາເກືອບເຄິ່ງສັຕວັດນັ້ນ ລາວໄດ້ຖືກປ່ຽນແປງດ້ວຍຄວາມຮັກຂອງອົງພຣະເຢຊູທັງນັ້ນ. ບາງຄົນກໍຖາມວ່າ ເປັນຫຍັງລາວຈຶ່ງປະລະວຽກງານ ແລ້ວມາໃຊ້ຊີວິດຢູ່ກັບຄົນທຸກຍາກດັ່ງນີ້. ລາວອະທິບາຍວ່າ "ຂ້ອຍຖືກຮຽກເອີ້ນຈາກທາງໃນໃຈ, ຂ້ອຍຮູ້ສຶກວ່າພຣະເຈົ້າຕ້ອງການສິ່ງໃດສິ່ງນຶ່ງຈາກຂ້ອຍ. ພຣະອົງຢາກໃຫ້ຂ້ອຍເປັນຄົນທຸກ ເພື່ອຂ້ອຍຈະໄດ້ເຫັນຄວາມໂສກເສົ້າຂອງຜູ້ທີ່ທຸກທີ່ສຸດໃນໂລກວ່າມັນຈະເປັນ ຢ່າງໃດ. ຄຸນແມ່ ເຕເຣຊາຕອບຢ່າງນັ້ນກໍເພາະວ່າລາວເຊື່ອຟັງແລະປະຕິບັດຕາມຄຳສັ່ງຂອງພຣະເຢຊູ.

ໂປດລະວັງ ສາວົກໃນສັຕວັດທີ 1 ແລະສັຕວັດທີ 21 ພຣະເຢຊູຮຽກເອີ້ນໃຫ້ມີການກະທຳ "ຈົ່ງຕາມເຮົາມາ, ບໍ່ວ່າເຮົາຈະນຳໄປໃສ--ບໍ່ວ່າເຮົາຈະເອີ້ນເວລາໃດ--ບໍ່ວ່າເຮົາຈະໃຫ້ທ່ານເຮັດຫຍັງ--ຈົ່ງຕາມເຮົາມາ." ນີ້ລະຄືຄວາມໝາຍຂອງຜູ້ຕິດຕາມພຣະເຢຊູ. ຕໍ່ສາມຄົນທີ່ໄດ້ຍົກຕົວຢ່າງຜ່ານມາ ພຣະເຢຊູກໍຮຽກຮ້ອງໃຫ້ ພວກເຂົາເລີ້ມປະຕິບັດ.

<u>**ຄຳຖາມ**</u>

1. ແມ່ນຫຍັງທີ່ທ່ານເຄີຍໃຊ້ຜ່ານມາ ໃນການທີ່ຈະຫັນຫລັງໃຫ້ກັບພຣະເຢຊູ

2. ຄິດທົບທວນເບິ່ງດູວ່າທ່ານເຄີຍພາດໂອກາດດີໆຈັກເທື່ອ ທີ່ພຣະເຢຊູໄດ້ໃຫ້ໂອກາດທ່ານ? (ໂອກາດໃນການປະກາດ, ໂອກາດໃນການເປັນພະຍານ....)

3. ມີຈັກຄັ້ງທີ່ທ່ານສວຍໂອກາດເອົາເວລາຂອງພຣະເຈົ້າ ມາເປັນເວລາຂອງຕົນເອງ?

4. ທ່ານເຄີຍປະລະບາງສິ່ງບາງຢ່າງ ທີ່ເປັນການຖ່ວງດຶງທ່ານບໍ່ໃຫ້ປະຕິບັດຕາມຄຳສັ່ງຂອງພຣະເຢຊູບໍ່?

5. ປັດຈຸບັນນີ້ ພຣະເຈົ້າຮຽກເອີ້ນທ່ານໃຫ້ເຮັດຫຍັງ?

6. ທ່ານຈະສຳແດງຄວາມເຊື່ອຂອງທ່ານຢ່າງໃດ ຕໍ່ການຮຽກເອີ້ນຂອງພຣະເຈົ້າ?

*ສຈ.ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 3
## ຈົ່ງປະກອບສ່ວນໃນການປ່າວປະກາດ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ລູກາ 10:1-12; 17-20

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ລູກາ 10:1-24

**ຈຸດສໍາຄັນຂອງບົດຮຽນນີ້:** ຕິດຕາມພຣະເຢຊູຫມາຍຄວາມວ່າປະກອບສ່ວນໃນການປ່າວປະກາດ

**ຄໍາຖາມເພື່ອສໍາຮວດ:** ທ່ານກໍາລັງຢູ່ໃນການປ່າວປະກາດອັນໃດ?

**ຈຸດປະສົງຂອງບົດຮຽນ:** ຈົ່ງຮັບຟັງແລະຮັບຜິດຊອບໃນການຮຽກເອີ້ນຂອງພຣະເຢຊູ ແລ້ວປະກອບສ່ວນໃນການປ່າວປະກາດ

### ຄໍານໍາ

ໂບດເຟີສບັບຕິສໄດ້ມີແຜນການອອກໄປປ່າວປະກາດໃນຕ່າງເມືອງທຸກໆປີ. ໃນປີນີ້ກໍມີຫລາຍຄົນໄດ້ມາລົງລາຍເຊັນເພື່ອຈະໄດ້ຮູ້ວ່າມີຈັກຄົນທີ່ສາມາດໄປໄດ້. ໃນນັ້ນມີຄົນນຶ່ງຊື່ວ່າມາຣີລີນຊຶ່ງເປັນຄັ້ງທໍາອິດທີ່ລາວມີໂອກາດໄດ້ອອກໄປເຊັ່ນນີ້. ຫລັງຈາກກັບມາແລ້ວລາວຈຶ່ງຂຶ້ນລາຍງານຜົນຂອງການອອກໄປ. ບໍ່ ແມ່ນຍ້ອນການປ່ຽນແປງແລະກໍບໍ່ແມ່ນຍ້ອນລາວໄດ້ຊ່ອຍເຫລືອຄົນ ແຕ່ຍ້ອນພຣະວິນຍານບໍຣິສຸດຊົງນໍາພາລາວທຸກຢ່າງຈຶ່ງເປັນໄປໄດ້ໂດຍສະດວກດີ ເພາະວ່າລາວມີຄວາມພູມໃຈໃນການປະກອບສ່ວນໃນການປ່າວ ປະກາດເຣື່ອງຂອງພຣະເຈົ້າ.

ຜົນອອກມາກໍເຫມືອນໆກັນກັບຜູ້ຕິດຕາມພຣະເຢຊູເຈັດສິບສອງຄົນທີ່ພຣະອົງໄດ້ສົ່ງພວກເຂົາອອກໄປ. ພວກນີ້ແຕກຕ່າງກັບພວກສາມຄົນທີ່ຜ່ານມາຫລາຍ (ບົດຮຽນອາທິດຜ່ານມາ ລູກາ 9:57-62) ພວກເຂົາ ບໍ່ມີຄຸນນະພາບໃນການທີ່ຈະອອກໄປ ເພາະຄໍາແກ້ຕົວຂອງພວກເຂົາເອງ. ພຣະເຈົ້າຈະບໍ່ໃຊ້ຜູ້ທີ່ບໍ່ຍອມປ່ຽນ ແປງຕົນເອງໃຫ້ອອກໄປປ່ຽນແປງຄົນອື່ນ. ຜູ້ທີ່ຈະອອກໄປຕ້ອງເປັນຜູ້ທີ່ຍອມຮັບປ່ຽນຕົນເອງໃຫ້ຜູ້ທີ່ຢູ່ອ້ອມຂ້າງເຫັນຢ່າງຈະແຈ້ງເສັຍກ່ອນແລ້ວພຣະອົງຈະຊົງເອີ້ນໃຊ້.

**ທີ່ງມາ** (ລູກາ10:1-3)

ພຣະເຢຊູໄດ້ແຕ່ງຕັ້ງ 72 ຄົນ(ພາສາລາວ) (70 ຄົນ ໃນພາສາໄທ) ໃຫ້ອອກໄປປ່າວປະກາດ, ຢ່າງໃດກໍຕາມພວກເຮົາຈະໃຊ້ 72 ຄົນ. ໃນລູກາ 10:1 ໄດ້ກ່າວເຖິງການສົ່ງຜູ້ປ່າວປະກາດອອກໄປເປັນຄູ່ໆ ເຫດຜົນທີ່ສົ່ງອອກໄປເປັນຄູ່ ໆ ຢ່າງນີ້ກໍເພາະວ່າຈະໄດ້ຫນູນໃຈຊຶ່ງກັນແລະກັນ ແລະກໍຈະໄດ້ເປັນຄູ່ປາກຄູ່ເວົ້າ, ບໍ່ໃຫ້ເຫງົາແລະບໍ່ໃຫ້ທໍ້ຖອຍເມື່ອຖືກປະຕິເສດ. (ປັນຍາຈານ 4:9-12) ສອງຄົນເຮັດໃຫ້ມີຄວາມເຊື່ອຖືຫລາຍຂຶ້ນ ສເລີຍພະບັນຍັດ 17:6.

72 ຄົນຈະໄປທົ່ວທຸກທີ່ທຸກບ່ອນທີ່ພຣະເຢຊູຈະໄປ, ໃນນີ້ບໍ່ແມ່ນເປົ້າຫມາຍອັນດຽວທີ່ວ່າໄປຈັດຕຽມເພື່ອພຣະອົງ ແຕ່ພຣະອົງຊົງຢາກໃຫ້ພວກເຂົາປະກອບສ່ວນໃນການປ່າວປະກາດເຖິງຣາຊອານາຈັກຂອງພຣະເຈົ້າ.

ຂໍ້ ທີ 2 ພວກເຮົາຈະເຫັນໃນສອງແງ່ດ້ວຍກັນ-- (1) ເຂົ້າທີ່ຈະກ່ຽວມີຫລາຍແທ້; (2) ຄົນງານມີນ້ອຍ. ພຣະອົງຊົງກ່າວວ່າ ຈົ່ງອ້ອນວອນເພື່ອໃຫ້ມີຄົນມາຊ່ວຍ. ຄໍານີ້ເປັນຄໍາທີ່ຮຽກຮ້ອງທີ່ດີຫລາຍ ແຕ່ບາງຄັ້ງຄຣິສຕະຈັກບາງບ່ອນກໍມັກຈະປະຕິເສດ. ພວກເຮົາໄດ້ອະທິຖານເພື່ອຜູ້ຫລົງຫາຍແຕ່ເຮົາໄດ້ອະທິຖານໃນການອອກໄປເກັບກ່ຽວຜົນຫລືບໍ່. ໂບດຂອງພວກເຮົາໄດ້ອະທິຖານເພື່ອໃຫ້ມີຄົນຫນຸ່ມມາທໍາງານຊ່ວຍພວກເຮົາຫລືບໍ່. ພຣະເຢຊູໄດ້ກ່າວເຖິງເຣື່ອງການຫວ່ານເມັດພືດໃນລູກາບົດທີ່ຜ່ານມາ 8:1-15, ນີ້ແມ່ນເພື່ອຈັດຕຽມ ສາວົກໃນການອອກໄປປ່າວປະກາດ. ພຣະຄໍາ

ຂອງພຣະເຈົ້າແມ່ນເມັດພືດທີ່ຈະນຳອອກປູກ ແລະໂລກນີ້ກໍເຫມືອນທົ່ງນາທີ່ສາວົກຂອງພຣະເຢຊູຄວນຈະນຳເມັດພືດໄປປູກ. ເມື່ອມາເບິ່ງໃນຂໍ້ທີ 2 ນີ້ເຫັນວ່າການປູກ ຝັງໄດ້ຜ່ານໄປແລ້ວ, ແລະຍັງເປັນລະດູເກັບກ່ຽວ "ເຂົ້າທີ່ຈະກ່ຽວກໍມີຫລາຍແທ້" ນີ້ຄືຄຳຂອງພຣະເຢຊູ.

ດ້ວຍຄວາມເປັນຫ່ວງ ເພາະວ່າການອອກໄປນີ້ແມ່ນເປັນວຽກທີ່ກັນດານຫລາຍ. ພຣະເຢຊູໄດ້ເຕືອນສາວົກທັງຫລາຍວ່າ "ພວກທ່ານເຫມືອນດັ່ງແກະນ້ອຍຢູ່ຖ້າມກາງຝູງຫມາໄນ" ຫມາໄນແລະແກະຍາມໃດກໍບໍ່ເຄີຍຖືກກັນ. ສາວົກຂອງພຣະເຢຊູຕ້ອງລະມັດລະວັງ ເພາະຄຳແນະນຳນີ້ເປັນຄຳຈິງແລະຕ້ອງຈຳໄວ້ໃນໃຈ.

<u>**ການປູກຝັງ**</u> (ລູກາ10:4-12)

ມາເບິ່ງໃຫ້ຖີ່ຖ້ວນ ເຖິງຄຳສັ່ງຂອງພຣະເຢຊູທີ່ໄດ້ສັ່ງພວກສາວົກ. ພຣະອົງຊົງສັ່ງເຂົາໃຫ້ເດີນທາງດ້ວຍຂອງເບົາໆ. ພວກເຂົາບໍ່ຄວນຖືກະເປົາ ຖົງ ແລະເກີບໄປດ້ວຍ, ເພາະສິ່ງທັງຫມົດນີ້ແມ່ນເພື່ອອຳນວຍຄວາມສະດວກໃຫ້ແກ່ພວກເຂົາ. ບໍ່ແມ່ນພຣະເຢຊູບໍ່ຕ້ອງການໃຫ້ພວກເຂົາໄດ້ຮັບຄວາມສະດວກ ແຕ່ພຣະອົງຢ້ານພວກເຂົາຈະກະວົນກະວາຍກັບສິ່ງເຫລົ່ານັ້ນຫລາຍກວ່າວຽກການປ່າວປະກາດຂອງພຣະເຈົ້າ.

ພຣະອົງຍັງຊົງບອກວ່າ "ຢ່າຄຳນັບຜູ້ໃດຕາມທາງ" ກໍຫມາຍຄວາມວ່າຢ່າໃຊ້ເວລາກັບສັງຄົມແລະຮັບໃຊ້ຜູ້ໃດໃນເວລາເດີນຕາມທາງ. ຈົ່ງໃຊ້ເວລາປ່າວປະກາດໃຫ້ເຕັມສ່ວນ. (ຄຣູຕ້ອງອະທິບາຍໃຫ້ຈະແຈ້ງ)

ພຣະເຢຊູໄດ້ສອນເຖິງການປະພຶດໃນເວລາເຂົ້າໄປໃນເມືອງ. (10:5-7) "ສັນຕິສຸກ" ແມ່ນສິ່ງທີ່ຄົນຢິວທັງຫລາຍປາຖນາ. ຜູ້ປ່າວປະກາດແມ່ນຜູ້ທີ່ນຳສັນຕິສຸກມາສູ່ແຂກ. ແຂກບາງຄົນກໍຍອມຮັບເອົາສັນຕິສຸກ ແຕ່ແຂກບາງຄົນຊ້ຳພັດປະຕິເສດ. ພຣະເຢຊູເຕືອນວ່າ ຖ້າຜູ້ໃດຮັບກໍມອບໃຫ້ເຂົາ ແຕ່ຖ້າຜູ້ໃດບໍ່ຍອມຮັບກໍຈົ່ງເອົາຄືນມາ. ເຊັ່ນດຽວກັນພຣະອົງໄດ້ຊົງສັ່ງພວກສາວົກ 12 ຄົນອອກໄປ ໃນລູກາ 9:1-4. ຖ້າຜູ້ໃດຕ້ອນຮັບທ່ານ ກໍໃຫ້ຢູ່ນຳເຂົາກິນອາຫານທີ່ພວກເຂົາກິນນັ້ນ. ບໍ່ໃຫ້ປະຕິເສດຫລືເຮັດໃຫ້ພວກເຂົາລະອາຍໃນການເປັນຢູ່ນັ້ນ. ອາຈານໂປໂລກໍຍັງໄດ້ຕັກເຕືອນເຣື່ອງການກິນອີກເຊັ່ນ: 1ໂກຣິນໂທ 9:7-11; ແລະ 10:27

ເວລາທ່ານຢູ່ໃນບ້ານຫລັງໃດ, ຖ້າມີຜູ້ໃດເຈັບເປັນໃນບ້ານນັ້ນກໍຂໍໃຫ້ທ່ານປິ່ນປົວເຂົາ ແລະບອກເຖິງເຣື່ອງຣາຊອານາຈັກຂອງພຣະເຈົ້າກຳລັງມາໃກ້ແລ້ວດ້ວຍ. ເພາະນັ້ນລະຄືໂອກາດຂອງທ່ານທີ່ຈະຕ້ອງປະກາດ.

ຕໍ່ຜູ້ທີ່ປະຕິເສດພຣະເຢຊູກໍຍັງຊົງໄດ້ສິດສອນພວກເຂົາວ່າຈະເຮັດຢ່າງໃດ. (10:10-11) ພຣະອົງຊົງບອກວ່າໃຫ້ອອກໄປກາງຖນົນຂອງເມືອງ ແລ້ວສັ່ນຂີ້ຝຸ່ນທີ່ຕິດຕີນນັ້ນອອກ. ເຖິງແມ່ນວ່າຈະປັດຂີ້ຝຸ່ນອອກປານໃດກໍຕາມແຕ່ພຣະອົງກໍບໍ່ໃຫ້ລືມຄຳລົງທ້າຍໃຫ້ບອກເຂົາວ່າ ຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ເຈົ້າທັງຫລາຍແລ້ວ.

ຂໍ້ສຳຄັນກໍຄືວ່າ ພຣະເຢຊູໄດ້ຍົກເຖິງເລື້ອງເມືອງໂຊໂດມມາໃຫ້ເຫັນວ່າ ໂທດທີ່ເຄີຍຜ່ານມານັ້ນມັນໂທດຮ້າຍປານໃດແຕ່ໂທດໃນການທີ່ບໍ່ຕ້ອນຮັບຜູ້ປະກາດພຣະທັມຂອງພຣະເຈົ້ານີ້ ຈຶ່ງຫນັກຫນ່ວງກວ່ານັ້ນອີກຫລາຍເທົ່າ. ປະຖົມມະການ 18:16-33; 19:23-24.

ການສລູບໃນຂໍ້ນີ້ ທ່ານຈະປູກເມັດພືດຢ່າງໃດ? ພຣະເຢຊູໄດ້ໃຫ້ຄຳແນະນຳພິເສດຢ່າງນີ້ ວຽກງານອັນໃດເປັນຕົ້ນຕໍ ແລະຂໍໃຫ້ອີງພຣະເຈົ້າເປັນຫລັກ ແລະໃຫ້ຫວ່ານພຣະຄຳຂອງພຣະເຈົ້າ ບໍ່ແມ່ນເພື່ອຄວາມສະດວກສະບາຍຂອງຕົວເອງເທົ່ານັ້ນ. ໃນນີ້ກໍຍັງຫນູນໃຈ ໃຫ້ພວກເຮົາເຫັນຄວາມສຳຄັນຂອງການປ່າວປະກາດເຣື່ອງຣາຊອານາຈັກຂອງ

ພຣະເຈົ້າ. ມີໃຜແດ່ທີ່ເຫັນຄວາມສຳຄັນຂອງການປ່າວປະກາດ? ມີໃຜແດ່ທີ່ ເຫັນຄວາມສຳຄັນຂອງຜູ້ປ່າວປະກາດ. ພວກເຮົາມັກເອົາວຽກງານຂອງພຣະເຈົ້າເປັນຂອງສຳລອງ, ພວກເຮົາຄວນສຶກສາເຖິງການປ່າວປະກາດໃນສັດວັດທຳອິດແລ້ວຖອດຖອນບົດຮຽນ.

## <u>ການເກັບກ່ຽວ</u> (ລູກາ10:17-20)

ພວກເຮົາມາເວົ້າເຖິງເລື່ອງການກັບມາຂອງພວກເຈັດສິບສອງຄົນ. ພວກເຂົາກັບຄືນມາດ້ວຍຄວາມຄຶກຄະນອງດີໃຈໃນຜົນສຳເລັດ. ພວກເຂົາໄດ້ສຳແດງຣິດອຳນາດເໜືອມານຊາຕານ ເໝືອນກັບພຣະເຢຊູເຮັດບໍ່ມີຜິດ. ຣາຊອານາຈັກຂອງພຣະເຈົ້າຊົງໄດ້ຊັຍຊະນະເໜືອຊາຕານແລ້ວ. (10:18 )ພຣະເຢຊູທັງສັ່ງແລະທັງກ່າວຕັກເຕືອນວ່າເຖິງແມ່ນວ່າພວກທ່ານຈະໄດ້ຊະນະບັນດາຊາຕານ ຫລືຊະນະ ພວກງູຫລືແມງງອດກໍຕາມ ມັນເປັນການຊົ່ວຄາວເທົ່ານັ້ນ ເພາະພວກທ່ານເດີນໄປມາຕາມບ້ານນ້ອຍບ້ານໃຫຍ່ ແຖບນີ້ເທົ່ານັ້ນ. ພວກຜີທັງຫລາຍທີ່ຍອມຟັງຄວາມຂອງພວກທ່ານກໍແມ່ນອຳນາດທີ່ມາຈາກເຮົາ. ເວລາສາວົກອອກໄປໃນນາມຂອງພຣະເຢຊູ ພວກເຂົາຈະຊະນະທຸກສິ່ງທຸກຢ່າງພວກເຂົາຈະມີອຳນາດເໜືອ ທຸກຢ່າງ. (10:19)

ຂໍ້10:20 ພຣະເຢຊູຊົງເຕືອນພວກເຂົາອີກ ເພາະຢ້ານວ່າພວກເຂົາຈະອວດຕົວ ຈະລືມຕົວໃນຣິດອຳນາດນັ້ນ. ແຕ່ພວກທ່ານຢ່າໄດ້ຍິນດີຢູ່ໃນສິ່ງນີ້ ຄືວ່າພວກຜີຍອມຟັງຄວາມຂອງທ່ານ. ພຣະອົງບໍ່ຢາກໃຫ້ພວກເຂົາໃຊ້ ຣິດອຳນາດນີ້ໄປໃນທາງທີ່ຜິດ. ສິ່ງທີ່ພວກເຂົາຄວນຈະຍິນດີນັ້ນກໍຄື ຊື່ຂອງພວກເຂົາໄດ້ຈົດໄວ້ຢູ່ໃນແຜ່ນ ດິນສວັນແລ້ວ. ຄວາມເຊື່ອໃນການປ່າວປະກາດນີ້ເຮັດໃຫ້ພວກເຮົາເຫັນສິ່ງທີ່ຄົນອື່ນບໍ່ສາມາດເຫັນໄດ້, ມັນຝັງຢູ່ໃນຈິດໃຈ ຂອງພວກເຮົາ. ໃນພຣະນິມິດ 11:15 ທູດສວັນຂອງພຣະເຈົ້າກ່າວວ່າ: "ເມື່ອເທວະດາຕົນທີເຈັດໄດ້ເປົ່າແກຂຶ້ນແລ້ວມີຫລາຍສຽງໃນສວັນກ່າວວ່າ ຣາຊອານາຈັກແຫ່ງພິພົບນີ້ໄດ້ກາຍເປັນກັມສິດແຫ່ງອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ແລະເປັນຂອງພຣະຄຣິດຂອງພຣະອົງ ພຣະອົງຈະຊົງສເວີຍຣາດຕລອດໄປເປັນນິດ" ນີ້ຄືຄຳສັນຍາທີ່ເຮັດໃຫ້ພວກເຮົາແນ່ໃຈຫລາຍທີ່ສຸດທີ່ວ່າພຣະຄຣິດຊົງຊັຍຊະນະທຸກຢ່າງ.

**<u>ສະລຸບ:</u>**

ພຣະເຢຊູສອນຫຍັງໃຫ້ເຮົາແດ່?

(1) ທົ່ງນາເຫລືອງຫມົດແລ້ວ ແລະພ້ອມແລ້ວທີ່ຈະເກັບກ່ຽວ

(2)ຈົ່ງບອກຄົນທັງຫລາຍວ່າຣາຊອານາຈັກຂອງພຣະເຈົ້າໄດ້ໃກ້ເຂົ້າມາແລ້ວ

(3)ຢ່າສົນລະວົນໃນການເດີນທາງຈົ່ງຕັ້ງໃຈໃນການປ່າວປະກາດ

(4)ຢ່າອະລຸ້ມອະລ່ວຍໃນການປ່າວປະກາດ ໃຫ້ຖືເປັນສິ່ງສຳຄັນແທ້ງ

(5)ພວກເຮົາຕ້ອງເອົາຊະນະຊາຕານໃຫ້ໄດ້ໂດຍນາມຂອງພຣະເຢຊູເທົ່ານັ້ນ

(6)ຕ້ອງແນ່ໃຈວ່າຊື່ຂອງເຮົາຖືກຈົດໄວ້ໃນແຜ່ນດິນສວັນແລ້ວ

**<u>ຄຳຖາມ:</u>**

1. ການປ່າວປະກາດເປັນສິ່ງແລກທີ່ທ່ານຄວນເຮັດຫລືບໍ່?

2. ແມ່ນຫຍັງຄືສິ່ງທີ່ກີດກັນຄຣິສຕຽນໃນການແບ່ງປັນຄວາມເຊື່ອຂອງເຂົາເຈົ້າ?

3. ກ່ອນອື່ນຫມົດ, ທ່ານຈະເຮັດສິ່ງໃດໃນສ່ວນຕົວ ເມື່ອທ່ານຈະແບ່ງປັນຄວາມເຊື່ອຂອງທ່ານໃຫ້ແກ່ຜູ້ອື່ນ?

4. ກ່ຽວກັບເລື່ອງປ່າວປະກາດ ໂບດຂອງທ່ານໄດ້ເຮັດຫຍັງແດ່?

*ສຈ.ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 4
## ຈົ່ງສຳແດງພຣະຄຸນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 10:25-37

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 10: 25-37

**ຈຸດສຳຄັນຂອງບົດຮຽນນີ້:** ການຕິດຕາມພຣະເຢຊູ ໝາຍຄວາມວ່າ ຕ້ອງຊ່ວຍເຫລືອຜູ້ອື່ນ ໂດຍບໍ່ຄຳນຶ່ງເຖິງວ່າເຂົາຈະເປັນໃຜ ແລະກໍບໍ່ຄຳນຶງເຖິງວ່າຈະຢູ່ໃນໂອກາດໃດ.

**ຄຳຖາມເພື່ອສຳຣວດ:** ມີໃຜແດ່ທີ່ຕ້ອງການ ການຊ່ວຍເຫລືອຈາກທ່ານ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະເຮັດໃຫ້ຮູ້ຢ່າງແທ້ຈິງວ່າ ຂ້າພະເຈົ້າຈະຂໍຢູ່ຢ່າງຜູ້ຕິດຕາມພຣະເຢຊູ ແລະຈະຊ່ວຍເຫລືອຕາມທີ່ພຣະເຢຊູຄຣິດໄດ້ຊົງສິດສອນໄວ້ນັ້ນ.

### ຄຳນຳ

ຂ້າພະເຈົ້າຍົກມືຖືຂື້ນແລ້ວເຫັນນ້ຳເບີທີ່ ບອກວ່າ ຢູມິສ ຊຶ່ງໝາຍຄວາມວ່າ ຂ້າພະເຈົ້າບໍ່ໄດ້ຮັບໂທຣະສັບ. ເມື່ອເວລາວ່າງແລ້ວ ຂ້າພະເຈົ້າຈຶ່ງເປີດຟັງຖ້ອຍຄຳທີ່ບັນທຶກໄວ້. "ອາຈານຂ້ານ້ອຍຫລົງ ແລະ ກໍໄດ້ພົບແລ້ວ" ເມື່ອຟັງແລ້ວຂ້າພະເຈົ້າກໍຈຳໄດ້ວ່າເປັນສຽງຂອງແມ່ຕູ້ ບຸນຍັງ. ແມ່ຕູ້ບຸນຍັງເປັນຄົນ ທີ່ມີໂຣກປະ ສາດຕິດຕົວມາຈາກປະເທດລາວ. ບາງຄັ້ງກໍດີວ່າດີ ແບບເບິ່ງບໍ່ອອກວ່າລາວເປັນໂຣກປະສາດ ແຕ່ບາງຄັ້ງກໍເວົ້າບໍ່ເຂົ້າໃຈກັນເລີຍ. ລາວເລົ່າສູ່ຟັງວ່າລາວໄດ້ໄປພົບທ່ານໝໍປະຈຳຕົວຂອງລາວ, ຂາກັບລາວໄດ້ຫລົງທາງໄປທາງໃດກໍບໍ່ຮູ້ເມື່ອຂັບຣົດກັບໄປກັບມາຢ່າງນັ້ນ ຈຶ່ງເຮັດໃຫ້ຄົນຂັບຣົດຂົນສົ່ງຂນາດໃຫຍ່ຄົນນຶ່ງສົງສັຍ. ລາວຈຶ່ງຈອດຣົດແລ້ວລົງມາຖາມລາວເຖິງຈຸດທາງເດີນຂອງລາວ. ເມື່ອຊາຍຄົນນັ້ນເຫັນທີ່ຢູ່ແລ້ວລາວຈຶ່ງນຳ ແມ່ຕູ້ບຸນຍັງໄປສົ່ງຈົນເຖິງບ້ານ. ນີ້ລະຄືເຫດຜົນທີ່ລາວໂທບອກອາຈານຂອງລາວວ່າຂ້ານ້ອຍຫລົງແລະໄດ້ພົບແລ້ວ.

ເມື່ອຄິດເຖິງຊາຍຄົນນີ້ ເຮົາອາດເວົ້າໄດ້ວ່າລາວເປັນເໝືອນຄົນຊາວຊະມາເຣັຽຜູ້ໃຈດີຄົນນຶ່ງທີ່ພຣະເຢຊູໄດ້ຍົກຂຶ້ນມາເປັນຕົວຢ່າງໃຫ້ພວກເຮົາເຫັນ. ຊຶ່ງພຣະອົງຊົງຂຍາຍເຣື່ອງອອກໄປໃຫ້ທັມບັນດິດຄົນນຶ່ງຟັງ. ລູກາ 10:25.

**ຄຳຖາມຂອງທັມບັນດິດ** (ລູກາ 10:25-28)

" ບັນດິດ" ແປວ່າ ຜູ້ທີ່ຮູ້ຈັກຫລາຍ ຜູ້ທີ່ຮຽນສູງ ຜູ້ທີ່ຊຳນິຊຳນານ. (ພາສາລາວ: ທັມບັນດິດ) (ພາສາໄທ: ບາຣຽນ ) (ພາສາອັງກິດ Law Expert ) ໃນນີ້ ຂ້າພະເຈົ້າຂໍເວົ້າວ່າຜູ້ທີ່ມີຄວາມສລາດແລະມີຄວາມຮູ້ໃນທາງທັມ. ຄົນໆນີ້ອາດຈະເປັນຜູ້ທີ່ຖືກແຕ່ງຕັ້ງໃຫ້ມາເປັນຜູ້ທົດລອງພຣະເຢຊູ. ເພາະວ່າເມື່ອພຣະເຢຊູກຳລັງເວົ້າຢູ່ ລາວກໍລຸກຢືນຂຶ້ນແລ້ວຖາມພຣະເຢຊູວ່າ "ອາຈານເອີຍ ຂ້ານ້ອຍຈະຕ້ອງເຮັດແນວໃດ ຈຶ່ງຈະໄດ້ຊີວິດ ອັນຕລອດໄປເປັນນິດ?" ພຣະອົງຊົງຕອບໂດຍອີງໃສ່ພຣະຄັມພີເດີມ (ຂໍ້ 26) ເພາະວ່າພວກ ຍິວໃນ ສັຕວັດທຳອິດຈະເຊື່ອພຣະເຈົ້າຕາມນັ້ນ. "ໂອ ຄົນອິສຣາເອນເອີຍ ຈົ່ງຟັງເຖີດ ພຣະເຢໂຮວາພຣະເຈົ້າຂອງ ເຮົາທັງຫລາຍ ເປັນພຣະເຈົ້າອົງດຽວ" ພຣະເຢຊູຊົງຊາບເຖິງຈິດໃຈຂອງຜູ້ທີ່ມີຄວາມສລາດຄົນນີ້ດີ ແລະຈະ ເປັນຄົນມາຈັບຜິດພຣະອົງ. ເມື່ອເຫັນວ່າພຣະເຢຊູຊົງຕອບກົງກັບພຣະທັມຄຳສອນ, ແລະເຫັນພ້ອມຕາມຄຳ ເວົ້າທີ່ຄົນໆນີ້ຄິດໄວ້ ຊຶ່ງເປັນຂໍກະແຈທັງໝົດທີ່ຈະນຳໄປສູ່ຣາຊອານາຈັກຂອງພຣະເຈົ້າ. ພຣະເຢຊູຍ້ອນອີກວ່າ " ທັງໝົດນີ້ທ່ານຕອບຖືກແລ້ວ ຕໍ່ໄປຈົ່ງເຮັດຢ່າງນັ້ນແລ້ວທ່ານຈະໄດ້ຊີວິດ." ລູກາ 10:28

ເປັນຫຍັງພຣະເຢຊູຈຶ່ງກ່າວດັ່ງນີ້ກັບລາວ? ຄົງຈະໝາຍຄວາມວ່າຊາຍຄົນນີ້ເປັນຄົນທີ່ຮູ້ຫລາຍ, ເປັນຄົນທີ່ສລາດ, ເປັນຄົນທີ່ຮູ້ຈັກພຣະຄໍາຂອງພຣະເຈົ້າດີກວ່າຫລາຍໆຄົນ ແຕ່ສິ່ງທີ່ລາວຂາດນັ້ນກໍແມ່ນການປະຕິບັດຂາດການດໍາເນີນ ຊີວິດທີ່ສົມກັບຄົນທີ່ຮູ້ຈັກກັບພຣະເຈົ້າ.

ຂໍ້ 29 ຄົນສລາດຄົນນີ້ຢາກສະແດງຕົນວ່າເປັນຄົນຊອບທັມ ຈຶ່ງຖາມພຣະເຢຊູຄືນວ່າ "ໃຜເປັນເພື່ອນບ້ານຂອງຂ້ານ້ອຍ?" ເວລາເຫັນຄໍາຖາມນີ້ຂ້າພະເຈົ້າເຫັນຮູບພາບທີ່ສະແດງອອກຂອງຄົນນັ້ນ. ຄົງຈະເປັນຄໍາເຍາະເຍີ້ຍ, ແລະຄໍາວ່າຂ້ານ້ອຍກໍອາດເປັນຄໍາທີ່ຖາກຖາງ, ທະເລີ່ຍ ເຮັດທໍາທ່າ, ແຕ່ພຣະເຢຊູກໍຊົງມີຄວາມອົດທົນ ຈຶ່ງໄດ້ຍົກອຸທາຫອນສອນໃຈອອກມາ.

**<u>ເຣື່ອງທີ່ພຣະເຢຊູຊົງເລົ່າ</u>** (ລູກາ10:30-35)
ເປີດຫົວເຣື່ອງດ້ວຍຊາຍຄົນນຶ່ງຊຶ່ງຕ້ອງການໆຊ່ວຍເຫລືອທີ່ສຸດ. ຊາຍຄົນນີ້ເດີນທາງອອກຈາກກຸງເຢຣູຊາເລັມຈະໄປເມືອງເຢຣີໂກ. ໃນການເດີນທາງລາວໄດ້ຖືກຄົນປຸ້ນລັດທາງ, ພວກເຂົາປຸ້ນ, ຕີແລະປ່ອຍໄວ້ ຫວັງຈະໃຫ້ຕາຍຢູ່ທີ່ນັ້ນ. ພຣະເຢຊູບໍ່ໄດ້ກ່າວລະອຽດເຖີງຊາຍຄົນນັ້ນວ່າເປັນຄົນເຊື້ອຊາດໃດ. ພຣະອົງບໍ່ໄດ້ບອກວ່າລາວມີຄອບຄົວແລ້ວຫລືບໍ່, ພຣະອົງກໍບໍ່ໄດ້ບອກວ່າລາວມີອາຊີບຫຍັງ ພຽງແຕ່ບອກວ່າຊາຍຄົນນຶ່ງ. (10:30) ພຣະອົງຄົງຈະຢາກໃຊ້ຊາຍຄົນນີ້ເປັນຕົວຢ່າງຊຶ່ງ ແລະກໍເປັນຜູ້ຕາງໜ້າຂອງຜູ້ທີ່ຖືກເຈັບປວດ, ຕ້ອງການໆຊ່ວຍເຫລືອ ຊຶ່ງມີເຕັມທົ່ວໄປໃນທຸກວັນນີ້.ໜ້າປລາດໃຈ, ສອງຄົນໄດ້ຜ່ານກາຍໄປໂດຍບໍ່ໄດ້ເອົາຈິດໃສ່ໃຈນໍາ ຕໍ່ຄົນທີ່ມີຄວາມຕ້ອງການເຊັ່ນນັ້ນ.

ຄົນທໍາອິດທີ່ຜ່ານກາຍໄປແມ່ນປະໂຣຫິດ. ປະໂຣຫິດເປັນບຸກຄົນທີ່ມີຄວາມສໍາຄັນຫລາຍໃນສມັຍນັ້ນ ບໍ່ວ່າຈະເປັນທາງ ສັງຄົມຫລືທາງສາສນາ ເພາະເຂົາຈະເປັນຜູ້ຕາງໜ້າພຣະເຈົ້າ. ໃນຖານະທີ່ເຂົາເປັນຜູ້ຕາງ ໜ້າຂອງພຣະເຈົ້າເຂົາຄວນຈະຊ່ວຍເຫລືອຄົນທີ່ມີຄວາມຕ້ອງການເຊັ່ນນີ້ ແຕ່ເຂົາຊໍ້າພັດເວັ້ນກາຍໄປໂດຍບໍ່ມີຄວາມສົນໃຈເລີຍ. ບາງທີປະໂຣຫິດຄົນນີ້ຢ້ານຈະເປັນການຫ້າງແຮ້ວຂອງພວກໂຈນພວກຈະປຸ້ນ. ບາງທີລາວຢ້ານບໍ່ທັນເວລາທີ່ຈະໄປນໍາພາພິທີທາງສາສນາທີ່ໂບດອື່ນອີກ ລາວຈຶ່ງບໍ່ຢາກແຕະຕ້ອງເພາະຢ້ານມີມົນທິນ. (ສເລີຍພະບັນຍັດ 21:1-9)

ຖ້າຈະເວົ້າແລ້ວປະໂລຫິດຄົນນີ້ມີໂອກາດທີ່ສໍາແດງຄວາມຮັກຂອງພຣະເຈົ້າໃຫ້ແກ່ຄົນເຈັບຜູ້ນີ້, ແຕ່ລາວສະລະໂອກາດ ທີ່ດີຂອງລາວໃຫ້ຜ່ານໄປໂດຍບໍ່ເຮັດຢ່າງໃດເລີຍ.

ຄົນທີສອງກໍຜ່ານໄປອີກເໝືອນກັນ ຄົນນີ້ເປັນເລວີ. ຄົນເລວີແມ່ນຄົນທີ່ສອນສາສນາ, ມີໜ້າທີ່ຮັບໃຊ້ໃນໂບດຄົນນີ້ກໍເຮັດເໝືອນກັນກັບຄົນທໍາອິດ ຄືເວັ້ນໄປຟາກທາງອື່ນ. ຢ່າງໃດກໍຕາມ ຄົນເລວີກໍແຕກຕ່າງກັບປະໂຣຫິດຢູ່ແລ້ວ ຄົນເລວີກໍສໍາຄັນຫລາຍໃນວຽກງານສາສນາຂອງຊາວຢິວ. ເຮົາຫວັງວ່າຄົນສອນພຣະຄັມພີຈະສະແດງຄວາມເມດຕາແຕ່ເຂົາກໍຜ່ານໄປອີກໂດຍບໍ່ມີການຊ່ວຍເຫລືອໃດໆທັງສິ້ນ. ພຣະເຢຊູໄດ້ອະທິບາຍເຖີງການກະທໍາຂອງທັມບັນດິດແລະກໍໄດ້ອະທິບາຍເຖີງການກະທໍາຂອງຄົນເລວີ ຊຶ່ງມັນຂັດກັບການສິດສອນຢ່າງຂາດຂັ້ນ ຫລືວ່າມັນກົງກັນຂ້າມແບບໜ້າມືເປັນຫລັງມື.

ພຣະເຢຊູຊົງຢຸດເຊົາຫາຍໃຈ ແລ້ວກໍເວົ້າຕໍ່ໄປເຖີງຄົນທີສາມ. ຄົນນີ້ກາຍມາເປັນພະເອກເພາະການກະທໍາຂອງເຂົາແຕກຕ່າງກັນກັບສອງຄົນທີ່ຜ່ານໄປ. ພຣະອົງກ່າວເຖີງລັກສະນະຂອງລາວ, ຄົນນີ້ກໍຍັງເປັນຄົນທີ່ພວກຢິວທັງຫລາຍບໍ່ມັກບໍ່ຊອບ. ລາວເດີນທາງຈາກເຢຣີໂກຈະໄປເຢຣູຊາເລັມ ແລະກໍແມ່ນຜູ້ດຽວທີ່ຍອມຢຸດເບິ່ງ ແລະຊ່ວຍເຫລືອຄົນທີ່ເຈັບນັ້ນ. (10:33) ຄົນຊະມາເຣັຽໃນສັຕວັດນັ້ນ ຄົນຢິວແທ້ທັງຫລາຍຖືວ່າເປັນຄົນຊັ້ນຕໍ່າເພາະເປັນຄົນປະສົມ. ບໍ່

ວ່າດ້ານສັງຄົມ ດ້ານສາສນາ ດ້ານປະເພນີຕ່າງໆ ພວກຢິວຈຶ່ງຈຳແນກພວກເຂົາ. ຕາມປວັດສາດແລ້ວພວກເຂົາຈະເປັນ ພຣະເອກບໍ່ໄດ້ຢ່າງເດັດຂາດ.

ແຕ່ໃນເຣື່ອງທີ່ພຣະເຢຊູເລົ່າມານີ້ ຄົນຊະມາເຣັຽຄົນນີ້ກາຍມາເປັນພຣະເອກ. ເປັນຫຍັງຈຶ່ງວ່າແນວນັ້ນ? ເພາະວ່າຄົນຊະມາເຣັຽຢຸດເບິ່ງ, ເຫັນຄວາມຕ້ອງການ, ແລ້ວກໍຊ່ອຍເຫລືອເຂົາ. ຄົນຊະມາເຣັຽເທົ່ານັ້ນທີ່ມີຄວາມຮູ້ສຶກໃນການຮັບຜິດຊອບຕໍ່ຄວາມຕ້ອງການຂອງຄົນເຈັບ. ລາວເອົາຜ້າພັນບາດໃຫ້, ເອົານ້ຳມັນກັບເຫລົ້າ ແວງຖອກໃສ່ບາດໃຫ້, ໂຈມຂຶ້ນຂີ່ສັດຂອງຕົນເອງ, ພາໄປໂຮງແຮມ, ເອົາໃຈໃສ່ບົວລະບັດ, ໄດ້ຈ່າຍເງິນຄ່າ ໂຮງແຮມ, ມອບຫມາຍໃຫ້ຄົນອື່ນຢ່າງລຽບລ້ອຍ, ຖ້າຍັງມີອັນໃດຂາດເຂີນຂ້ອຍຈະຂໍໃຊ້ໃຫ້ຫມົດໃນເວລາກັບມາ.

**<u>ພຣະເຢຊູຊົງທ້າທາຍ</u>** (ລູກາ 10:36-37)
ຫລັງຈາກທີ່ພຣະອົງໄດ້ເລົ່າເຣື່ອງຈົບລົງແລ້ວ, ພຣະອົງກໍໄດ້ອວ່າຍໜ້າມາຫາຄົນທີ່ມີຄວາມສລາດນັ້ນ ແລະກ່າວຖາມວ່າ (10:36) ໃນສາມຄົນນີ້ທ່ານເຫັນວ່າຄົນໃດເປັນເພື່ອນບ້ານຂອງຄົນທີ່ຕົກໃນມືພວກປຸ້ນນັ້ນ. ທັນບັນດິດກໍຮູ້ຄຳຕອບທັນທີໂລດວ່າ ຄົນທີ່ສະແດງຄວາມເມດຕານັ້ນລະທີ່ເປັນເພື່ອນບ້ານ, ພຣະເຢຊູຊົງບອກວ່າຈົ່ງໄປເຮັດ ດັ່ງນັ້ນເຫມືອນກັນ.

ພຣະເຢຊູຊົງອະທິບາຍຄວາມສັມພັນຂອງບັນຍັດ ບໍ່ແມ່ນຈະເປັນຂໍ້ບັງຄັບທີ່ຈະໃຫ້ປະຕິບັດຢ່າງດຽວ ແຕ່ຕ້ອງແຕ່ຕ້ອງຮູ້ຈັກໃຊ້ໂດຍອີງໃສ່ຄວາມຮັກຂອງພຣະເຈົ້າ. (10:37) ເມື່ອເຈົ້າຮູ້ຈັກແລ້ວ "ເຈົ້າຈົ່ງໄປເຮັດ"

**<u>ສະລຸບ:</u>**
ເຣື່ອງນີ້ສອນໃຫ້ເຮົາທັງຫລາຍຮູ້ເຖິງຄວາມສຳຄັນຂອງຄວາມຮັກ. ຄວາມຮັກແມ່ນການລົງມືປະຕິບັດແມ່ນການກະທຳບໍ່ແມ່ນຮັກແຕ່ປາກ.
ຄວາມແຕກຕ່າງຂອງສາມຄົນທີ່ພຣະເຢຊູຍົກຕົວຢ່າງມານີ້ ບໍ່ແມ່ນຢູ່ໃນໜ້າທີ່ ແຕ່ແມ່ນຢູ່ໃນການກະທການຮັບຜິດຊອບຕ່າງຫາກ.ຄວາມຮັກຕ້ອງໄດ້ລົງທຶນ ຕ້ອງເສັຽສະລະແລະຕ້ອງລົງມືທຳ

**<u>ຄຳຖາມ</u>**
1. ທ່ານມີສິ່ງໃດ(ຂໍ້ຫລີກລ້ຽງອັນໃດ) ທີ່ກີດກັນທ່ານໃນການຊ່ວຍເຫລືອຜູ້ອື່ນ?

2. ທ່ານເຄີຍໃຊ້ເວລາຄິດຈັກໜ້ອຍແດ່ບໍ່ ເມື່ອຄຣິສຕະຈັກຂອງທ່ານຫາກເຊີນຊວນທ່ານໃຫ້ມີສ່ວນຮ່ວມໃນການຊ່ວຍເຫລືອຜູ້ທີ່ມີຄວາມຈຳເປັນ? (ກາຕຣີນາ, ຣີຕ້າ, ແອນນີ ອາມສຕຣອງ, ......)

3. ທ່ານຈະອະທິບາຍ ຄຳວ່າ "ເພື່ອນບ້ານ"ຢ່າງໃດ? (ແມ່ນຜູ້ໃດ?)

4. ທ່ານພໍຈະບອກຊື່ໄດ້ແດ່ບໍ່ວ່າແມ່ນໃຜເປັນພຣະເອກຢູ່ໃນຄຣິສຕະຈັກຂອງທ່ານ ກ່ຽວກັບເຣື່ອງນີ້? (ຊະມາເຣັຽຜູ້ໃຈດີ)

5. ລອງຄິດເບິ່ງດູດຽວນີ້, ມີໃຜບໍ່ທີ່ຕ້ອງການຫລືວ່າຈຳເປັນທີ່ສຸດໃນປັດຈຸບັນນີ້?

## ບົດຮຽນທີ 5
## ອ້ອນວອນເໝືອນກັບພຣະອົງຊົງສັ່ງສອນ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ລູກາ 11:1-13

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 11:1-13

**ຈຸດສຳຄັນຂອງບົດຮຽນນີ້:** ເດີນຕາມພຣະເຢຊູຫມາຍຄວາມວ່າ ໃຫ້ອ້ອນວອນຕາມທີ່ພຣະອົງສັ່ງສອນ.

**ຄຳຖາມເພື່ອການສຳຫລວດ:** ການອ້ອນວອນຂອງທ່ານກັບການອ້ອນວອນທີ່ພຣະເຢຊູຊົງສອນໃຫ້ສາວົກຂອງພຣະອົງນັ້ນເມື່ອສົມທຽບກັນແລ້ວເປັນຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ຕຶກຕອງແລະສົມທຽບການອ້ອນວອນຂອງຂ້າພະເຈົ້າ ແລະການອ້ອນວອນທີ່ພຣະເຢຊູຊົງສອນໃຫ້ສາວົກຂອງພຣະອົງ.

### ບົດຮຽນ

### ຄຳນຳ

ພຣະເຢຊູຊົງໃຫ້ຄຳແນະນຳແລະຂໍ້ມູນຕ່າງໆກ່ຽວກັບເຣື່ອງການອ້ອນວອນແກ່ສາວົກຂອງພຣະອົງ.

### ແບບຢ່າງຂອງການອ້ອນວອນ (ລູກາ11:1-4)

ທ່ານລູກາໄດ້ໃຫ້ເຫັນພາບການອ້ອນວອນຂອງພຣະເຢຊູ (ໃຫ້ອ່ານ ລູກາ 3:21; 6:12; 9:28). ເມື່ອພວກສາວົກຂອງພຣະເຢຊູເຫັນພຣະອົງອ້ອນວອນ ພວກເຂົາຈຶ່ງມີຄວາມປາຖນາຢາກໃຫ້ພຣະອົງສອນພວກເຂົາອ້ອນວອນ ເໝືອນກັນກັບພຣະອົງ. ເມື່ອພຣະອົງອ້ອນວອນສິ້ນສຸດລົງ ສາວົກຂອງພຣະອົງກໍຮ້ອງຂໍໃຫ້ພຣະອົງສອນພວກເຂົາແບບຢ່າງຂອງການອ້ອນວອນ.

ແບບຢ່າງຂອງການອ້ອນວອນທີ່ພຣະອົງຊົງສອນໃຫ້ນັ້ນໄດ້ນຳມາໃຊ້ເປັນເວລາຫລາຍຊົ່ວອາຍຸຄົນ ຊຶ່ງຄຳເວົ້າແຕກຕ່າງກັນໜ້ອຍນຶ່ງ ທີ່ພົບໄດ້ໃນພຣະທັມມັດທາຍ ບົດທີ 6ແລະໃນພຣະທັມເຫລັ້ມນີ້. ແທ້ຈິງແລ້ວ ແບບຢ່າງຂອງການອ້ອນວອນນີ້ບໍ່ແມ່ນຄຳອ້ອນວອນຂອງພຣະອົງ ຊຶ່ງໃນພາສາອັງກິດໃຊ້ວ່າ "The Lord's Prayer."
ແຕ່ເປັນຄຳອ້ອນ
ວອນທີ່ສອນໃຫ້ຜູ້ຕິດຕາມພຣະອົງໃຊ້ໃນການອ້ອນວອນ. "The Lord's Prayer"
ເມື່ອມາແປເປັນພາສາລາວແລ້ວ ກໍ
ແມ່ນ "ຄຳອ້ອນວອນຂອງພຣະຜູ້ເປັນເຈົ້າ" ຈະພົບໄດ້ໃນພຣະທັມໂຢຮັນບົດທີ 17 ຊຶ່ງພຣະອົງຊົງອ້ອນວອນເພື່ອພວກສາວົກຂອງພຣະອົງແລະເພື່ອຄົນທັງປວງທີ່ວາງໃຈເຊື່ອໃນພຣະອົງ. ແບບຢ່າງຂອງການອ້ອນວອນນີ້ແມ່ນພຣະອົງໄດ້ມອບໃຫ້ແກ່ພວກສາວົກຂອງພຣະອົງ ເພື່ອພວກເຂົາຈະໄດ້ປະຕິບັດຕາມ. ພຣະອົງຊົງສອນໃຫ້ພວກສາວົກຂອງພຣະອົງເຂົ້າຫາພຣະບິດາຢ່າງໃດໃນແບບຢ່າງຂອງການອ້ອນວອນ?

ໃນຄຳອ້ອນວອນຕອນຕົ້ນຂອງພຣະເຢຊູ ພຣະອົງຊົງບອກໃຫ້ສາວົກຂອງພຣະອົງທູນຕໍ່ພຣະເຈົ້າວ່າ "ພຣະບິດາ" ກໍເພື່ອວ່າພວກເຂົາຈະໄດ້ເຫັນຄວາມຮັກຂອງພຣະເຈົ້າ ແລະພວກເຂົາສາມາດຈະເຂົ້າຫາພຣະອົງໄດ້ທຸກເວລາ (11:2). ແທນທີ່ພວກເຂົາຈະໄດ້ຍິນຄຳວ່າ ພຣະຜູ້ຊົງສ້າງອົງຍິ່ງໃຫຍ່ ຫລືພຣະເຈົ້າອົງຊົງບໍຣິສຸດຈາກຄຳທູນຂໍຂອງພຣະເຢຊູ ແຕ່ພຣະອົງຊົງໃຊ້ຄຳເວົ້າທີ່ມີຄວາມໃກ້ສິດຂອງຄົນພາຍໃນຄອບຄົວ ທີ່ບົ່ງບອກໃຫ້ພວກສາວົກຂອງພຣະອົງເຫັນວ່າ

ພວກເຂົາເປັນບຸດທັງຫລາຍຂອງພຣະເຈົ້າ ແນ່ນອນຢູ່ແລ້ວ ພຣະອົງເອງຊົງເປັນພຣະບຸດຂອງພຣະເຈົ້າ (ໂຢຮັນ 1:18) ກໍເພາະພຣະອົງນັ້ນແຫລະ ມະນຸດຈຶ່ງໄດ້ກັບຄືນດີກັບພຣະເຈົ້າ ພວກເຮົາຈຶ່ງໄດ້ກາຍມາເປັນບຸດທັງຫລາຍຂອງພຣະອົງ ເຫມືອນດັ່ງອັຄທູດໂປໂລໄດ້ບັນລະຍາຍໃຫ້ເຫັນເຖິງຖານະໃຫມ່ຂອງພວກເຮົາໃນການເປັນບຸດຂອງພຣະເຈົ້າ ເຊັ່ນພຣະທັມໂຣມ 8:16 ໄດ້ກ່າວໄວ້ວ່າ: "ຝ່າຍພຣະວິນຍານນັ້ນຊົງຮ່ວມເປັນພະຍານກັບວິນຍານຂອງເຮົາທັງຫລາຍວ່າພວກເຮົາເປັນບຸດຂອງພຣະເຈົ້າ." ໃນຖານະເປັນບຸດຂອງພຣະເຈົ້າ ພວກເຮົາຈຶ່ງມີໂອກາດເຂົ້າເຝົ້າພຣະອົງ (ເອເຟໂຊ 2:18). ໃນຖານະເປັນບຸດຂອງພຣະເຈົ້າພວກເຮົາຈະບໍ່ໄດ້ຢູ່ຫ່າງໄກຈາກພຣະອົງຕໍ່ໄປ (ເອເຟໂຊ 2:13) ພວກເຮົາໄດ້ກາຍມາເປັນພົລເມືອງຂອງພຣະເຈົ້າແລະເປັນຄົວເຮືອນຂອງພຣະອົງ (ເອເຟໂຊ 2:19-20). ສະນັ້ນພວກເຮົາຈຶ່ງທູນຕໍ່ພຣະອົງວ່າ "ພຣະບິດາ".

ໃນຄຳອ້ອນວອນນີ້ປະກອບດ້ວຍຄຳຮ້ອງຂໍຢູ່ຫ້າປະການ ສອງປະການແມ່ນກ່ຽວກັບພຣະເຈົ້າແລະສາມປະການຕໍ່ມານັ້ນ ແມ່ນກ່ຽວກັບຄວາມຕ້ອງການຂອງຕົວເອງ. ໃນຄຳແລກແມ່ນເອີ້ນພຣະເຈົ້າວ່າ "ພຣະບິດາ ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ໂຄຣົບບູຊາ" ສິ່ງໃດກໍຕາມ "ເປັນທີ່ໂຄຣົບບູຊາ" ສິ່ງນັ້ນຈະຕ້ອງບໍຣິສຸດ. ພຣະເຢຊູຢາກໃຫ້ພຣະນາມຂອງພຣະເຈົ້າ "ເປັນທີ່ໂຄຣົບບູຊາ." ປະການທຳອິດຈະຕ້ອງຍອມຮັບວ່າ <u>ພຣະນາມຂອງພຣະເຈົ້ານັ້ນບໍຣິສຸດ</u>. ພຣະເຈົ້າຊົງເປັນພຣະບິດາຂອງພວກເຮົາ ແລະພວກເຮົາຈຶ່ງສາມາດເຂົ້າເຝົ້າພຣະອົງດ້ວຍຄວາມໝັ້ນໃຈ. ແຕ່ຢ່າລືມວ່າ ພຣະອົງຊົງເປັນພຣະເຈົ້າອົງບໍຣິສຸດ ຈຶ່ງສົມຄວນທີ່ພວກເຮົາຈະຕ້ອງຖວາຍກຽດແລະສັຣເສີນພຣະອົງດ້ວຍໃຈຈິງ.

ຕໍ່ມາພຣະອົງຊົງບອກໃຫ້ສາວົກຂອງພຣະອົງອ້ອນວອນວ່າ "ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່" (ລູກາ 11:2). ຄຳວ່າ "ຣາຊອານາຈັກ" ໝາຍຄວາມວ່າພຣະອົງຊົງເປັນຜູ້ປົກຄອງຕັ້ງແຕ່ໃດມາ. ສະນັ້ນ ປະການທີສອງຂອງຄຳອ້ອນວອນນັ້ນ ຊີ້ໃຫ້ເຫັນວ່າມະນຸດຈະຕ້ອງມີຄວາມປາຖນາໃຫ້ພຣະເຈົ້າຊົງເປັນຜູ້ປົກຄອງຊີວິດແລະຈິດໃຈ. ໃນຖານະເປັນບຸດຂອງພຣະເຈົ້າ ພວກເຮົາຈະຕ້ອງປະຕິບັດຕາມຄຳບັນຊາຂອງພຣະອົງ ເພາະວ່າພວກເຮົາກາຍເປັນໄພ່ພົນຂອງພຣະອົງແລ້ວ.

ສາມປະການຫລັງນີ້ແມ່ນກ່ຽວພັນກັບຄວາມຕ້ອງການຂອງພວກເຮົາ. ປະການທີສາມແມ່ນຄວາມຕ້ອງການປະຈຳວັນໃນຊີວິດ ຄື "ອາຫານປະຈຳວັນ." ພວກເຮົາໄດ້ເຫັນເຣື່ອງລາວຂອງຊາວອິສຣາເອັນໃນຖິ່ນກັນດານ ພຣະເຈົ້າປະທານມານາໃຫ້ພວກເຂົາແຕ່ລະວັນ (ອົບພະຍົບ 16) ພຣະອົງສັນຍາວ່າຈະປະທານອາຫານໃຫ້ພວກເຂົາພຽງພໍແຕ່ລະວັນພວກເຂົາຈະຕ້ອງໄວ້ວາງໃຈໃນພຣະອົງ ພວກເຂົາຈະມີພໍຢູ່ພໍກິນ. ພຣະເຢຊູຊົງສອນພວກສາວົກຂອງພຣະອົງວ່າພຣະເຈົ້າຊົງເປັນຜູ້ປະທານສິ່ງທີ່ຕ້ອງການໃຫ້ລູກຂອງພຣະອົງແຕ່ລະວັນ ສະນັ້ນພວກເຂົາແລະພວກເຮົາເຫມືອນກັນຈະຕ້ອງໄວ້ວາງໃຈໃນພຣະອົງ.

ປະການທີສີ່ ແມ່ນແນໃສ່ຄວາມສັມພັນຂອງພວກເຮົາກັບພຣະເຈົ້າແລະຄົນອື່ນຊຶ່ງເຮັດບາບຕໍ່ສູ້ກັນ. ພວກເຮົາຮ້ອງຂໍໃຫ້ພຣະເຈົ້າໂຜດຍົກຜິດບາບໃຫ້ພວກເຮົາ ແຕ່ພວກເຮົາຈະຕ້ອງຍົກຜິດບາບໃຫ້ຜູ້ທີ່ເຮັດບາບຕໍ່ສູ້ພວກເຮົາດ້ວຍ. ພຣະອົງບໍ່ໄດ້ສອນວ່າ ເຮົາຈະຕ້ອງເຮັດຢ່າງນີ້ ພຣະເຈົ້າຈຶ່ງຈະເຮັດຢ່າງນັ້ນຕອບແທນ ບໍ່ແມ່ນການແລກປ່ຽນເອົາສິ່ງນຶ່ງເພື່ອຈະໄດ້ສິ່ງນຶ່ງຕອບແທນ. ພຣະອົງຊົງສອນໃຫ້ຮູ້ວ່າ <u>ຈິດໃຈທີ່ບໍ່ມີການໃຫ້ອະພັຍຄົນອື່ນເປັນຈິດໃຈທີ່ບໍ່ມີການສະທ້ອນໃຫ້ເຫັນພຣະຄຸນຂອງພຣະເຈົ້າ ສະນັ້ນຈຶ່ງເປັນຈິດໃຈທີ່ບໍ່ສາມາດຮັບການອະພັຍຂອງພຣະເຈົ້າ.</u>

ປະການທີຫ້າ ແບບຢ່າງຂອງການອ້ອນວອນໃນພຣະທັມລູກາໄດ້ປິດທ້າຍລົງໃຫ້ພວກເຮົາເຫັນວ່າ ຝ່າຍເນື້ອຫນັງຂອງພວກເຮົານັ້ນອ່ອນແອ. ພວກເຮົາຈຶ່ງທູນຕໍ່ພຣະເຈົ້າວ່າ "ຂໍຢ່າຊົງພາຂ້າພຣະອົງທັງຫລາຍ ເຂົ້າໄປໃນການທົດລອງ" (ລູກາ 11:4). ໃນສວນເຄັດເຊມາເນ ພຣະອົງຊົງເຕືອນພວກສາວົກຂອງພຣະອົງອີກວ່າ "ຈົ່ງອ້ອນວອນຢູ່ເພື່ອ

ຈະບໍ່ໄດ້ເຂົ້າໃນການທົດລອງ " (ລູກາ 22:40 ແລະ 22:46). ດັ່ງນັ້ນແຫລະ ເຖິງແມ່ນວ່າພວກເຮົາຢາກມີພາກສ່ວນໃນກິຈການຕ່າງໆຂອງຣາຊອານາຈັກຂອງພຣະເຈົ້າ ພວກເຮົາອາດສາມາດເຮັດໄປຕາມທາງຂອງຝ່າຍເນື້ອໜັງຊຶ່ງຈະໄປຕໍ່ສູ້ກັບພາຣະກິຈຂອງຣາຊອານາຈັກຂອງພຣະອົງ. ສະນັ້ນ ພວກເຮົາຈະຕ້ອງອ້ອນວອນທຸກວັນຢູ່ບໍ່ຂາດ ເພື່ອໃຫ້ພຣະເຈົ້າປົກປ້ອງພວກເຮົາເພື່ອບໍ່ໃຫ້ຕົກຢູ່ໃນບ້ວງແຮ້ວຂອງການທົດລອງ.

<u>**ວິທີຂອງການອ້ອນວອນ**</u> (ລູກາ11:5-8)

ຫລັງຈາກພຣະເຢຊູໄດ້ອະທິບາຍເຖິງແບບຢ່າງຂອງການອ້ອນວອນ ພຣະອົງກໍເລີຍກ່າວເຣື່ອງຄໍາອຸປມາທີ່ມີການພົວພັນກັບການອ້ອນວອນ. ໃນເຣື່ອງຄໍາອຸປມານັ້ນມີເພື່ອນສອງຄົນໄດ້ອາສັຍຢູ່ໃນໝູ່ບ້ານແຫ່ງນຶ່ງ. ໃນເວລາທ່ຽງຄືນຂອງວັນນຶ່ງ ເພື່ອນຄົນນັ້ນໄດ້ໄປປຸກເພື່ອນຂອງລາວ ເພາະວ່າລາວຕ້ອງການຄວາມຊ່ອຍເຫລືອຢ່າງກະທັນຫັນ. ລາວມີເພື່ອນອີກຄົນນຶ່ງເດີນທາງມາແຕ່ທາງໄກ ແລ້ວມາແວະຢາມລາວ. ເພື່ອນຄົນນັ້ນມາຮອດເວລາທ່ຽງຄືນ ອາຫານຢູ່ໃນເຮືອນກໍໝົດຫລັງຈາກຮັບປະທານອາຫານແລງແລ້ວ ລາວບໍ່ມີຫຍັງທີ່ຈະນໍາມາສູ່ເພື່ອນທີ່ເດີນທາງມາຮອດກິນ. ລາວຈຶ່ງໄດ້ມາປຸກເພື່ອນຄົນນີ້ກໍາລັງນອນຫລັບຢູ່ ເພື່ອຢາກມາຢືມເຂົ້າຈີ່ຈັກສາມກ້ອນໄປໃຫ້ເພື່ອນທີ່ມາພັກເຊົານໍາ. ເຖິງຢ່າງໃດກໍຕາມ ໃນຂນະນັ້ນເປັນເວລາທ່ຽງຄືນແລ້ວ ຄົນໃນຄອບຄົວຂອງເພື່ອນຜູ້ທີ່ມີເຂົ້າຈີ່ກໍນອນຫລັບແລ້ວຈຶ່ງເປັນການຍາກທີ່ເພື່ອນຄົນນັ້ນຈະລຸກຂຶ້ນໄປເອົາເຂົ້າຈີ່ໃຫ້ເພື່ອນຜູ້ທີ່ຖ້າຢູ່ຂ້າງນອກ. ໂດຍສະເພາະແລ້ວ ເຮືອນໃນສມັຍນັ້ນ ທຸກຄົນນອນຢູ່ໃນຫ້ອງດຽວກັນ ຖ້າຄົນນຶ່ງລຸກຂຶ້ນມາໃຕ້ໄຟກໍຈະໄປເຮັດຄົນອື່ນໆຮູ້ເມື່ອນໍາ. ດ້ວຍເຫດນັ້ນເພື່ອນຜູ້ທີ່ຢູ່ໃນເຮືອນຈຶ່ງບໍ່ຢາກລຸກຂຶ້ນມາ (ລູກາ 11:7).

ແມ່ນຫຍັງເຮັດໃຫ້ເພື່ອນຜູ້ທີ່ຢູ່ໃນເຮືອນລຸກຂຶ້ນ ແລ້ວຕອບສນອງຕໍ່ຄວາມຮຽກຮ້ອງຂອງເພື່ອນຜູ້ທີ່ຢູ່ຂ້າງນອກ? ພຣະຄັມພີພາສາອັງກິດຫລາຍສະບັບ (NASB, NRSV, NIV) ໄດ້ແປວ່າ
ເພື່ອນຜູ້ທີ່ຢູ່ໃນເຮືອນໄດ້ຕອບສນອງຕໍ່ຄວາມ
ຮຽກຮ້ອງຂອງເພື່ອນຜູ້ທີ່ຢູ່ນອກກໍເພາະວ່າ "ຄວາມດື້ຂໍ" ຂອງລາວ ( ພາສາລາວສະບັບ 1973) "ການໝັ້ນຮົບກວນຂອງຜູ້ເປັນເພື່ອນ" (ພາສາຂອງຄົນທົ່ວໄປ 2000) ພາສາອັງກິດໃຊ້ຄໍາວ່າ "persistence" (11:8).
ຕາມສະບັບດັ່ງທີ່
ກ່າວມານັ້ນກໍໝາຍຄວາມວ່າ ເມື່ອເພື່ອນຜູ້ທີ່ຢູ່ທາງນອກດື້ຂໍ ຫລືວ່າໝັ້ນຮົບກວນຢູ່ບໍ່ເຊົາ ໃນທີ່ສຸດເພື່ອນຜູ້ທີ່ຢູ່ໃນເຮືອນກໍຈະລຸກມາໄຂໃຫ້ ແລ້ວເອົາເຂົ້າຈີ່ໃຫ້ເພື່ອນຄົນນັ້ນເພື່ອບໍ່ໃຫ້ລາວຮົບກວນອີກຕໍ່ໄປ. ພຣະຄັມພາສາອັງກິດອີກສະບັບນຶ່ງ (New International Version) ໃຊ້ຄໍາວ່າ "boldness" ແປເປັນພາສາລາວວ່າ
"ມີຄວາມກ້າໃນການຂໍ"
ພຣະຄັມພີສະບັບນີ້ເຫັນພ້ອມຕາມຄວາມໝາຍດັ່ງຕໍ່ໄປນີ້ ເພື່ອນຜູ້ທີ່ຢູ່ຂ້າງນອກມີຄວາມກ້າມາຂໍແມ່ນກະທັ້ງໃນເວລາທ່ຽງຄືນ ເພື່ອນຜູ້ທີ່ຢູ່ໃນເຮືອນກໍເລີຍຕອບສນອງຕໍ່ຄວາມຮ້ອງຂໍຂອງລາວ. ຈະເປັນເຫດຜົນອັນໃດກໍແລ້ວແຕ່ ເພື່ອນຜູ້ຢູ່ໃນບ້ານໄດ້ລຸກຂຶ້ນໄປຕອບສນອງຕໍ່ຄໍາຮຽກຮ້ອງຂອງເພື່ອນທີ່ມາຂໍເຂົ້າຈີ່ນັ້ນ. ເພື່ອນຜູ້ທີ່ຢູ່ໃນບ້ານໄດ້ຕອບສນອງເພື່ອນຜູ້ທີ່ຢູ່ຂ້າງນອກ ກໍເພາະວ່າເພື່ອນຄົນນັ້ນໄດ້ສເນີຄວາມຕ້ອງການໃຫ້ເຫັນ.

ເຣື່ອງລາວໃນຄໍາອຸປມານີ້ ບໍ່ໄດ້ໝາຍຄວາມວ່າໃຫ້ໄປສົມທຽບລະຫວ່າງພຣະເຈົ້າກັບເພື່ອນຜູ້ທີ່ຈໍາໃຈ ຕາມທີ່ເຂົ້າໃຈກັນມາຕັ້ງແຕ່ຕົ້ນ. ແທນທີ່ຈະເຂົ້າໃຈໄປຢ່າງນັ້ນ ຄວາມຈິງໃນຄໍາອຸປມາໃນເຣື່ອງນີ້ມີຢູ່ສອງປະການ. ປະການທີນຶ່ງໄດ້ສອນພວກເຮົາວ່າ ໃຫ້ພວກເຮົາມີຄວາມກ້າໃນການຂໍ. ເຣື່ອງລາວໃນຕອນນີ້ບໍ່ໄດ້ໝາຍຄວາມວ່າຖ້າພວກເຮົາໝັ້ນທູນຂໍຕໍ່ພຣະເຈົ້າ ພຣະອົງຈະຕອບຄໍາອ້ອນວອນຂອງພວກເຮົາ. ແຕ່ເຣື່ອງລາວໃນຕອນນີ້ຊີ້ໃຫ້ເຫັນວ່າໃຫ້ພວກເຮົາມີຄວາມກ້າເຂົ້າໄປຫາພຣະເຈົ້າ ແລະນໍາຄວາມຕ້ອງການຂອງພວກເຮົາເຂົ້າໄປສເນີຕໍ່ພຣະອົງ.ຖ້າຫາກເພື່ອນຜູ້ທີ່ຢູ່ໃນເຮືອນຈໍາໃຈລຸກຂຶ້ນມາ ແລະເອົາເຂົ້າຈີ່ໃຫ້ເພື່ອນຜູ້ທີ່ມີຄວາມກ້າມາຮ້ອງຂໍນັ້ນ ພຣະເຈົ້າຂອງພວກເຮົາແທ່ງຈະ

ຕອບຄຳອ້ອນວອນຂອງພວກເຮົາຜູ້ເປັນລູກຂອງພຣະອົງຫລາຍກວ່ານັ້ນອີກດ້ວຍ. ຫລາຍຄັ້ງເບິ່ງເຫມືອນກັບວ່າຄຳອ້ອນວອນຂອງພວກເຮົາບໍ່ໄດ້ຮັບຄຳຕອບ ກໍຍ້ອນວ່າພວກເຮົາບໍ່ມີຄວາມກ້າພໍທີ່ຈະນຳຄວາມຕ້ອງການຂອງພວກເຮົາໄປສເນີຕໍ່ພຣະອົງ. ພວກເຮົາບໍ່ກ້າພໍໃນຄຳອ້ອນວອນຂອງພວກເຮົາ. ພວກເຮົາບໍ່ຍອມເສັຽຫນ້າ ຫລືເສັຽປຽບໄປຢືນຢູ່ຕໍ່ຫນ້າຂອງພຣະເຈົ້າແລະຍອມຮັບວ່າພວກເຮົາເອງບໍ່ສາມາດເຮັດໄດ້. ພຣະເຢຊູຈຶ່ງໄດ້ສອນພວກເຮົາວ່າໃຫ້ພວກເຮົາມີຄວາມກ້າໃນການເຂົ້າມາຫາພຣະເຈົ້າແລະສເນີຕໍ່ພຣະອົງທຸກໆສິ່ງທີ່ພວກເຮົາຕ້ອງການ.

ອີກອັນນຶ່ງ ເຣື່ອງລາວໃນຄຳອຸປມາຕອນນີ້ໄດ້ເປີດໃຫ້ເຫັນຢ່າງແຈ່ມແຈ້ງເຖິງຄວາມປາຖນາຈາກຫົວໃຈຂອງພຣະເຈົ້າ. ເຖິງແມ່ນວ່າ ເພື່ອນຜູ້ທີ່ຈຳໃຈຍັງຕອບສນອງຕໍ່ເພື່ອນຜູ້ທີ່ມາຮ້ອງຂໍ ໃຫ້ພວກເຮົາລອງມາຄຶດເບິ່ງວ່າພຣະເຈົ້າຜູ້ຊົງມີຄວາມຮັກ ສິບໍ່ຕອບສນອງຕໍ່ຄວາມຕ້ອງການຂອງພວກເຮົາຫລາຍກວ່ານັ້ນອີກບໍ? ສະນັ້ນ ພຣະເຢຊູຈຶ່ງບັນລະຍາຍໃຫ້ພວກເຮົາເຫັນພາບພົດຂອງພຣະເຈົ້າໃນຄຳມ້ອນທ້າຍຂອງພຣະທັມຕອນນີ້.

<u>ຄວາມປະສົງຂອງການອ້ອນວອນ</u> (ລູກາ11:9-13)

ຄຳສັນຍາໃນຂໍ້ 9-10 ນັ້ນເຮັດໃຫ້ຕື່ນເຕັ້ນຫລາຍຈົນເກືອບຈະເຮັດໃຫ້ພວກເຮົາຫັນໃຈບໍ່ຕິດ. ຄຳສັນຍາໃນຂໍ້ນີ້ສລູບໄດ້ວ່າ: ພຣະເຈົ້າຈະຕອບຄຳອ້ອນວອນຂອງພວກເຮົາ. ເມື່ອພວກເຮົາຂໍ ພຣະເຈົ້າຈະປະທານໃຫ້ໃນສິ່ງທີ່ພວກເຮົາຂໍ. ເມື່ອພວກເຮົາຊອກພຣະອົງຈະນຳພວກເຮົາໄປພົບ. ເມື່ອພວກເຮົາເຄາະ ພຣະອົງຈະເປີດໃຫ້ພວກເຮົາຜ່ານໄປ. ໃຫ້ສັງເກດເບິ່ງຄຳກິຣິຍາສາມຄຳນີ້ ແມ່ນສະທ້ອນໃຫ້ເຫັນຈິດໃຈທີ່ບໍ່ລະເລີຍທີ່ໄດ້ບັນລະຍາຍໃນເຣື່ອງລາວໃນຄຳອຸປມາທີ່ກ່າວມານັ້ນ. ພຣະເຢຊູບໍ່ໄດ້ສັນຍາວ່າພຣະເຈົ້າຈະປະທານທຸກສິ່ງທີ່ພວກເຮົາຂໍ. ແຕ່ພຣະອົງສັນຍາວ່າ ພຣະເຈົ້າຈະຕອບສນອງຕໍ່ລູກຂອງພຣະອົງທີ່ອ້ອນວອນດ້ວຍຈິດໃຈບໍ່ລະເລີຍ.

ພວກສາວົກທີ່ອ້ອນວອນມີຄວາມຫມັ້ນໃຈວ່າ ພວກເຂົາຈະໄດ້ຮັບໃນສິ່ງທີ່ພວກເຂົາຂໍ ພວກເຂົາຈະໄດ້ພົບໃນສິ່ງທີ່ພວກເຂົາຊອກ ແລະພວກເຂົາຈະໄດ້ໄປໃນທາງທີ່ພວກເຂົາຢາກຈະໄປນັ້ນ ທີ່ກ່າວມານີ້ເປັນພາບພົດຂອງພຣະເຈົ້າຜູ້ທີ່ຮັກພວກເຮົາ ແລະຢາກໃຫ້ພວກເຮົາທຸກສິ່ງທີ່ພວກເຮົາຕ້ອງການ ເພື່ອໃຫ້ຊີວິດນີ້ເຕັມລົ້ນແລະເປັນຊີວິດທີ່ເກີດດອກອອກຜົນ. ຄຳຕອບສນອງຕໍ່ການອ້ອນວອນນັ້ນບໍ່ແມ່ນພວກເຮົາ ແຕ່ແມ່ນພຣະເຈົ້າ. ພວກເຮົາບໍ່ຈຳເປັນຈະຕ້ອງໄປຊັກຊວນໃຫ້ພຣະເຈົ້າປະທານໃຫ້ແກ່ພວກເຮົາໃນສິ່ງທີ່ພວກເຮົາຢາກໄດ້ ຫລືໄປຕໍ່ລອງກັບພຣະອົງຍ້ອນຄວາມບໍ່ຮູ້ເທົ່າເຖິງການຂອງພວກເຮົາເອງ. ພຣະເຈົ້າເປັນເຫມືອນພໍ່ທີ່ຮັກລູກໆຂອງພຣະອົງແລະຢາກໃຫ້ແຕ່ສິ່ງດີໆແກ່ລູກ.

ພຣະເຢຊູເຮັດໃຫ້ເຫັນພາບພົດຂອງພຣະເຈົ້າໃຫ້ເຫັນອີກໂດຍເອົາພໍ່ຜູ້ເປັນມະນຸດມາເປັນຕົວຢ່າງ. ພໍ່ທີ່ຢູ່ໃນໂລກນີ້ໃຫ້ແຕ່ສິ່ງດີໆທັງນັ້ນແກ່ລູກຂອງຕົນ. ພໍ່ທີ່ມີຄວາມຮັກຈະບໍ່ເອົາງູໃຫ້ແກ່ລູກຢ້ານວ່າມັນຈະໄປທຳຮ້າຍລູກ. ພໍ່ທີ່ມີຄວາມຮັກຈະບໍ່ເອົາແມງງອດໃຫ້ລູກຢ້ານວ່າມັນຈະເປັນພິດເປັນພັຍຕໍ່ລູກ. ໃນທຳນອງດຽວກັນ ພຣະເຈົ້າທີ່ມີຄວາມຮັກຈະໃຫ້ລູກຂອງພຣະອົງໃນສິ່ງທີ່ພວກລູກຕ້ອງການ (11:11-12).

ພຣະເຢຊູໄດ້ສົມທຽບເພື່ອຜູ້ທີ່ມາຟັງພຣະອົງໃຫ້ເຫັນອີກວ່າ ພໍ່ທີ່ເປັນມະນຸດເປິເປື້ອນດ້ວຍຄວາມບາບຍັງມີຄວາມຮັກຕໍ່ລູກ ກໍຍັງຮູ້ຈັກເອົາແຕ່ສິ່ງດີໆໃຫ້ລູກ. ຫລາຍກວ່ານັ້ນອີກຈັກເທົ່າໃດ ພຣະເຈົ້າຜູ້ບໍຣິສຸດ ພຣະອົງສົມບູນດ້ວຍຄວາມຄຶດພຣະອົງມີຄວາມເຂົ້າໃຈ ແລະມີຄວາມຮັກ. ສະນັ້ນ ສິ່ງທີ່ພຣະອົງປະທານໃຫ້ນັ້ນກໍຈະເຫມາະສົມກັບໃນສິ່ງທີ່ມະນຸດຕ້ອງການ (11:13).

<u>ຄຳຖາມ</u>

1. ພວກເຮົາໄດ້ຮຽນຮູ້ອັນໃດແດ່ຈາກແບບຢ່າງຂອງການອ້ອນວອນຊຶ່ງພຣະເຢຊູໄດ້ສອນໃຫ້ສາວົກຂອງພຣະອົງ?

2. ເປັນຫຍັງຄຳອ້ອນວອນ ທູນຂໍ "ອາຫານປະຈຳວັນ" ສຳຄັນແທ້?
3. ໃນພຣະຄັມພີໃຊ້ຄຳວ່າ "ດື້ຂໍ" ຫລືວ່າ "ມີຄວາມກ້າໃນການຂໍ" ຄຳນີ້ຫມາຍຄວາມວ່າຢ່າງໃດສຳລັບທ່ານໃນການອ້ອນວອນຂອງທ່ານ?
4. ພຣະລັກສະນະຂອງພຣະເຈົ້າໃຫ້ກຳລັງໃຈແກ່ພວກເຮົາໃນການອ້ອນວອນຢ່າງໃດ?

*ສຈ. ບຸນເຮັ່ງ ພົງປຣະພັນ*

## ບົດຮຽນທີ 6
## ຈົ່ງໄວ້ວາງໃຈໃນພຣະເຈົ້າແລະບໍ່ຕ້ອງຢ້ານ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ລູກາ 12:1-12

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 11:53-12:12

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ທີ່ຕິດຕາມພຣະເຢຊູຈະຕ້ອງໄວ້ວາງໃຈໃນພຣະເຈົ້າເມື່ອພວກເຂົາປະເຊີນກັບສິ່ງກີດກັ້ນແທນທີ່ຈະເກີດຄວາມຢ້ານກົວ.

**ຄຳຖາມເພື່ອການສຳຣວດ:** ໃນເວລາໃດທີ່ທ່ານພົບວ່າເປັນການຍາກທີ່ຈະໄວ້ວາງໃຈໃນພຣະເຈົ້າ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຊອກຫາທາງຊ່ອຍໃຫ້ທ່ານເພີ້ມຄວາມໄວ້ວາງໃຈໃນພຣະເຈົ້າໃຫ້ຫລາຍຂື້ນໃນຂນະທີ່ທ່ານປະເຊີນກັບສິ່ງກີດກັ້ນແລະຄວາມລຳບາກ.

### ຄຳນຳ

ພຣະເຢຊູຊົງຮູ້ແລ້ວວ່າສາວົກຂອງພຣະອົງຈະຖືກຂົ່ມເຫງແລະພວກເຂົາຈະໄດ້ຮັບຄວາມລຳບາກ ພຣະອົງຊົງຢາກໃຫ້ພວກເຂົາຢ່າງແຮງກ້າໃຫ້ພວກເຂົາມີຄວາມກ້າຫານແລະໃຫ້ພວກເຂົາໄວ້ວາງໃຈໃນພຣະເຈົ້າ. ພຣະອົງຊົງໜູນໃຈພວກເຂົາໃຫ້ເປັນພຍານອັນແທ້ຈິງແລະຢ່າໄດ້ເປັນຄົນໜ້າຊື່ໃຈຄົດເໝືອນກັບພວກຟາຣີຊາຍ.

### ພຣະເຢຊູຊົງປະທະກັບພວກຟາຣີຊາຍ (ລູກາ11:14-52)

ໃນຂນະທີ່ພຣະເຢຊູກຳລັງກ້າວໄປສູ່ໄມ້ກາງແຂນ ພຣະອົງຊົງປະເຊີນກັບສັດຕຣູຂອງພຣະອົງຢ່າງຮຸນແຮງ. ກ່ອນຈະເຂົ້າສູ່ບົດຮຽນຂອງພວກເຮົາ ພຣະເຢຊູໄດ້ປະທະກັບພວກຟາຣີຊາຍແລ້ວ (ລູກາ 11:14-26, 37-52). ເມື່ອພຣະອົງຊົງໄລ່ຜີອອກຈາກຊາຍຄົນນຶ່ງໃນບົດທີ 11:14-16 ພວກຟາຣີຊາຍຄິດວ່າພວກເຂົາຈະຕ້ອງອະທິບາຍເຖິງເຫດການນັ້ນ. ແທນທີ່ພວກເຂົາຈະຍອມຮັບວ່າພຣະອົງໄດ້ອຳນາດມາຈາກພຣະເຈົ້າ ພວກເຂົາກ່າວຫາວ່າພຣະອົງໃຊ້ອຳນາດຂອງນາຍຜີ. ພຣະອົງຈຶ່ງກ່າວປະຕິເສດໃນຄຳກ່າວຫາຂອງພວກເຂົາ. ພຣະອົງຊົງຊີ້ໃຫ້ພວກເຂົາເຫັນວ່າ ເມື່ອຜີເຮັດໃຫ້ຄົນນຶ່ງເຈັບປ່ວຍ ນາຍຂອງຜີຈະບໍ່ມາຮັກສາຄົນນັ້ນໃຫ້ດີຈັກເທື່ອ. ພວກເຂົາຫາຄວາມເວົ້າທີ່ບໍ່ມີເຫດຜົນອັນໃດທັງສິ້ນທີ່ຈະມາກ່າວຫາພຣະອົງ.

### ພຣະເຢຊູຊົງເຕືອນໃຫ້ລະວັງຄວາມໜ້າຊື່ໃຈຄົດ (12:1-3)

ມີຝູງຊົນຈຳນວນຫລວງຫລາຍຢູ່ອ້ອມຂ້າງອ້ອມແອວພຣະເຢຊູ. ການປະກາດແລະການປິ່ນປົວປະຊາຊົນໃນຂົງເຂດຢູດາຍໄດ້ຊັກຈູງໃຫ້ມີຄົນຈຳນວນຫລວງຫລາຍຕິດຕາມພຣະອົງໄປ. ບາງທີກໍອາດຈະເປັນດ້ວຍເຫດວ່າພຣະອົງໄດ້ປະທະກັບພວກຟາຣີຊາຍ ແລ້ວປະຊາຊົນຜູ້ທີ່ຢາກສອດຮູ້ສອດເຫັນວ່າເຫດການຈະເປັນຢ່າງໃດ. ເຖິງແມ່ນວ່າພວກເຂົາຈະມາດ້ວຍເຫດຜົນອັນໃດກໍຕາມ ແຕ່ຮູ້ສຶກວ່າພວກເຂົາມາຫລາຍເຕັມທີຈົນບຽດກັນ.

ຝູງຊົນມາເຝົ້າພຣະເຢຊູນັ້ນບໍ່ແມ່ນເຫດການໃໝ່ອັນໃດເລີຍ. ບໍ່ວ່າພຣະອົງຈະໄປໃສກໍຕາມພວກເຂົານຳພຣະອົງໄປ. ຕາມຄວາມຈິງແລ້ວ ບັງຄັ້ງພຣະອົງໄດ້ປົບໜີຈາກພວກເຂົາໄປພັກຜ່ອນ ຫລືໄປເຂົ້າເຝົ້າພຣະເຈົ້າ. ບາງກຸ່ມທີ່ມາຫາພຣະອົງ ພວກເຂົາກໍຕັ້ງໃຈຟັງພຣະອົງໃນຂນະທີ່ພຣະອົງສັ່ງສອນຢູ່ຕາມຈ້າຍພູ (ມັດທາຍ 5-7). ບາງກຸ່ມກໍມາເບິ່ງພຣະອົງປິ່ນປົວພຍາດ (ມາຣະໂກ 1:33-34). ບາງກຸ່ມກໍມາສ້າງຄວາມວຸ້ນວາຍໂຕ້ຕອບພຣະອົງ (ລູກາ 4:14-30). ເຖິງແມ່ນວ່າຝູງຊົນທີ່ມາຟັງພຣະເຢຊູສັ່ງສອນຈະເອົາເຂົ້າຫູຊ້າຍອອກຫູຂວາ ຫລືວ່າໄດ້ຮັບປໂຍດຫລາຍຫລືໜ້ອຍນັ້ນກໍແລ້ວແຕ່ສ່ວນບຸກຄົນ ແຕ່ຄຳສອນຂອງພຣະອົງແມ່ນເຈາະຈົງໃສ່ພວກສາວົກຂອງພຣະອົງ (12:1). ພຣະອົງບໍ່

ເຄີຍດັດແປງຄຳສອນຂອງພຣະອົງໃຫ້ຖືກຫູຜູ້ຟັງຈັກເທື່ອ. ພຣະອົງຈະເນັ້ນໃຫ້ເຫັນເງື່ອນໄຂຂອງການເປັນສາວົກ. ສຳລັບນີໂກເດມ ຜູ້ນຳທີ່ມີອຳນາດທາງສາສນາເປັນຜູ້ໃຫ້ຄຳປຶກສາ ເປັນຄະນະສານສູງສຸດຂອງຊາວຢິວ ພຣະອົງຊົງກ່າວຕໍ່ລາວວ່າ "ທ່ານທັງຫລາຍຈະຕ້ອງບັງເກີດມາໃຫມ່ (ໂຢຮັນ 3:7). ສຳລັບເສດຖີຫນຸ່ມ ພຣະອົງຊົງກ່າວວ່າ "ຈົ່ງໄປຂາຍບັນດາສິ່ງຂອງຊຶ່ງທ່ານມີຢູ່ແຈກທານແກ່ຄົນອະນາຖາ ແລ້ວທ່ານຈະມີຊັບສົມບັດໃນສວັນ ແລະຈົ່ງຕາມເຮົາມາເສັຽ(ລູກາ 18:22). ສຳລັບສາວົກຂອງພຣະອົງແລ້ວ ພຣະອົງກ່າວວ່າ "ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລ້ວຕິດຕາມເຮົາມາ (ລູກາ 9:23). ຄຳວ່າ "ແບກໄມ້ກາງແຂນຂອງຕົນ" ເປັນຄຳອຸປມາທີ່ມີຄວາມຫມາຍວ່າ ສາວົກຂອງພຣະອົງບໍ່ພຽງແຕ່ຈະໄປຕາຍຢູ່ທາງຫນ້າ ແຕ່ພວກເຂົາຈະຕ້ອງແບກໄມ້ກາງແຂນທີ່ພວກເຂົາເອງຈະຖືກຕອກຕຶງນັ້ນໄປຈົນເຖິງຫລັກປະຫານ. ພວກເຂົາຈະຕ້ອງຕຽມຮັບຄວາມທຸກລຳບາກແລະຄວາມຕາຍຢູ່ສເມີ.

ບາງທີພຣະເຢຊູເຫັນພວກຟາຣີຊາຍຢູ່ໃນຖ້ານກາງຝູງຊົນທັງຫລາຍ ພວກເຂົາມັກຈະສະແດງຕົວວ່າພວກເຂົາເປັນຜູ້ບໍຣິສຸດກວ່າຄົນອື່ນ. ພຣະເຢຊູເຕືອນສາວົກຂອງພຣະອົງບໍ່ໃຫ້ເອົາແບບຢ່າງຂອງພວກຟາຣີຊາຍ ເພາະວ່າທາງນອກແລ້ວພວກເຂົາສະແດງຕົວເປັນຄົນສິນທັມ ທາງໃນພວກເຂົາເຕັມໄປດ້ວຍຄວາມບາບ. ທີ່ກ່າວມານີ້ກໍບໍ່ແມ່ນຫມົດທຸກຄົນດອກ ຟາຣີຊາຍບາງຄົນອຸທິດຕົນແລະມີນ້ຳໃສໃຈຈິງແທ້ ເຊັ່ນນີໂກເດມ (ໂຢຮັນ ບົດທີ 3); ໂຢເຊບ ໄທບ້ານອາຣີມາທາຍ ລາວເປັນຜູ້ຕິດຕາມພຣະອົງ (ລູກາ 23:50) ແລະຄາມາລີເອັນ ລາວເປັນອາຈານຂອງໂປໂລ (ກິຈການ 5: 34-39). ຟາຣີຊາຍຈຳນວນຫລາຍແລ້ວອ້າງຕົວວ່າເປັນຄົນເຄັ່ງຄັດທາງສາສນາ ແຕ່ທາງໃນແລ້ວພວກເຂົາບໍ່ເປັນດັ່ງທີ່ກ່າວມານັ້ນ ພວກເຂົາເປັນຄົນຫນ້າຊື່ໃຈຄົດ.

ຄວາມຫນ້າຊື່ໃຈຄົດເປັນການຫລອກລວງຕໍ່ທຸກໆຄົນ. ການປະພຶດຢ່າງນີ້ເປັນການກະທຳເພື່ອໃຫ້ຄົນອື່ນຍອມຮັບຕົວເຂົາ ໃຫ້ຄົນອື່ນນັບຖືເຂົາ ແລະເຮັດໃຫ້ຕົວເຂົາເອງຂຶ້ນຊື່ລືຊາ. ອັນເປັນການຫລອກລວງທັງນັ້ນ.

ເກືອບວ່າຫມົດທຸກຄົນຕ້ອງການໃຫ້ຄົນອື່ນເຫັນວ່າຕົວເອງເປັນຜູ້ດີບຜູ້ດີໃນສັງຄົມ. ພວກເຮົາອາດຈະຊຸກເຊື່ອງເຈຕນາແລະຄວາມຮູ້ສຶກອັນແທ້ຈິງໄວ້ ເພື່ອບໍ່ໃຫ້ຄົນອື່ນເຫັນທາດແທ້ຂອງພວກເຮົາ. ເພາະວ່າພວກເຮົາຕ້ອງການໃຫ້ຄົນອື່ນເຫັນແຕ່ພາບພົດອັນດີຂອງພວກເຮົາ. ມີໃຜແດ່ຢາກໃຫ້ຄົນອື່ນຮູ້ເຫັນຄວາມຄຶດ ການເຄື່ອນໄຫວ ແລະການກະທຳຂອງພວກເຮົາ ແລ້ວນຳໄປລົງຫນ້າຫນັງສືພິມ ຫລືປະກາດອອກທາງໂທຣະທັດ? ຄວາມຫນ້າຊື່ໃຈຄົດສາມາດເຮັດໃຫ້ເປັນຕົ້ນເຫດຂອງການປິດບັງລັກສະນະອັນແທ້ຈິງແລະເຮັດໃຫ້ເກີດຄວາມພໍໃຈໃນທາງຜິດ.

ຄວາມຫນ້າຊື່ໃຈຄົດບໍ່ພຽງແຕ່ເປັນແຜນການປົກປິດໄວ້ດ້ວຍຄວາມລະມັດລະວັງ ແຕ່ຍັງມີຜົນສະທ້ອນແຜ່ອອກຢ່າງຮ້າຍກາດ. ພຣະເຢຊູໄດ້ສົມທຽບໃສ່ກັບເຊື້ອແປ້ງ (leaven) ເພາະວ່າມັນຊ
ຶມເຂົ້າໄປໂພງຕົວເປັນເຫມືອນກັບແປ້ງ
ເຂົ້າ (yeast) ທີ່ໃຊ້ຫມັກໃສ່ເຂົ້າຫນົມປັງ ເມື່ອມັນປົນເຂົ້າໄປໃນແປ້ງທີ່ຫມັກໄວ້.
ໃນສມັຍກ່ອນນັ້ນພວກເຂົາຈະແບ່ງ
ເອົາແປ້ງເຂົ້າຫນົມປັງທີ່ຫມັກແລ້ວໄວ້ອອກຫນ້ອຍນຶ່ງ ເພື່ອເອົາໄວ້ເຮັດເຊື້ອສຳລັບຈະຫມັກເຮັດແປ້ງເຂົ້າຫນົມປັງໃນວັນຕໍ່ໄປ. ຫລັງຈາກນັ້ນຈຶ່ງເອົາແປ້ງທີ່ຫມັກນັ້ນໄປອົບເປັນເຂົ້າຫນົມປັງ.ພວກເຂົາຈະເຮັດຢູ່ຢ່າງນີ້ເລື້ອຍໆໄປ. ຄວາມຫນ້າຊື່ໃຈຄົດກໍຢ່າງນັ້ນແຫລະມັນເຮັດໃຫ້ຄວາມມັກໃຫຽໃຝ່ສູງຂອງພວກເຮົາທະເຍີທະຍານຂຶ້ນແລະເປັນຜົນສະທ້ອນໃຫ້ກັບຊີວິດຂອງພວກເຮົາທຸກໆດ້ານ.
ພຣະເຢຊູຊີ້ໃຫ້ເຫັນວ່າຄົນໂງ່ພະຍາຍາມຈະປົກປິດໄວ້. ພຣະອົງຊົງກ່າວວ່າມັນເປັນການໄຮ້ປໂຍດທີ່ຈະໄປປົກປິດໄວ້ດ້ວຍເຫດວ່າໃນວັນສຸດທ້າຍຂອງການຕັດສິນ ການກະທຳອັນໃດກໍຕາມໃນທີ່ລັບລີ້ກໍຈະຖືກເປີດເຜີຍອອກມາ. ຄຳເວົ້າ

ທີ່ເວົ້າກັນໃນທີ່ລັບລີ້ກໍຈະຖືກປະກາດອອກມາໃຫ້ທຸກຄົນໄດ້ຟັງ. ຄຳເວົ້າພື້ນທາມຂວັນກັນຊື່ງກັນແລະກັນກໍຈະຖືກປະກາດຢູ່ເທິງຫລັງຄາເຮືອນກະຈາຍສຽງໄປ.

## ພຣະເຢຊູຊົງຢາກໃຫ້ຢ້ານໃນສິ່ງທີ່ຄວນຢ້ານ (ລູກາ12:4-7)

ອາດຈະເປັນນຳມີຝູງຊົນຈຳນວນຫລວງຫລາຍທີ່ຕິດຕາມພຣະເຢຊູອອກຂື້ນເໝືອນກັບດອກເຫັດ ແລະຜູ້ນຳທາງສາສນາຕໍ່ຕ້ານພຣະອົງອີກ ຈຶ່ງເປັນເຫດໃຫ້ສາວົກຂອງພຣະອົງເກີດຄວາມກັງວົນ. ພຣະອົງຊົງເອີ້ນພວກສາວົກຂອງພຣະອົງວ່າເປັນມິດສະຫາຍ. ເພື່ອນເປັນຜູ້ເຫັນອົກເຫັນໃຈໃນຍາມຂັດສົນ. ພຣະອົງຊົງປອບໃຈພວກເຂົາບໍ່ໃຫ້ຢ້ານ. ພຣະອົງຊົງກ່າວຕໍ່ພວກເຂົາວ່າ ຜູ້ທີ່ພຍາຍາມຈະຂ້າພວກເຂົານັ້ນມີອຳນາດຈຳກັດ. ພວກເຂົາຂ້າໄດ້ພຽງແຕ່ຮ່າງກາຍເທົ່ານັ້ນ. ແທນທີ່ຈະໄປຢ້ານຜູ້ທີ່ຈະມາຕໍ່ຕ້ານແລະຈະມາຂ້າພວກເຮົາໃຫ້ຕາຍ ໃຫ້ຢ້ານພຣະເຈົ້າຫລາຍກວ່າ ເພາະວ່າພຣະເຈົ້າຂ້າໄດ້ທັງຮ່າງກາຍແລະມີອຳນາດຈະຖິ້ມມະນຸດລົງນະຣົກໄດ້.

ພຣະເຢຊູບໍ່ມີຄວາມຕັ້ງໃຈຈະເຮັດໃຫ້ພວກສາວົກຂອງພຣະອົງເກີດຄວາມຢ້ານ. ພຣະອົງຊົງຈັດຕຽມພວກເຂົາເພື່ອເຫດການທີ່ຈະເກີດຂື້ນໃນພາຍໜ້າ. ພຣະອົງຍົກເອົານົກຈອກມາເປັນຕົວຢ່າງເພື່ອອະທິບາຍໃຫ້ພວກເຂົາເຫັນວ່າແມ່ນແຕ່ສັດພຣະເຈົ້າຍັງເບິ່ງແຍງຮັກສາ ພວກເຮົາແຮ່ງປະເສີດກວ່ານົກຈອກອີກ. ເຖິງແມ່ນຜົມຢູ່ເທິງຫົວຂອງຜູ້ທີ່ພຣະເຈົ້າຊົງຮັກຫລົ່ນລົງ ພຣະເຈົ້າກໍຊົງຮູ້. ພຣະອົງໃຫ້ຄວາມໝັ້ນໃຈແກ່ພວກເຂົາວ່າ ພວກເຂົານັ້ນມີຄວາມປອດພັຍກັບພຣະເຈົ້າ. ຕາມຄວາມຈິງແລ້ວ ພວກເຂົາຈະຕ້ອງໄວ້ວາງໃຈກັບພຣະເຈົ້າ ແລະບໍ່ຈຳເປັນຈະຕ້ອງໃຫ້ຄວາມຢ້ານປົກຫຸ້ມພວກເຂົາເລີຍ.

ພຣະເຢຊູຮູ້ວ່າວັນສຸດທ້າຍຂອງພຣະອົງໃກ້ເຂົ້າມາແລ້ວ ແລະອະນາຄົດຂອງການປະກາດເຣື່ອງຣາຊອານາຈັກຂອງພຣະອົງນັ້ນຈະຝາກໄວ້ກັບພວກສາວົກຂອງພຣະອົງ (9:22, 44). ສະນັ້ນພວກເຂົາຈະຕ້ອງຢືນຢັດໃນການເປັນພຍານໃຫ້ກັບພຣະອົງ. ພວກເຂົາຈະໃຫ້ຄວາມຢ້ານຫລືຄວາມອັບອາຍຍັບຢັ້ງພວກເຂົາບໍ່ໄດ້. ພຣະອົງຊົງບັນລະຍາຍໃຫ້ເຫັນຄວາມເລັ່ງລັດໃນການເປັນພຍານຂອງພວກເຂົາ ໂດຍບັນລະຍາຍໃຫ້ເຫັນວ່າພຣະອົງຈະຮັບຄົນໃດຄົນນຶ່ງຫລືປະຕິເສດຄົນໃດຄົນນຶ່ງໃນວັນຕັດສິນນັ້ນ ຂື້ນຢູ່ກັບການງານຂອງຄົນຜູ້ນັ້ນໃນຄາວລາວຍັງມີຊີວິດຢູ່ໃນໂລກ (12:8-10). ຫລັງຈາກພຣະອົງຈາກໄປແລ້ວ ສາວົກຂອງພຣະອົງຈະຕົກຢູ່ໃນສະພາບການວຸ້ນວາຍ ພຣະອົງຈຶ່ງຢາກໃຫ້ພວກເຂົາຕຽມໃຈໄວ້ ເນື່ອງຈາກວ່າການຖືກຂົ່ມເຫງແລະຄວາມທຸກຍາກລຳບາກອັນແສນສາຫັດກຳລັງຈະມາເຖິງພວກເຂົາ.

ມີເຣື່ອງລາວເລົ່າກັນມາວ່າ ອັນເດອາຖືກຕອກໄວ້ໃສ່ໄມ້ກາກະບາດຈົນເສັຽຊີວິດ; ບາຣະໂທໂລມາຍ (ນະທານາເອນ) ຖືກເຂົາແຫກໜັງອອກຈົນເສັຽຊີວິດ; ມັດທາຍຖືກເຂົາເອົາຂວັນສັບຈົນເສັຽຊີວິດ; ທາດາຍຖືກຕີດ້ວຍໄມ້ຄ້ອນຈົນເສັຽຊີວິດ; ໂທມາຖືກປະໂລຫິດຂອງຄົນຕ່າງຊາດແທງດ້ວຍຫອກຈົນເສັຽຊີວິດ; ເປໂຕຖືກຄຶງທີ່ໄມ້ກາງແຂນ ແຕ່ລາວຂໍຮ້ອງໃຫ້ເອົາຕີນຂອງລາວຂື້ນແລະເອົາຫົວຂອງລາວຢ່ອນລົງ ເພາະລາວເຫັນວ່າບໍ່ສົມຄວນທີ່ຈະຕາຍເອົາຫົວຂື້ນເໝືອນຢ່າງພຣະເຈົ້າຂອງລາວ. ຟີລິບຖືກແຂນຄໍທີ່ຫລັກເສົາສູງ; ຊີໂມນພັກຊາດນິຍົມຖືກເຂົາໄປເລື່ອຍຈົນເສັຽຊີວິດ; ຢາໂກໂບນ້ອງຊາຍ (half-brother) ຂອງພຣະເຢຊູ ຖືກປະໂລຫິດແລະທັມບັນດິດຂ້າຢ່າງທາລຸນ;
ພຣະຄັມພີໄດ້ກ່າວໄວ້
ວ່າ ຢາໂກໂບນ້ອງຊາຍຂອງໂຢຮັນຖືກເຮໂຣດຂ້າ (ກິຈການ 12:1-2).

## ພຣະເຢຊູຊົງກ່າວເຖິງຄວາມໝ້າຊື່ໃຈຄົດເປັນການຕໍ່ສູ້ພຣະວິນຍານບໍຣິສຸດ (ລູກາ12:8-10)

ພຣະເຢຊູເອີ້ນພຣະອົງເອງວ່າເປັນ "ບຸດມະນຸດ" (ລູກາ 12:8). ພຣະເຈົ້າຊົງສວມຄາບເປັນມະນຸດດ້ວຍການເກີດຂອງພຣະເຢຊູ. ຂົວຂ້າມເຫວເລິກທີ່ກີດກັ້ນລະຫວ່າງພຣະເຈົ້າຜູ້ບໍຣິສຸດແລະມະນຸດທີ່ເຕັມໄປດ້ວຍຄວາມບາບໄດ້ເຊື່ອມຫາ

ກັນເມື່ອພຣະເຢຊູໄດ້ສະເດັດມາບັງເກີດນຳນາງມາຣີອາຍິງພົມຈາຣີ ຕໍ່ມາພຣະອົງໄດ້ຖືກນຳໄປຕອກຄຶງໄວ້ຢູ່ເທິງໄມ້ກາງແຂນຈົນສິ້ນພຣະຊົນ ແລ້ວພຣະອົງຊົງຄືນມາມີຊີວິດ. ໃນຂນະທີ່ພຣະອົງຊົງເປັນມະນຸດ ພຣະອົງຖືກທົດສອບເຫມືອນກັນກັບພວກເຮົາທຸກໆດ້ານໃນຊີວິດນີ້ (ເຮັບເຣີ 4:15).

ຄຳວ່າ "ຫມິ່ນປມາດ" (ລູກາ 12:10) ເມື່ອແປອອກມາຈາກພາສາກຣີກຫມາຍຄວາມວ່າ <u>ເວົ້າແນວບໍ່ດີໃຫ້ກັບພຣະເຈົ້າ</u>. ພຣະເຢຊູຖືກກ່າວຫາວ່າ ພຣະອົງຫມິ່ນປມາດພຣະເຈົ້າ ເພາະວ່າພຣະອົງວ່າພຣະອົງມີອຳນາດໃຫ້ອະພັຍບາບໄດ້ (5:21) ແລະເປັນພຣະຄຣິດ ພຣະບຸດຂອງພຣະເຈົ້າ (ມັດທາຍ 27:40). ໃນທຳນອງດຽວກັນ ສະເຕຟາໂນຖືກຂ້າລາວຖືກກ່າວຫາວ່າເວົ້າຫມິ່ນປມາດຕໍ່ໂມເຊແລະພຣະເຈົ້າ (ກິຈການ 6:11).

ພຣະເຢຊູຊົງໄຈ້ແຍກໃຫ້ເຫັນການສະແດງອອກຂອງຜູ້ທີ່ບໍ່ມີຄວາມເຊື່ອ ໃນການກ່າວຕໍ່ສູ້ພຣະອົງແລະພຣະວິນຍານບໍຣິສຸດ. "ຜູ້ໃດທີ່ຈະກ່າວຄຳນຶ່ງຄຳໃດຕໍ່ສູ້ບຸດມະນຸດ" ພຣະອົງຈະຊົງໂຜດອະພັຍໃຫ້ "ແຕ່ຖ້າຜູ້ໃດຈະກ່າວຫມິ່ນປມາດຕໍ່ພຣະວິນຍານບໍຣິສຸດ" ຜູ້ນັ້ນຈະບໍ່ໄດ້ຮັບການໃຫ້ອະພັຍ. ເປໂຕປະຕິເສດວ່າບໍ່ຮູ້ຈັກພຣະເຢຊູສາມເທື່ອ (ລູກາ 22:33, 54-62) ແຕ່ພຣະອົງໃຫ້ອະພັຍລາວແລະຮັບລາວເຂົ້າມາຮັບໃຊ້ພຣະອົງອີກ (ໂຢຮັນ 21:15-17). ຜູ້ໃດທີ່ກ່າວຫມິ່ນປມາດພຣະວິນຍານບໍຣິສຸດຜູ້ນັ້ນຈະມີ "ໂທດຕລອດໄປເປັນນິດ" (ມາຣະໂກ 3:30; ໃຫ້ເບິ່ງມັດທາຍ 12:31-32). ການຫມິ່ນປມາດແມ່ນການປະຕິເສດພຣະເຈົ້າ ການບໍ່ຍອມຮັບຄວາມລອດພົ້ນທີ່ພຣະເຈົ້າປະທານໃຫ້ ການໃຫ້ຄຸນງາມຄວາມດີແກ່ພະຍາມານໃນຜົນງານຂອງພຣະເຈົ້າ. ການກະທຳຢ່າງນັ້ນເປັນການປິດປະຕູໃຫ້ກັບພຣະວິນຍານບໍຣິສຸດຊຶ່ງພາຣະກິດຂອງພຣະອົງນັ້ນແມ່ນກ່າວໂທດຄວາມຜິດບາບແລະບອກໃຫ້ຄົນບາບວ່າພວກເຂົາຕ້ອງການພຣະຜູ້ໂຜດໃຫ້ພົ້ນ. ພຣະອົງຊັກຊວນຄົນບາບໃຫ້ສຳນຶກວ່າພຣະເຢຊູຊົງເປັນພຣະຜູ້ໂຜດໃຫ້ພົ້ນ ແລະແນະນຳໃຫ້ຮູ້ວ່າມີວັນຕັດສິນຄັ້ງສຸດທ້າຍ. ພວກຟາຣີຊາຍມັກຈະກ່າວຫາວ່າຄົນອື່ນເປັນຜູ້ຫມິ່ນປມາດພຣະເຈົ້າ ສຳລັບຕົວພວກເຂົາເອງແລ້ວ ພວກເຂົາປະຕິເສດພາຣະກິດຂອງພຣະວິນຍານບໍຣິສຸດ.

**<u>ພຣະເຢຊູຊົງສັນຍາການຊ່ອຍເຫລືອຂອງພຣະວິນຍານບໍຣິສຸດ</u>** (ລູກາ12:11-12)

ພຣະເຢຊູຊົງຕັກເຕືອນພວກລູກສິດຂອງພຣະອົງໃຫ້ໄວ້ວາງໃຈໃນພຣະເຈົ້າ ແລະ "ຢ່າຄິດອຸກໃຈວ່າຈະແກ້ຕົວຢ່າງໃດ" ເມື່ອພວກເຂົາຖືກນຳໄປຢູ່ຕໍ່ຫນ້າທີ່ປະຊຸມຂອງຊາວຢິວ ສານຂອງຄົນຕ່າງຊາດ ແລະຜູ້ຕັດສິນ. ແທນທີ່ຈະໃຊ້ຄຳວ່າ "ຖ້າວ່າ" ພຣະອົງໃຊ້ຄຳວ່າ "ເມື່ອ" ເພື່ອບອກເຖິງຄວາມທຸກຍາກລຳບາກອັນແສນສາຫັດໃນອະນາຄົດ. ພຣະອົງຊົງບອກພວກເຂົາວ່າພຣະວິນຍານບໍຣິສຸດຈະສອນພວກເຂົາວ່າຄວນຈະເວົ້າຢ່າງໃດ.

ແມ່ນພຣະພອນອັນລົ້ນເຫລືອທີ່ພວກເຮົາໄດ້ຢູ່ໃນແຜ່ນດິນ ສະຫະຣັດອະເມຣິການີ້. ພວກເຮົາມີເສຣີພາບໃນການນັບຖືສາສນາ. ມີຄຣິສຕຽນຫລາຍຄົນບໍ່ມີໂອກາດເຫມືອນດັ່ງພວກເຮົາ. ເຖິງຈະເປັນຢ່າງໃດກໍຕາມ ພຣະເຈົ້າຊົງສະຖິດຢູ່ກັບຜູ້ທີ່ເຊື່ອ ເມື່ອໃດກໍຕາມ ພວກເຮົາຫາກປະເຊີນກັບສິ່ງກີດກັ້ນໃນການເປັນພຍານໃຫ້ກັບພຣະເຢຊູຄຣິດ ໃຫ້ພວກເຮົາມີຄວາມກ້າຫານ.

**<u>ຄຳຖາມ</u>**

1. ເປັນຫຍັງພວກຟາຣີຊາຍຈຶ່ງປະຕິເສດບໍ່ຍອມຮັບວ່າພຣະເຢຊູຊົງເປັນພຣະເຈົ້າທີ່ໄດ້ມາບັງເກີດໃນຄາບຂອງມະນຸດ?
2. ຄຣິສຕຽນສມັຍນີ້ບາງຄັ້ງເປັນຄົນຫນ້າຊື່ໃຈຄົດໃນທຳນອງໃດແດ່?
3. ພວກເຮົາຈະເປັນພຍານໃຫ້ກັບຄົນທີ່ບໍ່ມາໂບດ ເພາະວ່າຄວາມຫນ້າຊື່ໃຈຄົດໄດ້ຢ່າງໃດ?
4. ມີທາງໃດແດ່ທີ່ພວກເຮົາຈະສາມາດຊ່ອຍພີ່ນ້ອງຄຣິສຕຽນທີ່ຖືກຂົ່ມເຫງໃນສມັຍນີ້?
5. ເປັນຫຍັງຈຶ່ງເປັນການຍາກຫລາຍສຳລັບຄຣິສຕຽນຫລາຍຄົນທີ່ຈະໄວ້ວາງໃຈພຣະເຈົ້າຈົນຫມົດຈິດຫມົດໃຈ?

*ສຈ. ບຸນເຮັ່ງ ພົງປຣະພັນ*

# ບົດຮຽນທີ 7
# ຈົ່ງເຝົ້າລະວັງຢູ່

---

**ຂໍ້ພຣະຄັມພີສໍາລັບບົດຮຽນ:** ລູກາ 12:35-48

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ລູກາ 12:35-53

**ຈຸດສໍາຄັນຂອງບົດຮຽນນີ້:** ຜູ້ທີ່ຕິດຕາມພຣະເຢຊູຈະຕ້ອງເຝົ້າລະວັງຢູ່ແລະສັດຊື່ຕໍ່ພຣະອົງ ພວກເຂົາຮູ້ວ່າຈະຕ້ອງໃຫ້ການຕໍ່ພຣະເຈົ້າ.

**ຄໍາຖາມເພື່ອການສໍາຫລວດ:** ທ່ານຮູ້ເມື່ອຢູ່ບໍ່ ຫລື ທ່ານຍ່າງຫລັບທາງຍືນໃນຊີວິດຂອງທ່ານ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊັ່ງຊາເບິ່ງວ່າຂ້າພະເຈົ້າໄດ້ໃຊ້ຊີວິດຢ່າງເຖິງຖອງ ເພື່ອຈະໃຫ້ການຕໍ່ພຣະເຈົ້າ.

## ບົດຮຽນ

### ຄໍານໍາ

ພຣະເຢຊູຊົງສອນກ່ຽວກັບເຣື່ອງຄວາມໂລບແລະຄວາມກັງວົນ. ພຣະອົງເລັ່ງລັດພວກສາວົກຂອງພຣະອົງໃຫ້ຕຽມພ້ອມໃນການກັບມາຂອງພຣະອົງແລະການຕັດສິນ. ພຣະອົງຊົງເຕືອນພວກເຂົາກ່ຽວກັບການໃຫ້ການຕໍ່ພຣະອົງ.

### ພຣະເຢຊູຊົງສອນກ່ຽວກັບເຣື່ອງຄວາມໂລບແລະຄວາມກັງວົນ (12:13-34)

ບົດຮຽນຂອງອາທິດທີ່ຜ່ານມານັ້ນແມ່ນກ່ຽວກັບເຣື່ອງຈົ່ງໄວ້ວາງໃຈໃນພຣະເຈົ້າແລະບໍ່ຕ້ອງຢ້ານ (ລູກາ 12:1-12) ແລະໃນບົດຮຽນຂອງວັນນີ້ ແມ່ນເຫດການທີ່ເກີດຂຶ້ນໃນຄອບຄົວຊຶ່ງເກີດຄວາມບໍ່ພໍໃຈຊຶ່ງກັນແລະກັນຍ້ອນການແບ່ງມູນມໍຣະດົກ. ຊາຍຜູ້ທີ່ບໍ່ພໍໃຈໃນສ່ວນແບ່ງທີ່ຕົນໄດ້ຮັບພະຍາຍາມເອົາພຣະເຢຊູເຂົ້າໄປພົວພັນກັບເຫດການນັ້ນ. ແຕ່ພຣະອົງປະຕິເສດບໍ່ເຂົ້າຂ້າງຜູ້ໃດ. ໃນທໍານອງດຽວກັນນັ້ນ ພຣະອົງສວຍໂອກາດສັ່ງສອນພວກເຂົາກ່ຽວກັບເຣື່ອງຄວາມໂລບ.

ພຣະອົງໃຊ້ຄໍາອຸປມາສັ່ງສອນກ່ຽວກັບເຣື່ອງຂອງຄວາມໂລບ ຊຶ່ງເນັ້ນໃສ່ສາວົກຂອງພຣະອົງ ເພື່ອສອນໃຫ້ພວກເຂົາໄວ້ວາງໃຈໃນພຣະເຈົ້າແລະບໍ່ໃຫ້ມີຄວາມກະວົນກະວາຍເກີນໄປເຖິງປາກທ້ອງ. ຕໍ່ຈາກນັ້ນ ຂໍ້ພຣະທັມທີ່ພວກເຮົາຈະແນໃສ່ແມ່ນຄວາມຈໍາເປັນຂອງຜູ້ທີ່ຈະຕິດຕາມພຣະອົງ ແມ່ນເຝົ້າລະວັງຢູ່ແລະໃຫ້ຕຽມພ້ອມໃນການກັບມາຂອງພຣະຄຣິດ. ພຣະອົງໄດ້ບັນລະຍາຍໂດຍໃຊ້ເຣື່ອງອຸປາມາຂອງງານແຕ່ງງານທີ່ພວກເຂົາຄຸ້ນເຄີຍ.

### ພຣະເຢຊູຊົງສອນກ່ຽວກັບເຣື່ອງຈົ່ງເຝົ້າລະວັງຢູ່ (12:35-40)

ໃນພຣະທັມຕອນນີ້ໃຫ້ເຫັນການຫນຸ່ງຖືຂອງຄົນໃນສມັຍນັ້ນ "ທ່ານທັງຫລາຍຈົ່ງຮັດແອວໄວ້ແລະໄຕ້ໂຄມຂອງທ່ານຢູ່" (12:35) ເຄື່ອງຫນຸ່ງຂອງພວກເຂົາຍາວລ່າມລົງມາກາຍຫົວເຂົ່າ ແລະພວກເຂົາມີຜ້າພັນແອວໄວ້. ເຄື່ອງຫນຸ່ງປະເພດນີ້ຍ່າງແບບຟ້າວງຫລືແລ່ນໄປມາກໍລໍາບາກ. ເມື່ອພວກເຂົາຟ້າວພວກເຂົາດຶງຂຶ້ນມາກາຍຫົວເຂົ່າແລ້ວສອດຂຶ້ນມາພັນໃສ່ກັບຜ້າພັນແອວ ໃຫ້ວາດພາບເບິ່ງຄືກັບພວກເຮົາໃສ່ຜ້າສະຫລົ້ງແລ້ວສອດຕ່ຽວຂຶ້ນມາທັງຫລັງຍາມພວກເຮົາຈະເຮັດວຽກ ຫລັງຈາກແລ້ວວຽກພວກເຮົາກໍປ່ອຍມັນລົງ.

ໂຄມໃນສມັຍນັ້ນມີຫລາຍຂນາດ ແຕ່ລະຫນ່ວຍມີນໍ້າມັນພ້ອມທັງເຫລືອໄວ້ໃສ່ແກ້ວອີກ (ໃຫ້ອ່ານ ມັດທາຍ 25:3). ເຈົ້າຂອງບ້ານຈະຕ້ອງເຝົ້າເບິ່ງແຍງໂຄມໃຫ້ດີ ເພື່ອບໍ່ໃຫ້ໂຄມນັ້ນມອດໄປ. ແຕ່ລະຄືນ ແມ່ບ້ານຈະຕ້ອງລຸກຂຶ້ນມານຶ່ງ

ຫລືສອງເທື່ອ ເພື່ອຕັດໄສ້ຂອງໂຄມທີ່ໄຫມ້ຫມົດແລ້ວ. ໃນສມັຍນັ້ນບໍ່ມີໄມ້ຂີດໄຟ ເມື່ອໂຄມໄຟມອດແລ້ວກໍເປັນການຍາກຫລາຍທີ່ຈະໄຕ້ຂຶ້ນມາໃຫມ່.

ໃນພຣະທັມຕອນນີ້ບໍ່ໄດ້ກ່າວລະອຽດວ່າ ເຈົ້ານາຍຄົນນີ້ເປັນແຂກໃນງານກິນລ້ຽງຫລືວ່າລາວເອງເປັນເຈົ້າບ່າວຂອງງານນັ້ນ. ໃນສມັຍພຣະສັນຍາໃຫມ່ ປົກກະຕິແລ້ວເຈົ້າບ່າວຈະຮັບປະທານອາຫານຮ່ວມກັບເພື່ອນທີ່ໃກ້ຊິດແລະຄົນໃນຄອບຄົວຂອງລາວ. ຫລັງຈາກຮັບປະທານອາຫານແລ້ວ ເຈົ້າບ່າວແລະຝ່າຍເຈົ້າບ່າວໄປຮັບເອົາເຈົ້າສາວແລະຝ່າຍເຈົ້າກັບມາເຮືອນຂອງລາວ ເພື່ອງານສລອງການແຕ່ງງານ. ເວລາຂອງເຈົ້າບ່າວຈະກັບມາພ້ອມເຈົ້າສາວນັ້ນບໍ່ໄດ້ບອກກ່ອນລ່ວງຫນ້າຈັກເທື່ອ.

ງານແຕ່ງດອງຂອງພວກເຂົານັ້ນມີຢູ່ປະມານນຶ່ງຫາສອງອາທິດ. ເພາະວ່າເວລາບໍ່ຈຳກັດ ເຈົ້ານາຍຜູ້ນັ້ນອາດຈະມາຍາມຂ້ອນແຈ້ງກໍໄດ້. ເນື້ອຫາອັນສຳຄັນນັ້ນ ບໍ່ແມ່ນເມື່ອໃດນາຍຈະກັບມາ ແຕ່ຂ້ອຍໃຊ້ຈະຕ້ອງຕຽມພ້ອມເມື່ອຍາມນາຍກັບມາ. ໃນເຣື່ອງອຸປມານີ້ ພຣະເຢຊູຍົກຍ້ອງຂ້ອຍໃຊ້ທີ່ຕຽມພ້ອມແລະຄອຍເຝົ້າການກັບມາຂອງນາຍພວກເຂົາ. ພຣະອົງກ່າວໂທດຂ້ອຍໃຊ້ທີ່ບໍ່ເອົາໃຈໃສ່ແລະບໍ່ຕຽມພ້ອມເມື່ອນາຍມາເຄາະປະຕູ.

ພຣະເຢຊູຊົງກ່າວສິນທະນາກັບສາວົກຂອງພຣະອົງວ່າ ຫລັງຈາກຂ້ອຍໃຊ້ໄດ້ຮັບໃຊ້ນາຍແລ້ວ ຜູ້ເປັນນາຍກັບມາບົວລະບັດຂ້ອຍໃຊ້ຂອງຕົນ. ພຣະອົງຊົງສອນພວກສາວົກຂອງພຣະອົງວ່າ ຜູ້ໃດຮັບໃຊ້ພຣະອົງຜູ້ນັ້ນກໍຈະໄດ້ຮັບການບົວລະບັດຮັບໃຊ້.

ຕໍ່ມາພຣະອົງຊົງໃຊ້ຄຳອຸປມາເຣື່ອງໂຈນເຂົ້າເຮືອນ ເມື່ອໂຈນຜູ້ນັ້ນຮູ້ວ່າເຈົ້າຂອງເຮືອນບໍ່ຢູ່ ກໍເປັນໂອກາດດີຂອງໂຈນ. ຖ້າເຈົ້າຂອງເຮືອນຮູ້ກ່ອນລ່ວງຫນ້າວ່າເວລາໃດໂຈນຄົນນັ້ນຈະມາ ລາວກໍຄົງຈະຕຽມຮັບໄວ້ໄດ້. ເຈົ້າຂອງເຮືອນບໍ່ສາມາດຈະຢັ່ງຮູ້ໄດ້ເວລາຂອງໂຈນຜູ້ຮ້າຍຈະມາເຂົ້າເຮືອນ ແຕ່ເຈົ້າຂອງເຮືອນສາມາດຕຽມຄົນຫລືປ່ຽນກັນຍາມ ເມື່ອໂຈນຜູ້ຮ້າຍມາພວກເຂົາກໍຈະຮັບມືເພື່ອປົກປ້ອງຮັກສາສັບສົມບັດໃນເຮືອນໄດ້.

ເຣື່ອງລາວທີ່ພຣະເຢຊູກ່າວມານີ້ ແມ່ນແນ່ໃສການກັບມາຄັ້ງທີສອງຂອງພຣະອົງ (12:40). ໂປໂລໄດ້ກ່າວເຖິງເຫດການນີ້ໃນພຣະທັມ 1 ເທຊະໂລນີກ 3:13. ເປໂຕໄດ້ຂຽນເຫດການທີ່ຈະເກີດຂຶ້ນນີ້ໄປໃຫ້ຄຣິສຕຽນທີ່ຂາດກຳລັງໃຈ (2 ເປໂຕ 3:10-11). ໂຢຮັນໄດ້ບັນລະຍາຍຈາກນິມິດທີ່ພຣະເຈົ້າໃຫ້ລາວເຫັນ (ພຣະນິມິດ 22:7-17). ຄຣິສຕຽນຄວນຈະຕຽມພ້ອມຢູ່ທຸກອັນທຸກເວລາໃນເຫດການທີ່ຈະເກີດຂຶ້ນນີ້ (2 ເປໂຕ 3:14).

ຄວາມຫມາຍໃນພຣະທັມຕອນນີ້ຈະແປອີກກໍແມ່ນໂບດ ພຣະອົງໄດ້ມອບໂບດນີ້ໃຫ້ກັບຄຣິສຕຽນເປັນຜູ້ເບິ່ງແຍງ ເພື່ອໃຫ້ເປັນບ່ອນປະກາດຂ່າວປະເສີດຈົນກວ່າພຣະອົງຈະກັບມາ. ສະນັ້ນ ເປັນຫນ້າທີ່ຂອງຄຣິສຕຽນທຸກຄົນຈະຕ້ອງຮັບຜິດຊອບໃນພັນທະກິດທີ່ພຣະອົງມອບໄວ້.

ພຣະອົງໄດ້ສະລຸບຄຳອຸປມາໂດຍກ່າວວ່າໃຫ້ຜູ້ຕິດຕາມພຣະອົງເຝົ້າລະວັງຢູ່. ພຣະອົງໃຊ້ຄຳວ່າ "ບຸດມະນຸດ" ຫມາຍຄວາມວ່າ ພຣະອົງເອງຈະກັບມາຢ່າງແນ່ນອນ (ລູກາ 12:40). ເຫດການນັ້ນຈະເກີດຂຶ້ນຢ່າງກະທັນຫັນໂດຍບໍ່ໄດ້ຕັ້ງໃຈ. ອ້າງອີງຕາມພຣະທັມມັດທາຍ 24:36 ໄດ້ກ່າວໄວ້ວ່າ ບໍ່ມີຜູ້ໃດຮູ້ຍາມຫລືໂມງ ມີແຕ່ພຣະເຈົ້າເທົ່ານັ້ນ. ເທວະດາ ຫລືພຣະເຢຊູກໍບໍ່ຮູ້. ພຣະອົງຕຽມພ້ອມຢູ່ສເມີ ເມື່ອໃດພຣະເຈົ້າໃຫ້ຄຳສັ່ງພຣະອົງກໍຈະມາທັນທີ.
ພຣະເຈົ້າຊົງໄດ້ສົ່ງພຣະເຢຊູມາຄັ້ງທີນຶ່ງ (ໂຢຮັນ 3:16) ແລະພຣະເຈົ້າຈະສົ່ງພຣະອົງມາອີກຄັ້ງທີສອງ (ມາຣະໂກ 13:32). ຄວາມແຕກຕ່າງກັນນັ້ນມີຢູ່ວ່າ ຄັ້ງທີນຶ່ງພຣະອົງບໍ່ໄດ້ມາຕັດສິນມະນຸດ ແຕ່ພຣະອົງໄດ້ມາປະທານຄວາມ

ລອດພົ້ນ (ໂຢຮັນ 3:17). ຄັ້ງທີສອງພຣະອົງຈະມາຕັດສິນທັງຄົນເປັນແລະຄົນຕາຍ (ກິຈການ 10:42). ຄັ້ງທີນຶ່ງພຣະອົງມາຊອກແລະມາໂຜດຜູ້ທີ່ຫລົງໃຫ້ພົ້ນ (ລູກາ 19:10). ເມື່ອພຣະອົງກັບມາຄັ້ງທີສອງ ພຣະອົງຈະກັບມາຕັດສິນແຕ່ລະຄົນໃນແຕ່ລະຊົນຊາດ (ມັດທາຍ 25:32).

ພຣະຄັມພີໄດ້ກ່າວໄວ້ວ່າພຣະເຢຊູຈະກັບມາ. ການກັບມານັ້ນແມ່ນບໍ່ພາດຢ່າງແນ່ນອນ. ຜູ້ປະກາດພຣະທັມປອມແລະຜູ້ຫລອກລວງກໍຈະຖືກເປີດເຜີຍ. ໃນພິບຕາດຽວພຣະອົງຈະມາເຫມືອນກັບຕອນຕົ້ນທີ່ພຣະອົງໄປມາຢູ່ໃນໂລກມະນຸດ. ໃນເວລານັ້ນ ຜູ້ໃດກໍບໍ່ມີຂໍ້ແກ້ຕົວ ບໍ່ມີການຕໍ່ລອງຫລືບໍ່ໄດ້ໂອກາດຈະກັບໃຈ. ຜູ້ທີ່ຍອມຮັບວ່າພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນແລະເປັນພຣະຜູ້ເປັນເຈົ້າກ່ອນພຣະອົງຈະກັບມານັ້ນກໍເປັນສຸກ. ຜູ້ທີ່ປະຕິເສດພຣະອົງມາກ່ອນນັ້ນກໍຈະເຕັມໄປດ້ວຍຄວາມຢ້ານກົວ.

ການກັບມາຂອງພຣະເຢຊູໂດຍບໍ່ຄາດຄິດ ບໍ່ແມ່ນພຣະອົງຈອບມາຍາມພວກເຮົາບໍ່ເຝົ້າລະວັງຢູ່. ແທ້ຈິງແລ້ວ ພຣະເຈົ້າຖ່ວງເວລາການກັບມາຂອງພຣະຄຣິດກໍຍ້ອນວ່າພຣະອົງຍັງໃຫ້ໂອກາດຫລາຍໆຄົນ ເພື່ອພວກເຂົາຈະໄດ້ຍິນຂ່າວປະເສີດແລະຮັບເອົາຄວາມລອດພົ້ນ (2 ເປໂຕ 3:9). ເມື່ອຜູ້ປະກາດຂ່າວປະເສີດໄດ້ລາຍງານມາວ່າພຣະວິນຍານບໍຣິສຸດໄດ້ເປີດຕາເປີດໃຈຂອງຄົນຈຳນວນຫລາຍຢູ່ໃນໂລກນີ້. ຂ່າວປະເສີດແຜ່ກວ້າງອອກໄປມີຫລາຍຄົນໄດ້ມາຮັບເອົາພຣະຄຣິດໃຫ້ເປັນພຣະຜູ້ໂຜດໃຫ້ພົ້ນແລະເປັນພຣະຜູ້ເປັນເຈົ້າຂອງພວກເຂົາ ຈຶ່ງເປັນຂ່າວທີ່ຫນ້າຕື່ນຕັນໃຈຫລາຍ.

### <u>ພຣະເຢຊູຊົງສອນກ່ຽວກັບເຣື່ອງການຕັດສິນ</u> (12:41-48)

ເບິ່ງເຫມືອນກັບວ່າເປໂຕບໍ່ຄ່ອຍເຂົ້າໃຈການສົນທະນາກ່ຽວກັບເຣື່ອງການກັບມາຂອງພຣະອົງ. ລາວຈຶ່ງຖາມເພື່ອໃຫ້ແຈ່ມແຈ້ງຂຶ້ນ. ພຣະອົງກ່າວເຣື່ອງນີ້ໃຫ້ພວກສາວົກຂອງພຣະອົງເທົ່ານັ້ນບໍ ຫລືວ່າໃຫ້ຝູງຊົນທີ່ມາຟັງນຳດ້ວຍ? ພຣະອົງບໍ່ໄດ້ຕອບຄຳຖາມຂອງລາວເລີຍ. ພຣະອົງກ່າວເຣື່ອງຂ້ອຍໃຊ້ທີ່ສັດຊື່ແລະຂ້ອຍໃຊ້ທີ່ບໍ່ສັດຊື່ຕໍ່ໄປ. ພຣະອົງເນັ້ນຕື່ມອີກວ່າ ຂ້ອຍໃຊ້ທີ່ສັດຊື່ເຮັດໃຫ້ນາຍພໍໃຈແລະພວກເຂົາກໍຈະໄດ້ຮັບຣາງວັນ ສຳລັບຂ້ອຍໃຊ້ທີ່ບໍ່ສັດຊື່ກໍຈະຖືກລົງໂທດ.

ກິຣິຍາທ່າທີຂອງຂ້ອຍໃຊ້ປາກົດໃຫ້ເຫັນຢ່າງແຈ່ມແຈ້ງ. ຂ້ອຍໃຊ້ທີ່ສັດຊື່ເຂົາອຸທິດຕົນໃຫ້ນາຍຂອງເຂົາ. ພວກເຂົາເຊື່ອຟັງແລະເປັນຜູ້ທີ່ກາງຕໍ່ໄດ້. ຂ້ອຍໃຊ້ທີ່ບໍ່ສັດຊື່ບໍ່ເອົາໃຈໃສ່ກັບນາຍຂອງພວກເຂົາ. ພວກເຂົາບໍ່ມີຄວາມອົດທົນເມື່ອນາຍຂອງພວກເຂົາກັບມາຊ້າ ພວກເຂົາເອົາປຽບເອົາລັດຂ້ອຍໃຊ້ຄົນອື່ນ ພວກເຂົາບໍ່ຮັບຜິດຊອບທັງປອງຮ້າຍຜູ້ອື່ນອີກດ້ວຍ. ພວກເຂົາມີຄວາມເຈຕນາບໍ່ເຊື່ອຟັງ.

ພຣະເຢຊູມ້ວນທ້າຍຄຳອຸປມາໂດຍຊີ້ໃຫ້ເຫັນວ່າ ການລົງໂທດຕາມການຮັບຮູ້ຂອງຂ້ອຍໃຊ້ທີ່ບໍ່ສັດຊື່ກຳລັງຈະຕາມມາ. ຜູ້ທີ່ບໍ່ຮູ້ຈັກແລ້ວໄປເຮັດສິ່ງທີ່ສົມຄວນຖືກລົງໂທດ ພວກເຂົາຈະໄດ້ຮັບໂທດຫນ້ອຍກວ່າຂ້ອຍໃຊ້ທີ່ຮູ້ເຈຕນາຂອງນາຍແລະປະຕິເສດບໍ່ເຊື່ອຟັງນາຍຂອງຕົນ.

ຜູ້ທີ່ຕິດຕາມພຣະຄຣິດຄວນຈະເຮັດຢ່າງໃດໃນຂະນະທີ່ລໍຄອຍການກັບມາຂອງພຣະອົງ? ບໍ່ແມ່ນເວລາມາເຮັດໃຫ້ຕົກໃຈ. ແມ່ນເວລາໃຫ້ມາຈັດຕຽມ. ບໍ່ແມ່ນເວລາກຽດຄ້ານແຕ່ແມ່ນເວລາໃຫ້ຄອງຄອຍ. ບໍ່ແມ່ນເວລາທີ່ບໍ່ເຫນັງບໍ່ຕີງແຕ່ແມ່ນເວລາໃຫ້ເຝົ້າລະວັງຢູ່ແລະຕຽມພ້ອມ. ບໍ່ແມ່ນເວລາມາເພື່ອຄວາມສັມພັນອັນເຜີນໆກັບພຣະເຢຊູ ແມ່ນເວລາຕັດສິນໃຈໃຫ້ກັບພຣະອົງ.

ຄຳຕອບຈາກຄຳຖາມທີ່ໄດ້ຖາມວ່າຈະມີການຈັດຕຽມອັນໃດແດ່ໃນການກັບມາຂອງພຣະເຢຊູ ໃຫ້ຕຶກຕອງຂໍ້ຄວາມດັ່ງຕໍ່ໄປນີ້: ໃຫ້ເຊື່ອຫມັ້ນໃນພຣະເຢຊູເພື່ອຄວາມລອດພົ້ນຂອງທ່ານ; ໃຫ້ຮັບສາລະພາບໃນຄວາມຜິດບາບທຸກເວລາ ເພື່ອ

ຈະໄດ້ຮັບການໃຫ້ອະພັຍບາບຈາກພຣະເຈົ້າ; ເປັນພຍານໃຫ້ກັບຄົນອື່ນ; ໃຫ້ມີພາກສ່ວນໃນໂບດ; ນຳຄົນອື່ນໃຫ້ເຂົ້າມາໃນຄອບຄົວຂອງພຣະເຈົ້າ; ດຳເນີນຊີວິດໃຫ້ມີການຮັບຜິດຊອບ;   ໃຫ້ຊັ່ງຊາເບິ່ງການໃຊ້ເວລາເງິນ ແລະສະພາບການຂອງຊີວິດຢູ່ຕໍ່ໜ້າພຣະເຈົ້າ.

ທຸກໆຊີວິດຈະຕ້ອງມີການຮັບຜິດຊອບ ເໝືອນກັນກັບຜູ້ຈັດການຈະຕ້ອງໃຫ້ການຕໍ່ນາຍຂອງຕົນ. ຂອງປະທານທີ່ພຣະເຈົ້າໃຫ້ທ່ານມີຫຍັງແດ່? ທ່ານໃຊ້ຂອງປະທານໃຫ້ເປັນທີ່ຖວາຍກຽດແກ່ພຣະເຈົ້າບໍ່?   ພຣະເຈົ້າໄດ້ປະທານຄວາມສາມາດໃຫ້ທ່ານເປັນຄົນຄ້າຂາຍບໍ່? ທ່ານໄດ້ລົງທຶນໃນພາຣະກິດຂອງພຣະເຈົ້າບໍ່?   ພຣະເຈົ້າໄດ້ປະທານເຮືອນໃຫ້ທ່ານເພື່ອທ່ານຈະໄດ້ຊ່ອຍຜູ້ທີ່ຂາດອາຫານຫລືທີ່ເພິ່ງບໍ່?  ໃຫ້ຈຳໄວ້ວ່າຂ້ອຍໃຊ້ທີ່ບໍ່ສັດຊື່ຢ້ານພຣະຄຣິດກັບມາ ແຕ່ຂ້ອຍໃຊ້ຜູ້ທີ່ສັດຊື່ຍິນດີຕ້ອນຮັບການກັບມາຂອງພຣະອົງ.

**<u>ຄຳຖາມ</u>**

1. ຖ້າຫາກວ່າທ່ານຮູ້ວ່າພຣະເຢຊູຈະກັບມາ ໒ ໂມງຕອນບ່າຍໃນວັນອັງຄານທີ່ຈະມານີ້   ຊີວິດຂອງທ່ານຈະມີຄວາມແຕກຕ່າງຢ່າງໃດ?

2. ທ່ານຈະສະແດງອອກໃຫ້ເຫັນວ່າທ່ານມີຄວາມໝັ້ນໃຈວ່າພຣະເຢຊູຈະກັບມາອີກຄັ້ງນຶ່ງຢ່າງໃດ?

3. ທ່ານຄິດວ່າເປັນຫຍັງບໍ່ຄ່ອຍມີຄວາມສົນໃຈໃນການກັບມາຂອງພຣະເຢຊູແລະການພິພາກສາ?

4. ນອກເໜືອໄປຕາມຄຳແນະນຳໃນບົດຮຽນແລ້ວ ມີຫຍັງອີກແດ່ທີ່ຈະຈັດຫາໃນການຕຽມຕົວທີ່ຈະພົບກັບພຣະເຈົ້າ?

5. ຖ້າຫາກວ່າຄຣິສຕຽນມີຄວາມຕື່ນເຕັ້ນໃນການກັບມາຂອງພຣະເຢຊູຈະເປັນຜົນສະທ້ອນໃຫ້ເຫັນໃນເຮືອນ,ໃນທີ່ທຳງານ, ໃນໂບດຢ່າງໃດ?

*ສຈ. ບຸນເຮັ່ງ ພົງປຣະພັນ*

# ບົດຮຽນທີ 8
# ເນັ້ນໃນສິ່ງທີ່ສຳຄັນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 13:10-17
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ລູກາ 13:10-17
**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ຕິດຕາມພຣະເຢຊູຈະຕ້ອງເນັ້ນເຣື່ອງການຊ່ວຍເຫລືອຄົນ, ບໍ່ແມ່ນເຣື່ອງຮັກສາກົດ, ເຖິງວ່າການເຮັດສິ່ງນັ້ນຈະຖືກຕໍ່ຕ້ານ.
**ຄຳຖາມເພື່ອການສຳຣວດ:** ເວລາໃດທີ່ການຊ່ວຍເຫລືອຄົນສຳຄັນກວ່າການຮັກສາກົດທາງສາສນາ ແລະກົດທາງວັທນະທັມ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ວ່າກົດທາງສາສນາ ແລະກົດທາງວັທນະທັມອັນໃດແດ່ທີ່ກີດກັ້ນບໍ່ໃຫ້ຂ້ອຍຊ່ວຍເຫລືອຄົນ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວພຣະເຈົ້າມີສ່ວນໃນການຕັດສິນໃຈ ແລະຮັບໃຊ້.
- ເຫັນຄຸນຄ່າຂອງທຸກຄົນວ່າໄດ້ຖືກສ້າງຕາມພຣະສາຍາຂອງພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະຄຣິດເພື່ອຊ່ວຍຄວາມຕ້ອງການດ້ານຮ່າງກາຍ, ດ້ານຈິດວິນຍານ, ແລະດ້ານຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

## ຄຳນຳ

ພຣະເຢຊູເຮັດຜິດກົດເຣື່ອງວັນຊະບາໂຕເພື່ອປິ່ນປົວຍິງຄົນນຶ່ງຊຶ່ງໄດ້ປ່ວຍມາເປັນເວລາສິບແປດປີ ເພາະພຣະອົງຊົງເຫັນວ່າການຊ່ວຍເຫລືອຄົນນັ້ນສຳຄັນກວ່າການຮັກສາກົດເຣື່ອງວັນຊະບາໂຕ.

**ພຣະເຢຊູຊົງລະເມີດກົດຂອງວັນຊະບາໂຕ** ລູກາ13:10-11
ການຮັກສາກົດຂອງວັນຊະບາໂຕຢ່າງເຄັ່ງຄັດມີຄວາມສຳຄັນສຳລັບຊາວຢິວ. ການປິ່ນປົວພຍາດໃນວັນຊະບາໂຕເປັນເຣື່ອງຂັດແຍ່ງທີ່ສຳຄັນທີ່ສຸດຣະຫວ່າງພຣະເຢຊູແລະພວກທີ່ຕໍ່ຕ້ານພຣະອົງ(ມາຣະໂກ 3:1-6; ລູກາ 6:1-11;13:10-17; 14:1-6; ໂຢຮັນ 9:1-16). ປາກົດວ່າພວກຕໍ່ຕ້ານພາກັນສັງເກດເບິ່ງພຣະອົງໃນວັນຊະບາໂຕຫລາຍກວ່າວັນອື່ນໆ. ໃນຂະນະທີ່ພວກເຂົາຫາທາງໃສ່ຮ້າຍວ່າພຣະເຢຊູໄດ້ທຳລາຍພຣະບັນຍັດ, ພວກເຂົາໄດ້ພິພາກສາຜູ້ທີ່ຈະມາເຮັດໃຫ້ພຣະບັດຍັດເຫລົ່ານັ້ນສຳເຣັດ (ມັດທາຍ 5:17).

ເຫດການໃນຕອນນີ້ເກີດຂຶ້ນໃນຂະນະທີ່ພຣະເຢຊູຊົງສັ່ງສອນຢູ່ທີ່ໂຮງທັມມະເທສນາ. ພວກເຖົ້າແກ່ແລະຜູ້ປົກຄອງເປັນຜູ້ຮັບຜິດຊອບໂຮງທັມແຕ່ລະບ່ອນ. ເຂົາເຈົ້າມີໜ້າທີ່ໃນການຈັດຫາຄຣູສອນເພື່ອເຮັດພິທີທາງສາສນາ. ແຕ່ລະສັປດາ

ຈະມີການອ້ອນວອນອະທິຖານ, ການອ່ານຈາກປຶ້ມກົດບັນຍັດແລະຈາກປຶ້ມຜູ້ປະກາດພຣະທັມ, ບົດເທສນາ ຫລືການປາຖະກະຖາ, ແລະການໃຫ້ພອນ.

ປາກົດວ່າພຣະເຢຊູໄດ້ເປັນແຂກຮັບເຊີນສຳລັບການສອນໃນມື້ນີ້. ໃນຂະນະທີ່ພຣະອົງກຳລັງສອນຢູ່ນັ້ນ, ພຣະອົງກໍສັງເກດເຫັນຍິງຫລັງກົ່ງຄົນນຶ່ງ. ພຣະທັມຕອນນີ້ໄດ້ບອກວ່າ ນາງໄດ້ຢູ່ໃນສະພາບນີ້ມາເປັນເວລາເຖິງສິບແປດປີແລ້ວ. ພຣະເຢຊູຊົງເກີດຄວາມສົງສານຕໍ່ນາງ. ພຣະເຢຊູຊົງເມດຕາສົງສານຄົນທັງຫລາຍທີ່ຖືກຂົ່ມເຫງແລະຊ່ວຍຕົວເອງບໍ່ໄດ້. ສຳລັບພຣະອົງພວກເຂົາປຽບເໝືອນກັບລູກແກະທີ່ຂາດຜູ້ລ້ຽງ (ມັດທາຍ 9:36). ໃນການຮັບໃຊ້ຂອງພຣະອົງ, ພຣະເຢຊູຊົງປິ່ນປົວຄົນປ່ວຍ (ມັດທາຍ 14:13-14). ພຣະອົງຊົງປົວຄົນເປັນຂີ້ທູດ (ມາຣະໂກ 1:40-41). ເພາະຄວາມສົງສານພຣະອົງໄດ້ຊົງລ້ຽງຄົນສີ່ພັນຄົນ (ມັດທາຍ 15:32-38).

ພຣະເຢຊູຊົງສົງສານພວກຜູ້ຍິງຫລາຍທີ່ສຸດ ເພາະພວກເຂົາເປັນຜູ້ຖືກຕ້ອງຫ້າມຫລາຍໆຢ່າງໃນສັງຄົມແລະໃນພິທີທາງສາສນາ. ພຣະເຢຊູບໍ່ໄດ້ຊົງລໍຖ້າໃຫ້ຍິງຫລັງກົ່ງອອກມາຫາພຣະອົງ, ແຕ່ພຣະອົງຊົງເອີ້ນເອົານາງອອກມາຈາກຊຸມຊົນ. ການກະທຳເຊັ່ນນີ້ອາດຈະສ້າງຄວາມຢ້ານກົວ, ຄວາມອາຍ, ຫລືຄວາມສົງສັຍໃຫ້ກັບຍິງຄົນນັ້ນ. ນາງບໍ່ໄດ້ຄາດຝັນວ່າຈະເຫັນສິ່ງອັສຈັນທີ່ຈະເກີດຂຶ້ນກັບຕົນເອງ. ນາງເອງກໍບໍ່ຮູ້ວ່າລາວກຳລັງຢູ່ຕໍ່ໜ້າແພດຜູ້ປະເສີດໃນມື້ນັ້ນ.

**<u>ພຣະເຢຊູຊົງປິ່ນປົວຍິງຫລັງກົ່ງ</u>** ລູກາ13:12-14

ເພື່ອຕອບການຊົງເອີ້ນ, ຍິງຫລັງກົ່ງກໍຍັບເຂົ້າມາຫາພຣະເຢຊູ. ພຣະເຢຊູຊົງປະກາດວ່າ "ນາງເອີຍ, ນາງໄດ້ພົ້ນຈາກພຍາດແລ້ວ." ໃນທັນໃດນັ້ນຣິດອຳນາດຂອງພຣະເຈົ້າກໍໄດ້ທຳລາຍອຳນາດຂອງຊາຕານທີ່ຜູກມັດຍິງຄົນນັ້ນຢູ່. ແລ້ວພຣະເຢຊູຊົງວາງພຣະຫັດໃສ່ນາງ ແລະຣິດອຳນາດຂອງພຣະອົງຊົງເຮັດໃຫ້ນາງຢຽດຊື່ໄດ້.

ຍິງຄົນນີ້ສາມາດເຮັດໃນສິ່ງທີ່ຕົນເຮັດບໍ່ໄດ້ມາເປັນເວລາສິບແປດປີ; ຄວາມຍິນດີໄດ້ເກີດຂຶ້ນພາຍໃນໃຈຂອງນາງແລະນາງກໍໄດ້ສັຣເສີນພຣະເຈົ້າຕໍ່ໜ້າຝູງຊົນທັງຫລາຍ, ທັ້ງໆທີ່ນາງຍັງບໍ່ຮູ້ວ່າພຣະເຢຊູແມ່ນໃຜ. ນາງອາດຈະເຂົ້າໃຈວ່າພຣະອົງເປັນພຽງຕົວແທນຜູ້ນຶ່ງຂອງພຣະເຈົ້າເທົ່ານັ້ນທີ່ມາປິ່ນປົວພຍາດຂອງນາງ.

ໃນຂະນະທີ່ຍິງຄົນນັ້ນກຳລັງຊົມຊື່ນຍິນດີແລະສັຣເສີນພຣະເຈົ້າ, ນາຍໂຮງທັມກໍເກີດຄວາມຄັດໃຈຂຶ້ນມາວ່າເປັນຫຍັງພຣະເຢຊູຈຶ່ງຊົງໂຜດໃຫ້ຄົນດີພຍາດໃນວັນຊະບາໂຕ. ຄວາມຈິງແລ້ວການປົວພຍາດເປັນໜ້າທີ່ຂອງພວກນາຍແພດແລະການປິ່ນປົວຄົນປ່ວຍໃນວັນຊະບາໂຕກໍເປັນສິ່ງທີ່ຖືກຕ້ອງຫ້າມ, ຍົກເວັ້ນແຕ່ເຣື່ອງການເປັນການຕາຍ. ແຕ່ປາກົດວ່າ ນາຍໂຮງທັມຜູ້ນີ້ບໍ່ໄດ້ຕໍ່ສູ້ກັບພຣະເຢຊູໂດຍກົງ, ແຕ່ເຂົາໄດ້ເວົ້າກັບຝູງຊົນທີ່ຢູ່ໃນໂຮງທັມນັ້ນ. ລາວກ່າວວ່າ "ໃນຫົກວັນນີ້ຈົ່ງມາໃຫ້ດີພຍາດ ແຕ່ວ່າຢ່າໄດ້ມາໃນວັນຊະບາໂຕ." ລາວໝາຍຄວາມວ່າການກະທຳຂອງພຣະເຢຊູໃນຕອນນີ້ ຜິດກົດຂອງວັນຊະບາໂຕ ເພາະການປ່ວຍຂອງຍິງຄົນນີ້ບໍ່ແມ່ນເຣື່ອງການເປັນການຕາຍ. ນາຍໂຮງທັມຜູ້ນີ້ຍັງບໍ່ເຂົ້າໃຈວ່າສິ່ງອັສຈັນທີ່ເກີດຂຶ້ນນັ້ນເປັນວຽກງານຂອງພຣະເຈົ້າ; ເຂົາຄິດວ່າສິ່ງນີ້ເປັນເຣື່ອງທັມມະດາທີ່ເກີດຂຶ້ນໄດ້ທຸກມື້. ເປັນຫຍັງຈິດໃຈຂອງເຂົາຈຶ່ງດ້ານເຖິງຂນາດນັ້ນ?

**<u>ພຣະເຢຊູຊົງເປີດໜ້າພວກຄົນໜ້າຊື່ໃຈຄົດ</u>** ລູກາ13:15-17

ພຣະເຢຊູບໍ່ຊົງພໍພຣະທັຍໃນທ່າທີຂອງນາຍໂຮງທັມ ເພາະພຣະບັນຍັດບໍ່ມີເຈຕນາທີ່ຈະຜູກມັດຜູ້ຄົນທັງຫລາຍທີ່ຕ້ອງການຄວາມຊ່ວຍເຫລືອ. ພຣະອົງຊົງເອີ້ນນາຍໂຮງທັມແລະຜູ້ທີ່ບໍ່ເຫັນພ້ອມກັບພຣະອົງວ່າ "ພວກໜ້າຊື່ໃຈຄົດ." ພວກເຂົາເປັນຜູ້ສະແດງຄວາມຊອບທັມ ແຕ່ພວກເຂົາບໍ່ມີຄວາມຊອບທັມໃນຕົວເອງ. ພວກເຂົາພາກັນນະມັສການພຣະເຈົ້າ

ແຕ່ບໍ່ຍອມຮັບສິ່ງອັສຈັນທີ່ພຣະອົງໄດ້ຊົງເຮັດຖ້າມກາງພວກເຂົາ. ພວກເຂົາພາກັນສົນໃນແຕ່ເຣື່ອງການຮັກສາກົດວິນັຍ ແທນທີ່ຈະພາກັນຊ່ວຍເຫລືອປະຊາຊົນຜູ້ກຳລັງຢູ່ໃນຄວາມລຳບາກ.

ພຣະເຢຊູຮູ້ວ່າພວກເຂົາກໍໄດ້ເຮັດພັນທະກິດບາງຢ່າງໃນວັນຊະບາໂຕ ເຊັ່ນການຈູງງົວແລະລໍໄປກິນນ້ຳ ຊຶ່ງກົດບໍ່ໄດ້ຫ້າມ. ແຕ່ພຣະອົງຊົງເວົ້າໃສ່ພວກເຂົາວ່າ ພວກເຂົາໄດ້ເຫັນຊັບສົມບັດດີກວ່າມະນຸດ ເພາະພວກເຂົາໄດ້ຈັບຄວາມຜິດຕໍ່ພຣະອົງທີ່ໄດ້ປິ່ນປົວຍິງ "ຜູ້ເປັນລູກຫລານຂອງອັບຣາຮາມ" (13:16). ການເປັນ "ລູກຫລານຂອງອັບຣາຮາມ" ມີຄວາມໝາຍແນວໃດ?

ເຣື່ອງເຊື້ອສາຍເປັນເຣື່ອງສຳຄັນຫລາຍສຳລັບຊົນຊາດຢິວ. ພຣະເຈົ້າໄດ້ຊົງສັນຍາກັບອັບຣາຮາມວ່າລູກຫລານຂອງເຂົາຈະໄດ້ເປັນເຈົ້າຂອງແຜ່ນດິນ ແລະຈະໄດ້ຮັບພຣະພອນຜ່ານເຂົາ (ປະຖົມການ 12:3). ຕະກຸນເປັນເຣື່ອງສຳຄັນສຳລັບພວກຜູ້ນຳທາງສາສນາ; ເພາະການສືບເຊື້ອສາຍນັ້ນເອງ ພວກເຂົາໄດ້ກາຍເປັນລູກຂອງພຣະເຈົ້າ (ໂຢຮັນ 8:33). ຄົນຢິວຄິດວ່າພວກເຂົາທີ່ເປັນເຊື້ອສາຍຂອງອັບຣາຮາມມີຄວາມສຳຄັນຫລາຍກວ່າຊົນຊາດອື່ນໆ.

ການເອີ້ນຍິງຄົນນີ້ ວ່າ "ລູກຫລານຂອງອັບຣາຮາມ," ພຣະເຢຊູໄດ້ເຕືອນພວກເຂົາເຖິງເຣື່ອງເຊື້ອສາຍ ແລະຍິງຜູ້ນີ້ກໍເປັນເຄືອຍາດຂອງພວກເຂົາເຊັ່ນກັນ. ພວກທີ່ຕໍ່ສູ້ພຣະອົງພາກັນເກີດຄວາມລະອາຍ (13:17) ເພາະພຣະເຢຊູໄດ້ເປີດໜ້າພວກເຂົາທັງຫລາຍຕໍ່ໜ້າຊຸມຊົນ. ຄວາມຈິງແລ້ວພວກເຂົາກໍຄື "ພວກຄົນໜ້າຊື່ໃຈຄົດ" ນັ້ນເອງ

## ບົດຮຽນສຳລັບພວກເຮົາ

- ພວກເຮົາມີຄວາມຫວັງສເມີ ບໍ່ວ່າສະຖານະການເປັນສິ່ງທີ່ໜ້າທໍ້ໃຈ ຫລືວ່າເຮົາໄດ້ລໍຄຳຕອບຂອງການອ້ອນວອນມາດົນແລ້ວກໍຕາມ.
- ພຣະເຢຊູຊົງມີຄວາມສົງສານເມື່ອພຣະອົງພົບຄົນທັງຫລາຍທີ່ຊ່ວຍຕົວເອງບໍ່ໄດ້. ພວກເຂົາຈະຕ້ອງເຫັນຄົນວ່າສຳຄັນກວ່າການຮັກສາກົດວິນັຍ. ກົດເປັນເຣື່ອງຈຳເປັນສຳລັບສັງຄົມ ແຕ່ກົດຈະຕ້ອງຖືກດັດແປງເພື່ອຈະໄດ້ຊ່ວຍຄົນທີ່ກຳລັງມີຄວາມຕ້ອງການ.
- ພວກເຮົາຈະຕ້ອງຕຽມພ້ອມເມື່ອພຣະເຢຊູຄຣິດຊົງປາກົດມາຢູ່ທ່າມກາງການນະມັສການຂອງເຮົາ. ພຣະອົງຊົງກ່າວວ່າເວລາພວກເຮົາສອງ ຫລືສາມຄົນພົບກັນໃນພຣະນາມຂອງພຣະອົງ ພຣະອົງຈະຊົງຢູ່ທ່າມກາງພວກເຮົາ.
- ພວກເຮົາຈົ່ງຍິນດີເຣື່ອງເຊື້ອຊາດຂອງພວກເຮົາ ແຕ່ຢ່າລືມວ່າສິ່ງນັ້ນບໍ່ໄດ້ເຮັດໃຫ້ເຮົາດີກວ່າຄົນອື່ນໃນສາຍພຣະເນດຂອງພຣະເຈົ້າ. ພວກເຮົາແຕ່ລະຄົນສາມາດທີ່ຈະເຂົ້າເຖິງພຣະເຈົ້າໄດ້ຜ່ານທາງພຣະເຢຊູ.
- ພວກເຮົາຈົ່ງສແວງຫາທຸກວິທີທາງທີ່ຈະສັຣເສີນພຣະຜູ້ເປັນເຈົ້າ.

## ຄຳຖາມ:

1. ທ່ານເຄີຍໄດ້ຮັບສິ່ງອັສຈັນເຣື່ອງການປົວພຍາດບໍ່?

2. ພຣະເຢຊູຊົງມີສ່ວນແນວໃດໃນເຣື່ອງຢາປົວພຍາດໃນສມັຍນີ້?

3. ເຣື່ອງຂອງຜູ້ຍິງໃນບົດຮຽນນີ້ຈະແປກຕ່າງແນວໃດແດ່ ຖ້ານາງປ່ອຍໃຫ້ພຍາດຂອງຕົນເປັນອຸປສັກໃນການທີ່ຈະໄປນະມັສການພຣະເຈົ້າ?

4. ເວລາໃດເປັນເວລາທີ່ງ່າຍສຳລັບທ່ານໃນການສັຣເສີນພຣະເຈົ້າ? ເວລາໃດເປັນເວລາທີ່ຍາກສຳລັບທ່ານໃນການສັຣເສີນພຣະເຈົ້າ?

5. ມີກິດທາງສາສນາ ຫລືທາງວັທນະທັມແນວໃດແດ່ທີ່ເປັນສິ່ງກີດກັ້ນບໍ່ໃຫ້ທ່ານໄດ້ຊ່ວຍຄົນທັງຫລາຍ?

*ສຈ. ດຣ. ສີດນີ ຄານ*

# ບົດຮຽນທີ 9
# ສລອງພຣະຄຸນສຳລັບທຸກຄົນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 15:11-32
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 15
**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ຕິດຕາມພຣະເຢຊູຈະຕ້ອງເຂົ້າໃຈວ່າພຣະຄຸນພຣະເຈົ້າແມ່ນສຳລັບທຸກໆຄົນ ບໍ່ວ່າພວກເຂົາເຈົ້າຈະຢູ່ໃນຖານະໃດກໍຕາມ.
**ຄຳຖາມເພື່ອການສຳຣວດ:** ທ່ານເຄີຍຄິດບໍ່ວ່າ ອາດຈະມີບາງຄົນທີ່ພຣະເຈົ້າບໍ່ຊົງຮັກເລີຍ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອພິຈາຣະນາເບິ່ງທ່າທີແລະການປະພຶດຂອງຂ້ອຍກັບຄົນທົ່ວໄປວ່າມັນສອດຄ່ອງກັບຄວາມເຂົ້າໃຈທີ່ວ່າພຣະຄຸນພຣະເຈົ້າແມ່ນສຳລັບທຸກໆຄົນ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ປະກາດຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວພຣະເຈົ້າມີສ່ວນໃນການຕັດສິນໃຈ ແລະຮັບໃຊ້.
- ເຫັນຄຸນຄ່າຂອງທຸກຄົນວ່າໄດ້ຖືກສ້າງຕາມພຣະສາຍາຂອງພຣະເຈົ້າ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

## ຄຳນຳ

ຈາກຄຳອຸປມາເຣື່ອງພໍ່ແລະລູກຊາຍສອງຄົນຂອງລາວ, ພຣະເຢຊູຊົງໃຫ້ຕົວຢ່າງເຣື່ອງພຣະຄຸນພຣະເຈົ້າສຳລັບຄົນທັງຫລາຍທີ່ບໍ່ມີຄຸນຄ່າ ແລະບໍ່ໜ້າຮັກ. ພຣະເຈົ້າຊົງຕ້ອນຮັບຜູ້ທີ່ສັງຄົມລັງກຽດດ້ວຍຄວາມຊົມຊື່ນຍິນດີ.

ພຣະເຢຊູຊົງເປັນຄຣູຜູ້ຊຳນານ. ຄວາມສຳເຣັດໃນການສັ່ງສອນຂອງພຣະອົງແມ່ນມາຈາກການໃຊ້ຄຳອຸປມາຊຶ່ງອອກມາຈາກທັມມະຊາດ ຫລືສະພາບການທີ່ຜູ້ຟັງຄຸ້ນເຄີຍ. ເຣື່ອງຕ່າງໆທີ່ພຣະອົງຊົງເລົ່າ ສ້າງຄວາມສົນໃຈ, ຊ່ວຍໃຫ້ສົນໃຈເຣື່ອງ, ແລະພາໃຫ້ຄິດ. ບາງເຣື່ອງກໍສ້າງຄວາມຮູ້ສຶກ ຫລືເຮັດໃຫ້ຜູ້ຟັງບໍ່ສະບາຍໃຈ. ຄຳອຸປມາຂອງພຣະເຢຊູຍັງຊ່ວຍຜູ້ຟັງໃຫ້ໄດ້ໃຊ້ຄວາມຄິດ ແລະໃຫ້ພິຈາຣະນາຫລາຍໆວິທີທາງ ກ່ອນທີ່ພວກເຂົາຈະສລູບຜົນ.

### ພຣະເຢຊູຊົງສັ່ງສອນເຣື່ອງຣາຊອານາຈັກພຣະເຈົ້າ

ຫລັງຈາກປິ່ນປົວຜູ້ຍິງຫລັງກົ່ງແລ້ວ (ລູກາ 13:10-17), ພຣະເຢຊູກໍເດີນທາງຕໍ່ໄປຍັງກຸງເຢຣູຊາເລັມ. ໃນຣະຍະການເດີນທາງ, ພຣະອົງໄດ້ຊົງໃຫ້ຕົວຢ່າງສອງເຣື່ອງກ່ຽວກັບການເຕີບໃຫຍ່ຢ່າງງຽບໆຂອງພຣະຣາຊອານາຈັກພຣະເຈົ້າ ຄືເຣື່ອງແກ່ນຜັກກາດ ແລະເຣື່ອງເຊື້ອແປ້ງ (13:18-21). ພຣະອົງບໍ່ຊົງຕອບຄຳຖາມແບບກົງໆ ແຕ່ຊົງ

ຕອບຄຳຖາມຂອງຜູ້ຟັງດ້ວຍຄຳຖາມ. ຈາກຄຳຖາມທີ່ວ່າ "ຜູ້ທີ່ຈະພົ້ນມີແຕ່ໜ້ອຍຄົນຫລື?" ພຣະອົງຊົງຕອບວ່າ ທຸກຄົນຈະຕ້ອງພິສູດຕົວເອງວ່າໄດ້ມີຄວາມສຳພັນສ່ວນຕົວກັບພຣະເຈົ້າຫລືບໍ່ (13:22-30). ພວກຟາຣີຊາຍບາງຄົນໄດ້ເຕືອນພຣະເຢຊູບໍ່ໃຫ້ໄປກຸງເຢຣູຊາເລັມ, ແຕ່ພຣະອົງບໍ່ຊົງຍອມປ່ຽນແຜນທີ່ຈະນຳພຣະອົງໄປເຖິງໄມ້ກາງແຂນ. ລູກາບົດທີ 13 ຈົບລົງດ້ວຍຄວາມໂສກເສົ້າຂອງພຣະເຢຊູທີ່ຊົງມີຕໍ່ກຸງເຢຣູຊາເລັມ (13:31-35).

ທ່ານລູກາໄດ້ຂຽນເຣື່ອງການຊົງປົວພຍາດໃນວັນຊະບາໂຕ (14:1-6), ຄຳສັ່ງສອນຂອງພຣະເຢຊູເຣື່ອງການຖ່ອມຕົວ (14:7-14), ເຣື່ອງການກິນລ້ຽງໃຫຍ່ (14:15-24), ແລະເຣື່ອງຄວາມເສັຽສລະໃນການເປັນສິດ (14:25-35).

<u>ພຣະເຢຊູຊົງສອນເຣື່ອງຄວາມຍິນດີທີ່ໄດ້ຂອງເສັຽ ຄືນມາ</u> ລູະກາ15:1-10

ຄົນທັງຫລາຍໄດ້ເຕົ້າໂຮມກັນເພື່ອຈະຟັງພຣະເຢຊູ. ໃນທີ່ນັ້ນກໍມີພວກຄົນເກັບພາສີ, ຄົນນອກສິນທັມ (15:1), ພວກຟາຣີຊາຍ, ແລະພວກນັກທັມ (15:2). ແຕ່ພວກຟາຣີຊາຍແລະພວກນັກທັມສ່ວນຫລາຍແມ່ນມາເພື່ອຕຳໜິພຣະເຢຊູວ່າພຣະອົງຊົງຢູ່ຮ່ວມກິນກັບຄົນເກັບພາສີ ແລະຄົນນອກສິນທັມ.

ເພື່ອຕອບຄຳຕຳໜິ, ພຣະເຢຊູຊົງເວົ້າຄຳອຸປມາສາມເຣື່ອງເພື່ອສະແດງໃຫ້ເຫັນເຖິງຄວາມພຍາຍາມ ແລະຄວາມຍິນດີເມື່ອໄດ້ພົບສິ່ງທີ່ເສັຽໄປ. ເຣື່ອງທີນຶ່ງແມ່ນເຣື່ອງຄົນລ້ຽງແກະທີ່ຊອກຫາ ແລະພົບແກະນຶ່ງໂຕທີ່ເສັຽໄປຈາກແກະຮ້ອຍໂຕ. ເຣື່ອງທີສອງແມ່ນເຣື່ອງຍິງຄົນນຶ່ງທີ່ຊອກຫາ ແລະພົບເງິນຫລຽນນຶ່ງທີ່ເສັຽໄປຈາກເງິນທີ່ມີຢູ່ສິບຫລຽນ. ເຣື່ອງທີສາມແມ່ນ ເຣື່ອງທີ່ພວກເຮົາຈະສຶກສາກັນໃນມື້ນີ້ ຄືເຣື່ອງການຊອກຫາແລະພົບລູກຊາຍຄົນນຶ່ງທີ່ເສັຽໄປຈາກພວກລູກທີ່ມີຢູ່ດ້ວຍກັນສອງຄົນ.

ຄຳວ່າ "ເສັຽ" ມີຄວາມໝາຍແນວໃດ? "ເສັຽ" ໃນຄຳອຸປມານີ້ມີຄວາມໝາຍຫລາຍຢ່າງ: ສຳລັບແກະໝາຍເຖິງການຂາດຈາກການປົກປັກຮັກສາຂອງຜູ້ລ້ຽງແລະຕົກຢູ່ເຂດອັນຕະຣາຍ; ສຳລັບເງິນຫລຽນໝາຍເຖິງການໝົດປໂຍດແລະອອກຈາກວົງຈອນ; ສຳລັບລູກຊາຍໝາຍເຖິງການຂາດຄວາມສຳພັນກັບພໍ່ແລະຈາກຄວາມຊົມຊື່ນຍິນດີຂອງຄອບຄົວ.

<u>ພຣະເຢຊູຊົງສອນເຣື່ອງລູກທີ່ເສັຽ</u> ລູກາ15:11-16

ສິ່ງສຳຄັນໃນຄຳອຸປມານີ້ຄືຜູ້ເປັນພໍ່ບໍ່ໄດ້ອອກໄປຊອກຫາລູກ ແຕ່ລາວລໍຖ້າຢູ່ບ້ານເພື່ອໃຫ້ລູກຊາຍກັບມາ. ເມື່ອລູກຊາຍໄດ້ກັບຄືນບ້ານ, ພໍ່ກໍໄດ້ແລ່ນອອກໄປຮັບເອົາ. ເໝືອນແກະໜີຄອກ, ຄົນບາບທັງຫລາຍຫລົງທາງໄປເພາະຄວາມໂງ່ຂອງເຂົາເອງ; ເໝືອນເງິນຫລຽນ, ບາງຄົນຫລົງທາງໄປເພາະຄວາມບໍ່ຣະມັດຣະວັງຂອງຜູ້ອື່ນ. ແຕ່ວ່າລູກຊາຍຜູ້ນີ້ຫລົງທາງໄປເພາະການຕັດສິນໃຈຂອງລາວເອງ, ສະນັ້ນຜູ້ເປັນພໍ່ຕ້ອງລໍຖ້າຈົນເຖິງເວລາທີ່ເຂົາບວບຊ້ຳແລະເຊື່ອຟັງ.

ສຳລັບລູກຊາຍຜູ້ທີ່ຂໍຮ້ອງເອົາມໍຣະດົກກ່ອນເວລາ ກໍບໍ່ຜິດຫຍັງກັບການບອກພໍ່ຂອງຕົນໃຫ້ຕາຍ. ສິ່ງເຫລົ່ານີ້ຄົງຈະເຮັດໃຫ້ຜູ້ເປັນພໍ່ເສັຽໃຈຢູ່ບໍ່ນ້ອຍ, ແຕ່ເພິ່ນກໍຍອມແບ່ງຊັບສິນໃຫ້ລູກຕາມຄຳຮ້ອງຂໍ. ພຣະຜູ້ເປັນເຈົ້າໄດ້ແບ່ງຊັບສົມບັດຂອງພຣະອົງໃຫ້ກັບໂລກນີ້ ຊຶ່ງເຕັມໄປດ້ວຍຄົນຜິດບາບ, ແລະພວກເຂົາກໍກຳລັງໄດ້ເຜົາຜານຊັບເຫລົ່ານັ້ນ (ກິຈການ 14:15-17; 17:24-28).

ຄວາມອຶດຫິວເຮັດໃຫ້ຊາຍໜຸ່ມຄົນນີ້ປ່ຽນແປງ (15: 17). ລາວໄດ້ປ່ຽນແປງຈາກຜູ້ທີ່ວ່າ "ເອົາມາໃຫ້ຂ້ອຍ" ກາຍເປັນຜູ້ທີ່ວ່າ "ຂໍໃຫ້ລູກເປັນເໝືອນລູກຈ້າງຂອງພໍ່" (15:19).

**<u>ພຣະເຢຊູຊີ້ໃຫ້ຕົວຢ່າງເລື່ອງພຣະຄຸນພຣະເຈົ້າສຳລັບຄົນບາບ</u>** ລູກາ15:21-32

ໃນເຂດຕະເວັນອອກ, ພວກເຮົາຈະບໍ່ເຫັນຄົນຊະຣາແລ່ນ; ແຕ່ພໍ່ຄົນນີ້ກໍໄດ້ແລ່ນເພາະຄວາມເມດຕາສຳລັບລູກຊາຍ. ນອກນັ້ນ, ລູກຊາຍຜູ້ທີ່ສ້າງຄວາມອັບອາຍໃຫ້ກັບຄອບຄົວ ແລະບ້ານເມືອງຈະຕ້ອງຖືກຄ່ວງກ້ອນຫີນໃຫ້ເຖິງຄວາມຕາຍ (ພຣະບັນຍັດທີສອງ 21:18-21). ແຕ່ໃນກໍຣະນີນີ້, ຖ້າມີການຄ່ວງກ້ອນຫີນ, ກ້ອນຫີນນັ້ນກໍຄົງຈະຖືກຜູ້ເປັນພໍ່; "ເຄື່ອງນຸ່ງຢ່າງດີທີ່ສຸດ" ຄົງຈະເປັນເຄື່ອງນຸ່ງທີ່ພໍ່ເກັບໄວ້ນຸ່ງໃນງານສລອງ; "ເກີບ" ໝາຍຄວາມວ່າລູກບໍ່ໄດ້ກັບມາໃນຖານະລູກຈ້າງ (ເຖິງວ່າຈະເປັນຄຳຂໍຮ້ອງຂອງເຂົາກໍຕາມ); ແລະແຫວນໝາຍເຖິງຄຳຢັ້ງຢືນຂອງການເປັນລູກທີ່ແທ້. ຄວາມຊົມຊື່ນຍິນດີໄດ້ກັບຄືນມາ ເພາະລູກທີ່ເສັຽໄປໄດ້ກັບຄືນມາ.

ຫລາຍໆຄົນລືມຄວາມສຳຄັນຂອງລູກຊາຍກົກໃນຄຳອຸປມານີ້. ລູກຊາຍຜູ້ນ້ອງປຽບເໝືອນກັບ "ຄົນນອກສິນທັມແລະຄົນບາບ" ແລະລູກຊາຍຜູ້ກົກປຽບເໝືອນກັບ "ພວກຟາຣີຊາຍແລະພວກນັກທັມ." ຄວາມຜິດບາບສາມາດເກີດຂຶ້ນໄດ້ທັງຝ່າຍຈິດວິນຍານແລະຝ່າຍເນື້ອໜັງ (2 ໂກຣິນໂທ 7:1). ພວກຜູ້ນຳທາງສາສນາອາດຈະບໍ່ເຮັດໃນສິ່ງທີ່ລູກຊາຍຜູ້ນ້ອງໄດ້ເຮັດ ແຕ່ພວກເຂົາເຈົ້າກໍຍັງເຮັດບາບຢູ່ ໂດຍການຕຳໜິຄົນອື່ນ, ການຂາດຄວາມຮັກແທ້, ການອວດຕົວ, ແລະການບໍ່ຍອມໃຫ້ອະພັຍ.

ເນື່ອງຈາກຜູ້ເປັນນ້ອງໄດ້ຮັບສ່ວນຂອງລາວແລ້ວ, ມໍຣະດົກທີ່ເຫລືອກໍກາຍເປັນຂອງຜູ້ອ້າຍ ເຖິງພໍ່ຈະເປັນຜູ້ຈັດການຢູ່ກໍຕາມ. ການກັບບ້ານຂອງຜູ້ນ້ອງສ້າງບັນຫາໃໝ່ໃຫ້ກັບຄອບຄົວ ໂດຍສເພາະເລື່ອງອະນາຄົດຂອງມໍຣະດົກ. ທີ່ຈິງແລ້ວອ້າຍກົກບໍ່ໄດ້ປາຖນາໃຫ້ນ້ອງຊາຍກັບຄືນບ້ານ ແລະລາວເອງກໍບໍ່ໄດ້ໄປຊອກຫານ້ອງເລີຍ.

ໃນຕອນນີ້ພວກເຮົາກໍຮູ້ໄດ້ວ່າ ອ້າຍກົກກໍມີແຜນຂອງລາວເອງ. ລາວຢາກຈັດງານລ້ຽງມິດສະຫາຍຂອງຕົນ. ລາວໃຈຮ້າຍເພາະນ້ອງຊາຍກັບມາບ້ານ ແລະພໍ່ຍັງໄດ້ໃຫ້ອະໂຫສິເຂົາ. ເໝືອນດັ່ງພວກນັກທັມແລະພວກຟາຣີຊາຍ, ລູກກົກບໍ່ຍອມມີສ່ວນໃນຄວາມຊົມຊື່ນຍິນດີແລະຮ່ວມສາມະຄີທັມກັບຄົນທັງຫລາຍທີ່ໄດ້ຮັບການໃຫ້ອະພັຍແລ້ວ.

ການບໍ່ຍອມເຂົ້າບ້ານຂອງລູກຊາຍກົກ ສ້າງຄວາມອັບອາຍໃຫ້ກັບພໍ່ແລະນ້ອງຊາຍ. ຜູ້ເປັນພໍ່ມີສິດທີ່ຈະສັ່ງເຂົາໃຫ້ເຂົ້າມາບ້ານ, ແຕ່ເພິ່ນໄດ້ອອກໄປຫາເຂົາແລະອ້ອນວອນເຂົາ. ພຣະເຢຊູກໍຊົງໄດ້ເຮັດເຊັ່ນດຽວກັນກັບພວກຜູ້ນຳສາສນາຂອງຊາວຢິວ ແຕ່ພວກເຂົາບໍ່ຍອມປ່ຽນໃຈ. ພວກເຂົາຄິດວ່າຕົນເອງຈະລອດພົ້ນເພາະການປະຕິບັດທີ່ເປັນຕົວຢ່າງ, ແຕ່ພວກເຂົາຂາດຄວາມສັມພັນກັບພຣະບິດາ. ພວກເຂົາຈະຕ້ອງກັບໃຈແລະສແວງຫາການໃຫ້ອະພັຍເໝືອນຄົນອື່ນໆ.

**<u>ພຣະຄຸນພຣະເຈົ້າແມ່ນສຳລັບທຸກໆຄົນ</u>**

ເວລາພວກເຮົາເບິ່ງຄຳອຸປມານີ້, ຈົ່ງຢ່າເຂົ້າໃຈຜິດວ່າຄວາມບາບຂອງລູກຊາຍຜູ້ນ້ອງນັ້ນໜັກກວ່າຄວາມບາບຂອງລູກຊາຍກົກ ຫລືວ່າຜູ້ນຶ່ງຕ້ອງການໃຫ້ອະພັຍຫລາຍກວ່າອີກຜູ້ນຶ່ງ. ທີ່ຈິງແລ້ວບໍ່ມີໃຜດີກວ່າກັນ, ແຕ່ຄວາມເມດຕາຂອງພໍ່ຜູ້ເຕັມໄປດ້ວຍຄວາມຮັກມີໃຫ້ສຳລັບລູກທັງສອງຄົນ (15:23, 31).

ການຈຳແນກຄົນເປັນເລື່ອງທີ່ເຮັດໄດ້ງ່າຍ. ພວກເຮົາອາດຈະຖືວ່າຄົນພວກນີ້ "ດີກວ່າເຮົາ," ຫລື "ບໍ່ດີທໍ່ເຮົາ." ແລ້ວພວກເຮົາກໍບອກຕົວເອງວ່າເຮົາບໍ່ສາມາດຊ່ວຍພວກເຂົາໄດ້ເພາະພວກເຂົາແຕກຕ່າງກັບພວກເຮົາ. ບາງຄັ້ງພວກເຮົາຍັງຄິດວ່າຄົນບາງຈຳພວກ ຢູ່ນອກຮົ່ມພຣະຄຸນຂອງພຣະເຈົ້າ, ທັ້ງໆທີ່ເຮົາຮູ້ຢູ່ແກ່ໃຈວ່າພຣະຄຸນພຣະເຈົ້າມີໃຫ້ສຳລັບທຸກໆຄົນ. ໃນຖານະທີ່ພວກເຮົາເປັນຜູ້ຕິດຕາມພຣະຄຣິດ, ຂໍຢ່າໃຫ້ພວກເຮົາເຮັດຄວາມຜິດບາບໂດຍການຍົກເວັ້ນຄົນອື່ນໆ ທີ່ພຣະເຢຊູຄຣິດໄດ້ສິ້ນພຣະຊົນທີ່ໄມ້ກາງແຂນເພື່ອພວກເຂົາທັງໝົດໃຫ້ພົ້ນ.

**ຄຳຖາມ:**

1. ທ່ານເຄີຍຕໍ່ສູ້ ຫລືກະບົດຕໍ່ພຣະເຈົ້າບໍ່? ຜົນປາກົດເປັນແນວໃດ?

2. ທ່າທີຂອງລູກຊາຍກົກປາກົດຢູ່ໃນຄຣິສຕຽນໃນສມັຍນີ້ວິທີໃດ?

3. ມີວິທີໃດແດ່ທີ່ຈະເຮັດໃຫ້ອ້າຍນ້ອງສອງຄົນນີ້ຄືນດີກັນ?

4. ຢູ່ອ້ອມແອ້ມຄຣິສຕະຈັກຂອງທ່ານມີ "ເມືອງໄກ" ບໍ່? "ເມືອງໄກ" ເປັນແນວໃດ?

5. ມີວິທີໃດແດ່ທີ່ຄຣິສຕະຈັກຂອງທ່ານຈະສາມາດຮັບໃຊ້ຄົນທີ່ກຳລັງຢູ່ໃນ "ເມືອງໄກ" ໄດ້?

6. ມີຫຍັງແດ່ທີ່ເປັນອຸປສັກບໍ່ໃຫ້ພວກເຮົາໄດ້ອອກໄປຫາຄົນທີ່ແຕກຕ່າງກັບເຮົາເຣື່ອງຜິວພັນ ຫລືວັທນະທັມ?

*ສຈ. ດຣ. ສີດາ ຄານ*

## ບົດຮຽນທີ 10
## ສະແດງຄວາມຮູ້ບຸນຄຸນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 17:11-19
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ລູກາ 17:11-19
**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ຕິດຕາມພຣະຄຣິດສະແດງຄວາມຮູ້ບຸນຄຸນຕໍ່ພຣະເຈົ້າສຳລັບພຣະຄຸນຂອງພຣະອົງ ໂດຍການນຳພຣະຄຸນໄປຫາຄົນທີ່ຖືວ່າເປັນຄົນນອກສັງຄົມ.
**ຄຳຖາມເພື່ອການສຳຣວດ:** ທ່ານຈະສະແດງຄວາມຮູ້ບຸນຄຸນຕໍ່ພຣະເຈົ້າສຳລັບພຣະຄຸນຂອງພຣະອົງວິທີໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ຮູ້ວ່າການສະແດງຄວາມຮູ້ບຸນຄຸນຕໍ່ພຣະເຈົ້າສຳລັບພຣະຄຸນຂອງພຣະອົງ ແມ່ນ ການນຳພຣະຄຸນໄປຫາຄົນທີ່ຖືວ່າເປັນຄົນນອກສັງຄົມ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ປະກາດຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວພຣະເຈົ້າມີສ່ວນໃນການຕັດສິນໃຈ ແລະຮັບໃຊ້.
- ເຫັນຄຸນຄ່າຂອງທຸກຄົນວ່າໄດ້ຖືກສ້າງຕາມພຣະສາຍາຂອງພຣະເຈົ້າ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

### ຄຳນຳ

ພຣະເຢຊູໄດ້ຊົງສະແດງຄວາມເມດຕາກັບຄົນພວກນອກສັງຄົມ ແລະນອກສາສນາ ເມື່ອພຣະອົງຊົງໂຜດຄົນຂີ້ທູດສິບຄົນໃຫ້ສະອາດດີ. ແຕ່ມີຜູ້ດຽວຊຶ່ງເປັນຊາວຊາມາເຣັຽ ທີ່ໄດ້ກັບຄືນມາແລະຂອບພຣະຄຸນພຣະອົງ.

**ພຣະເຢຊູຊົງຕຽມໄປຮ່ວມສລອງວັນປັສຄາ** ລູກາ 17:10-11
ໃນຕອນນີ້ ພຣະເຢຊູແລະພວກສາວົກອາດຈະຮ່ວມເດີນທາງຕາມຝູງຊົນທັງຫລາຍທີ່ກຳລັງເດີນທາງໄປກຸງເຢຣູຊາເລັມ. ໃນສມັຍນັ້ນມີທາງສອງເສັ້ນໃຫຍ່ທີ່ຄົນມັກທຽວ. ພຣະເຢຊູແລະສາວົກໄດ້ຈັບທາງທີ່ເລາະແຄມຊາຍແດນລະຫວ່າງຊາມາເຣັຽແລະແຂວງຄາລິເລ.

ພຣະອົງໄດ້ສອນພວກສາວົກໂດຍໃຊ້ຄຳອຸປມາໃນຂະນະທີ່ກຳລັງເດີນທາງ. ພຣະອົງໄດ້ສອນພວກເຂົາຄຳອຸປມາເຣື່ອງພະນັກງານບໍ່ສັດຊື່ (16:1-18) ແລະຄຳອຸປມາເຣື່ອງເສດຖີກັບລາຊະໂຣ (16:19-31). ເວລາໃກ້ຈະມາເຖິງແລ້ວສຳລັບການສະເດັດເຂົ້າກຸງເຢຣູຊາເລັມ. ການສະເດັດເຂົ້າກຸງຢ່າງຜູ້ມີຊັຍ, ການຖືກຝູງຊົນປະຕິເສດ, ພິທີສິນມະຫາສນິດກັບພວກສາວົກ, ການທໍຣະຍົດຂອງຢູດາ, ການອ້ອນວອນທີ່ເຄັດຊາມາເນ, ການຖືກພິພາກສາ, ການຖືກຄຶງໄວ້ທີ່ໄມ້ກາງແຂນ, ແລະການຊົງຄືນພຣະຊົນ ກຳລັງລໍຖ້າພຣະເຢຊູຢູ່. ແຕ່ຕອນນີ້ເປັນເວລາທີ່ຈະໄປສລອງວັນປັສຄາ.

**<u>ພຣະເຢຊູຊົງພົບຄົນຂີ້ທູດສິບຄົນ</u>** ລູກາ17:12-14

ໃນຂະນະທີ່ພຣະເຢຊູແລະພວກສາວົກໄດ້ເດີນທາງຕໍ່ໄປຍັງກຸງເຢຣູຊາເລັມເທິງເສັ້ນທາງໃກ້ຊາຍແດນຊາມາເຣັຽແລະແຂວງຄາລີເລ, ພຣະອົງໄດ້ພົບຊາຍຂີ້ທູດສິບຄົນ. ພວກຄົນນອກສັງຄົມນີ້ໄດ້ຢູ່ດ້ວຍກັນ ແລະເດີນທາງຮ່ວມກັນເພາະພວກເຂົາເປັນຄົນທີ່ຖືກສັງຄົມລັງກຽດ. ເມື່ອພວກເຂົາເຫັນພຣະເຢຊູ, ພວກເຂົາກໍພາກັນອ້ອນວອນຂໍຄວາມເມດຕາຈາກພຣະອົງ. "ເຢຊູຜູ້ເປັນອາຈານເຈົ້າເອີຍ, ຂໍເມດຕາພວກຂ້ານ້ອຍແດ່ທ້ອນ" (ຂໍ້ 13).

ພຣະເຢຊູຊົງສັ່ງພວກເຂົາໃຫ້ໄປ "ສະແດງຕົວຕໍ່ພວກປະໂຣຫິດ" (ລະບຽບຂອງພວກເລວີ 13--14), ແລະເມື່ອພວກເຂົາປະຕິບັດຕາມພຣະດຳຣັດສັ່ງ, ພວກເຂົາກໍໄດ້ກາຍເປັນຜູ້ດີສະອາດ ຄືພວກເຂົາໄດ້ດີຈາກການເປັນຂີ້ທູດ. ພວກເຮົາສັງເກດໄດ້ວ່າ, ພຣະເຢຊູຄຣິດບໍ່ໄດ້ແຕະຕ້ອງພວກເຂົາ ແຕ່ພຣະອົງສັ່ງໃຫ້ພວກເຂົາໄປສະແດງຕົວຕໍ່ພວກປະໂຣຫິດ.

ພວກປະໂຣຫິດມີໜ້າທີ່ສຳຄັນໃນສັງຄົມຂອງຊາວຢິວ. ນອກຈາກຄວາມຮັບຜິດຊອບໃນພິທີທາງສາສນາແລ້ວ, ພວກເຂົາຮັບຜິດຊອບເຣື່ອງການສຶກສາ ແລະບາງຄັ້ງເຣື່ອງສານດ້ວຍ. ພວກປະໂຣຫິດຮັບຜິດຊອບເຣື່ອງພຍາບານສຳລັບປະຊາຊົນ (ລະບຽບຂອງພວກເລວີ 13). ພວກເຂົາມີຄວາມສາມາດໃນການກວດພຍາດ ແລະການກວດເຄື່ອງຂອງທີ່ປະຊາຊົນນຳມາຖວາຍໃນວິຫານ. ຄົນຂີ້ທູດສາມາດເຂົ້າຮ່ວມໃນພິທີທີ່ວິຫານເວລາພວກເຂົາດີສະອາດແລ້ວ.

**<u>ໄທຊາມາເຣັຽກັບມາຂອບພຣະຄຸນພຣະເຢຊູ</u>** ລູກາ17:15-19

ພຣະທັມໃນຕອນນີ້ບໍ່ໄດ້ໃຫ້ລາຍລະອຽດວ່າ ພວກຂີ້ທູດໄດ້ເດີນທາງໄປໄກປານໃດກ່ອນທີ່ພວກເຂົາຈະຮູ້ວ່າພວກເຂົາໄດ້ດີຈາກພຍາດແລ້ວ. ບາງທີພວກເຂົາອາດຈະໄປພົບກັບພວກປະໂຣຫິດ ແລະເຫັນວ່າຖ້າຈະກັບມາຂອບໃຈພຣະເຢຊູກໍຕ້ອງໄດ້ເດີນທາງໄກອີກ. ບາງທີພວກເຂົາອາດຈະດີໃຈເພາະການດີພຍາດຈົນພາກັນລືມວ່າໃຜເປັນຜູ້ຊ່ວຍໃຫ້ດີ. ຫລືບາງທີພວກເຂົາອາດຈະເປັນເໝືອນຫລາຍໆຄົນໃນສມັຍນີ້, ພວກເຂົາຊົມຊື່ນຍິນດີໃນພຣະພອນຂອງພຣະເຈົ້າ ແລ້ວພາກັນລືມສະແດງຄວາມຮູ້ບຸນຄຸນ. ພຣະເຢຊູຊົງຖາມຊາຍຄົນທີ່ກັບມາຫາພຣະອົງວ່າ "ມີສິບຄົນທີ່ດີສະອາດ ບໍ່ແມ່ນຫລືແຕ່ເກົ້າຄົນຢູ່ໃສ" (17:17).

ສິ່ງສຳຄັນໃນຕອນນີ້ກໍຄືມີຊາຍຄົນນຶ່ງກັບມາຫາພຣະເຢຊູ. ນຶ່ງໃນສິບຮູ້ສຶກຕົວແລະເຫັນພຣະຄຸນຂອງພຣະອົງ. ເຂົາໄດ້ກັບຄືນມາຫາພຣະເຢຊູແລະສະແດງຄວາມຮູ້ບຸນຄຸນຕໍ່ພຣະອົງສຳລັບການຊົງໂຜດໃຫ້ດີພຍາດ (ເພງສັຣເສີນ 107:8, 15, 21, ແລະ31). ຊາຍຄົນນີ້ເປັນໄທຊາມາເຣັຽ! ທ່ານລອງວາດພາບເບິ່ງວ່າ ຄົນໄທຊາມາເຣັຽ ຂອບໃຈຄົນຢິວ! ເພາະໄທຊາມາເຣັຽຄົນນີ້ໄດ້ມາຂອບໃຈພຣະເຢຊູ, ນອກຈາກການດີພຍາດແລ້ວເຂົາຍັງໄດ້ຮັບຄວາມລອດພົ້ນດ້ວຍ.

ພຣະເຢຊູຊົງບອກຊາຍຜູ້ນັ້ນວ່າ "ຄວາມເຊື່ອຂອງເຈົ້າໄດ້ຊ່ວຍໃຫ້ເຈົ້າດີແລ້ວ" (17:19) ຊຶ່ງສາມາດເຂົ້າໃຈໄດ້ວ່າ "ຄວາມເຊື່ອຂອງເຈົ້າຊ່ວຍໃຫ້ເຈົ້າພົ້ນແລ້ວ" (ພຣະຄັມພີພາສາອັງກິດບາງສະບັບແປໄວ້ແນວນັ້ນ). ການດີພຍາດເປັນພຣະພອນເຣື່ອງຮ່າງກາຍ, ແຕ່ໃນທີ່ສຸດກໍຈະຕ້ອງຕາຍໄປ; ຂໍໃຫ້ພວກເຮົາສແວງຫາພຣະພອນຝ່າຍຈິດວິນຍານ ຄືຊີວິດນິຣັນຊຶ່ງເປັນສິ່ງທີ່ຈະຄົງຢູ່ຕລອດໄປເປັນນິດ.

ທ່ານເຄີຍໄດ້ຂອບພຣະຄຸນພຣະເຈົ້າສຳລັບໂອກາດທີ່ໄດ້ຮັບໃຊ້ພຣະອົງບໍ່?ພຣະເຢຊູໄດ້ຊົງຮັບໃຊ້ຄວາມຕ້ອງການດ້ານຮ່າງກາຍແລະດ້ານສັງຄົມຂອງຄົນໃນສມັຍຂອງພຣະອົງໂດຍການປິ່ນປົວຄົນຂີ້ທູດສິບຄົນ. ໃນຖານະທີ່ພວກເຮົາເປັນຜູ້ນຶ່ງທີ່ໄດ້ຮັບພຣະຄຸນຈາກພຣະເຈົ້າ, ຄວນບໍ່ທີ່ພວກເຮົາຈະຕ້ອງອອກໄປ ເພື່ອແບ່ງປັນພຣະຄຸນກັບຝູງຊົງທັງຫລາຍທີ່ຖືວ່າເປັນຄົນນອກສັງຄົມໃນສມັຍຂອງພວກເຮົາ?

**<u>ຄຳຖາມ</u>:**

1. ມີເຫດຜົນຫຍັງແດ່ ທີ່ພວກຊາຍຂີ້ທູດເກົ້າຄົນບໍ່ໄດ້ກັບມາຂອບໃຈພຣະເຢຊູເມື່ອຮູ້ວ່າພວກຕົນໄດ້ດີຈາກພະຍາດແລ້ວ?

2. ເປັນຫຍັງການຂອບພຣະຄຸນພຣະເຈົ້າສຳລັບຄວາມດີຂອງພຣະອົງຈຶ່ງເປັນເຣື່ອງສຳຄັນ?

3. ມີຫຍັງແດ່ຊຶ່ງເປັນເຣື່ອງນ້ອຍໆສິບຢ່າງ ທີ່ທ່ານຈະຕ້ອງຂອບພຣະຄຸນພຣະເຈົ້າ?

4. ເວລາໃດທີ່ທ່ານຈະຕ້ອງເຮັດດ້ວຍຄວາມເຊື່ອ ເພື່ອສະແດງເຖິງການເຊື່ອຟັງພຣະປະສົງຂອງພຣະເຈົ້າ?

5. ການຂອບພຣະຄຸນພຣະເຈົ້າໃນທຸກສິ່ງ ແມ້ກະທັ້ງສິ່ງເລັກນ້ອຍປ່ຽນແປງຊີວິດທ່ານແນວໃດ?

6. ມີຜູ້ໃດແດ່ທີ່ທ່ານຖືວ່າເປັນຄົນນອກສັງຄົມ? ທ່ານແລະຄຣິສຕະຈັກຈະອອກໄປແບ່ງປັນພຣະຄຸນຂອງພຣະເຈົ້າກັບພວກເຂົາເຈົ້າໄດ້ວິທີໃດ?

*ສຈ. ດຣ. ສີດນີ ຄານ*

# ບົດຮຽນບົດທີ 11
# ຊັບສົມບັດທີ່ແທ້ຈິງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 18:18-30
**ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ:** ລູກາ 18:18-30
**ຈຸດສຳຄັນຂອງບົດຮຽນນີ້:** ຊັບສົມບັດທີ່ແທ້ຈິງໃນຊີວິດບໍ່ແມ່ນເງິນຄຳແຕ່ແມ່ນຣາຊແຜ່ນດິນຂອງພຣະເຈົ້າ.
**ຄຳຖາມເພື່ອການສຳຣວດ:** ມີຫຍັງແດ່ທີ່ມີຄຸນຄ່າຫລາຍກວ່າເງິນຄຳ? ແມ່ນແທ້ບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ຮູ້ຄວາມສຳຄັນຂອງຣາຊແຜ່ນດິນຂອງພຣະເຈົ້າ
ແລະຄວາມສຳຄັນຂອງເງິນ
ຄຳໃນຊີວິດ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ປະກາດຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຮັບໃຊ້ຄວາມຕ້ອງການດ້ານຮ່າງກາຍ, ຈິດວິນຍານ, ແລະອາຣົມ .
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

## ຄຳນຳ

ພຣະເຢຊູຊົງຕອບຄຳຖາມຂອງເສດຖີໜຸ່ມເຣື່ອງຊີວິດອັນຕລອດໄປເປັນນິດດ້ວຍການປຽບທຽບຄຸນຄ່າຂອງຊັບສົມບັດໃນໂລກນີ້ ແລະຣາຊແຜ່ນດິນຂອງພຣະເຈົ້າ. ມີເຣື່ອງເຄີຍເລົ່າໄວ້ໃນທຳນອງນີ້ວ່າ, ມີຄົນຜູ້ນຶ່ງໄດ້ຖາມຄົນທີ່ຮັ່ງມີທີ່ສຸດໃນສະຫະຣັຖອະເມຣິກາວ່າ ທ່ານຕ້ອງການເງິນເພີ່ມອີກຫລາຍປານໃດ ຈຶ່ງຈະມີຄວາມສຸກ, ເສດຖີຄົນນັ້ນໄດ້ຕອບວ່າ "ມີເພີ່ມອີກນ້ອຍນຶ່ງ."

ພຣະທັມລູກາ 18:18-30 ໄດ້ບັນທຶກຄຳສົນທະນາຣະຫວ່າງພຣະເຢຊູຄຣິດແລະເສດຖີຄົນນຶ່ງ. ຄຳເວົ້າຂອງພຣະເຢຊູໄດ້ເນັ້ນເຖິງຄວາມແຕກຕ່າງຣະຫວ່າງຄຸນຄ່າຂອງຊັບສົມເງິນຄຳ ແລະຄຸນຄ່າຂອງແຜ່ນດິນຂອງພຣະເຈົ້າ. ພຣະເຢຊູໄດ້ສອນເຣື່ອງຣາຊອານາຈັກຂອງພຣະເຈົ້າ ແລະການສະເດັດກັບມາຄັ້ງທີສອງ (ລູກາ 17:20-37). ແລ້ວພຣະອົງໄດ້ສອນຄຳອຸປມາເຣື່ອງຊາຍສອງຄົນທີ່ໄປໄຫວ້ວອນ (18:9-14) ແລະໃນຕອນນີ້ແມ່ນການພົບກັບເສດຖີໜຸ່ມ, ພຣະເຢຊູໄດ້ຊົງກ່າວຢ່າງແຈ່ມແຈ້ງວ່າການຈະໄປຢູ່ໃນແຜ່ນດິນຂອງພຣະເຈົ້າ ແມ່ນການຕັດສິນໃຈໃນປັດຈຸບັນ. ການເລືອກເອົາຣາຊອານາຈັກຂອງພຣະເຈົ້າຈະມີຜົນສະທ້ອນເຖິງການຕັດສິນໃຈຂອງພວກເຮົາເຣື່ອງເງິນແລະຊັບສົມບັດ.

**ຊອກຫາຜິດບ່ອນ** ລູກາ18: 18-23

ຖ້າພວກເຮົາເບິ່ງຂໍ້ມູນຕ່າງໆໃນປື້ມມັດທາຍ, ມາຣະໂກ, ແລະລູກາ, ພວກເຮົາຈະເຫັນວ່າຊາຍຜູ້ນີ້ເປັນຄົນຮັ່ງມີ, ແລະເປັນຜູ້ປົກຄອງ; ທ່ານຜູ້ນີ້ອາດຈະເປັນຜູ້ປົກຄອງຂອງໂຮງທັມ. ເຣື່ອງນີ້ບໍ່ແມ່ນເຣື່ອງທັມມະດາທີ່ຊາຍໜຸ່ມໄດ້ຮັບຕຳແໜ່ງເປັນຜູ້ປົກຄອງໂຮງທັມຂອງຊາວຢິວ. ຊາຍຜູ້ນີ້ອາດຈະເປັນຊາຍໜຸ່ມຕົວຢ່າງພິເສດ.

ເມື່ອຊາຍໜຸ່ມຜູ້ນີ້ໄດ້ຍິນເຣື່ອງຣາຊອານາຈັກຂອງພຣະເຈົ້າ ແລະຊີວິດອັນຕລອດໄປເປັນນິດ, ເຂົາກໍຮູ້ສຶກເຖິງຄວາມວ່າງເປົ່າຂອງຕົວເອງ. ບໍ່ວ່າຖານະຈະດີແລະຕຳແໜ່ງຈະສູງປານໃດ, ເຂົາມີຄວາມຮູ້ສຶກວ່າຊີວິດຂອງຕົນຍັງຂາດບາງຢ່າງ. ສະນັ້ນເຂົາຈຶ່ງຖາມພຣະເຢຊູວ່າ "ຂ້ານ້ອຍຈະຕ້ອງເຮັດແນວໃດ ຈຶ່ງຈະໄດ້ຮັບຊີວິດອັນຕລອດໄປເປັນນິດມາເປັນມໍຣະດົກ." ໜ້າເສັຽໃຈທີ່ເສດຖີໜຸ່ມຄົນນີ້ຕ້ອງການຄວາມລອດພົ້ນດ້ວຍວິທີຂອງເຂົາເອງ, ບໍ່ແມ່ນວິທີຂອງພຣະເຢຊູ; ແລະພຣະເຢຊູບໍ່ຊົງຮັບເຂົາໃນທ່າທີນັ້ນ.

ບໍ່ມີໃຜທີ່ຈະໄດ້ຮັບຄວາມພົ້ນເພາະການຖືຮັກສາພຣະບັນຍັດ (ຄາລາເຕັຽ 2:21 ແລະ 3:21-24; ໂຣມ 3:20) ຫລືການມີຖານະຍາກຈົນ ແລະໃຈເມດຕາ. ພຣະເຢຊູຄຣິດໃຊ້ວິທີນີ້ເພື່ອໃຫ້ເສດຖີໜຸ່ມໄດ້ສຳນຶກເຖິງຄວາມຜິດບາບຂອງເຂົາເຣື່ອງຄວາມໂລບມາກ. ເສດຖີໜຸ່ມຜູ້ນີ້ອາດຈະຖືບັດຍັດຢ່າງເຄັ່ງຄັດເຣື່ອງຕ່າງໆທີ່ບອກໄວ້ໃນພຣະທັມຂໍ້ 18:20, ແຕ່ເຂົາບໍ່ໄດ້ເວົ້າເຖິງ "ຢ່າຢາກໄດ້ເຮືອນຊານບ້ານຊ່ອງຂອງຄົນອື່ນ..." (ອົພຍົກ 20:17; ໂກໂລຊາຍ 3:5 ແລະໂຣມ 7:7-8). ຖ້າພວກເຮົາເປັນຄົນໂລບມາກ, ພວກເຮົາກໍໄດ້ຜິດຕໍ່ພຣະບັນຍັດທັງໝົດ.

<u>**ສແວງຫາຊັບສິນບັດທີ່ແທ້ຈິງ**</u> ລູກາ18:24-30
ພຣະຄຳຂອງພຣະເຢຊູເຣື່ອງຄວາມຮັ່ງມີສ້າງຄວາມປລາດໃຈໃຫ້ກັບອັຄສາວົກສິບສອງຄົນ ເພາະສຳລັບພວກເຂົາແລະຄົນຢິວທົ່ວໆໄປພາກັນຖືວ່າຄວາມຮັ່ງມີແມ່ນສັນຍາລັກວ່າພຣະເຈົ້າໄດ້ໃຫ້ພຣະພອນ. ທີ່ຈິງແລ້ວຄວາມຮັ່ງມີຈະບໍ່ເປັນເຫດໃຫ້ຈິດວິນຍານຕ້ອງຖືກພິພາກສາ, ແຕ່ການໄວ້ວາງໃຈໃນຄວາມຮັ່ງມີຈະເປັນຕົ້ນເຫດຂອງການພິພາກສາ. ອັບຣາຮາມເປັນຄົນທີ່ມີຖານະຮັ່ງມີ, ແລະລາວໄດ້ຮັບຄວາມພົ້ນເພາະຄວາມເຊື່ອໃນພຣະທັມພຣະເຈົ້າ, ບໍ່ແມ່ນຄວາມເຊື່ອໃນຊັບສິນບັດຂອງລາວ (ປະຖົມການ 15:6). ການສແວງຫາຄວາມຮັ່ງມີ ແລະການເຊື່ອວາງໃຈໃນສິ່ງເຫລົ່ານັ້ນສາມາດເປັນສິ່ງກີດກັ້ນບໍ່ໃຫ້ພຣະທັມຂອງພຣະເຈົ້າເກີດດອກອອກຜົນໃນຈິດໃຈ (ມັດທາຍ 13:22), ສາມາດເຮັດໃຫ້ພວກເຮົາລືມພຣະເຈົ້າ (ພຣະບັນຍັດທີສອງ 8:13-14), ແລະສາມາດນຳພວກເຮົາໄປສູ່ການລໍ້ລວງຕ່າງໆ ແລະຄວາມຜິດບາດ (1 ຕີໂມທຽວ 6:9-10).

ລູກາ 18: 28-30 ມີສ່ວນພົວພັນກັບ ມັດທາຍ 19:27--20:16. ທ່ານຄິດວ່າ ຄຳເວົ້າຂອງ ເປໂຕໃນຕອນນີ້ອາດຈະເປັນການຄຸຍໂມ້ ຫລືການຈອງຫອງບໍ່? ພຣະເຢຊູຊົງເຫັນພັຍອັນຕະຣາຍໃນຄຳເວົ້ານັ້ນ ("ພວກຂ້ານ້ອຍຈະໄດ້ຫຍັງ" ບໍ່ແມ່ນວ່າ "ພວກຂ້ານ້ອຍຈະເສັຽສລະຫຍັງແດ່")ແລ້ວພຣະອົງຈຶ່ງຊົງໃຫ້ຄຳອຸປມາໃນ ມັດທາຍ 20:1-16 ເພື່ອເຕືອນເປໂຕ ແລະພວກອັຄສາວົກທັງໝົດ. ພຣະເຢຊູຈຶ່ງຊົງສັນຍາຈະໃຫ້ພຣະພອນໃນຊີວິດນີ້ ແລະຊີວິດທີ່ຈະມາເຖິງ, "ຖ້າຜູ້ໃດໄດ້ສລະຍ້າວເຮືອນ, ເມັຽ, ອ້າຍນ້ອງ, ພໍ່ແມ່, ລູກເຕົ້າ ເພາະເຫັນແກ່ຣາຊແຜ່ນດິນຂອງພຣະເຈົ້າແລ້ວ, ໃນໂລກນີ້ຜູ້ນັ້ນຈະໄດ້ຮັບຕອບແທນຫລາຍທໍ່ ແລະໃນໂລກໜ້າຈະໄດ້ຊີວິດອັນຕລອດໄປເປັນນິດ" (18:29-30).

ພຣະອົງໄດ້ເຕືອນພວກເຂົາວ່າພຣະອົງຈະຕ້ອງຖືກປະຫານຊີວິດໃນບໍ່ຊ້າທີ່ກຸງເຢຣູຊາເລັມ (18:31-34).ຖ້າພຣະເຢຊູຄຣິດຈຳຕ້ອງໄດ້ຮັບຄວາມທຸກລຳບາກກ່ອນຈະໄດ້ຮັບພຣະສະຫງ່າຣາສີ, ພວກສາວົກກໍຈະຕ້ອງຖືກຄວາມລຳບາກເຊັ່ນດຽວກັນ.

<u>**ຄຳຖາມ:**</u>

1. ທ່ານເຄີຍຢາກໄດ້ຂອງບາງຢ່າງຈຶ່ງແຮງບໍ່, ແຕ່ຫລັງຈາກທ່ານໄດ້ສິ່ງເຫລົ່ານັ້ນແລ້ວທ່ານກໍຮູ້ສຶກວ່າສິ່ງນັ້ນບໍ່ໄດ້ນຳຄວາມພໍໃຈມາໃຫ້ເທົ່າທີ່ໄດ້ຄາດໄວ້?

2. ຖ້າທ່ານແຕ່ງງານແລ້ວແລະມີຄອບຄົວ, ເຣື່ອງໜີ້ສິນແລະເຣື່ອງເງິນເຄີຍສ້າງບັນຫາໃນຄອບຄົວຂອງທ່ານບໍ່?

3. ທ່ານຄິດວ່າ ທ່ານຈະຕ້ອງມີເງິນຈຳນວນຫລາຍປານໃດຈຶ່ງຈະມີຄວາມສຸກທີ່ແທ້ຈິງ?

4. ທ່ານແປຄວາມໝາຍ ຂໍ້ຄວາມຂອງພຣະເຢຊູໃນຕອນນີ້ວ່າແນວໃດ, "ຈົ່ງໄປຂາຍບັນດາສິ່ງຂອງຊຶ່ງທ່ານມີຢູ່ແຈກທານແກ່ຄົນອະນາຖາ ແລ້ວຈະມີຊັບສົມບັດໃນສວັນ" (18:22)?

5. ທ່ານຄິດວ່າພຣະເຢຊູຊົງໝາຍຄວາມວ່າແນວໃດ ເວລາພຣະອົງຊົງສັນຍາຜູ້ທີ່ຕິດຕາມພຣະອົງວ່າ, "ໃນໂລກນີ້ຜູ້ນັ້ນຈະໄດ້ຮັບຕອບແທນຫລາຍທໍ່ ແລະໃນໂລກໜ້າຈະໄດ້ຊີວິດອັນຕລອດໄປເປັນນິດ" (18:30)?

6. ທ່ານມີຄວາມຄິດສ່ວນຕົວແນວໃດສຳລັບພຣະເຢຊູ? ພຣະເຢຊູເປັນຄຣູທີ່ດີ, ຫລືພຣະເຢຊູຊົງເປັນພຣະເຈົ້າ?

## <u>ການປະຕິບັດສ່ວນຕົວ:</u>

- ○ ໃນງົບປມານສຳລັບຄອບຄົວຂອງທ່ານ, ທ່ານໄດ້ແບ່ງສ່ວນໄວ້ເພື່ອການຖວາຍຊັບບໍ່?
- ○ ທ່ານໄດ້ຖວາຍສຳລັບພັນທະກິດອື່ນໆ ຫລັງຈາກການຖວາຍນຶ່ງສ່ວນສິບໃຫ້ກັບຄຣິສຕະຈັກບໍ່?
- ○ ທ່ານກ້າທີ່ຈະຂາຍສິ່ງຂອງບາງຢ່າງເພື່ອຈະມີເງິນໄປເຮັດພັນທະກິດຂອງພຣະເຈົ້າບໍ່?
- ○ ມີເງິນຈຳນວນຫລາຍປານໃດໃນງົບປມານຄອບຄົວທີ່ໄດ້ແບ່ງໄວ້ເພື່ອຈ່າຍຄ່າດອກເບັ້ຍແລະໜີ້ສິນ?
- ○ ມີວິທີໃດແດ່ທີ່ທ່ານສາມາດຈະແກ້ໄຂງົບປມານສ່ວນຕົວ ຫລືງົບປມານຄອບຄົວເພື່ອຜ່ອນໜີ້ສິນໃຫ້ນ້ອຍລົງ?

*ສຈ. ດຣ. ສິດນີ ຄານ*

# ບົດຮຽນທີ 12
# ການກັບໃຈທີ່ສະແດງອອກ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ລູກາ 19:1-10
**ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:** ລູກາ 19:1-10
**ຈຸດສໍາຄັນຂອງບົດຮຽນນີ້:** ການກັບໃຈຢ່າງແທ້ຈິງຈະສະແດງໃຫ້ເຫັນປະຈັກຕາ
**ຄໍາຖາມເພື່ອການສໍາຣວດ:** ທ່ານສາມາດຮູ້ວ່າຕົນເອງກັບໃຈແທ້ໄດ້ຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຄົ້ນຫາວ່າຂ້າພະເຈົ້າກັບໃຈແທ້ບໍ່ໂດຍການປະຕິບັດແນວໃດແດ່?

**ໜ້າທີ່ອັນສໍາຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້**
- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນໍາພາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນໍາ

ທ່ານນາຍດ່ານພາສີຮັ່ງມີຜູ້ນຶ່ງທີ່ເມືອງເຢຣີໂກ ເປັນຄົນຮັ່ງມີຍ້ອນໜ້າທີ່ການງານຂອງລາວ ໃນຊີວິຂອງລາວມີແຕ່ນັບເງິນຄໍາແຕ່ລະມື້ ລາວບໍ່ໄດ້ສົນໃຈໄຍດີວ່າໃຜຈະເປັນທຸກຍາກລໍາບາກເທົ່າໃດຂໍແຕ່ໄດ້ຢ່າງ ດຽວຄືການສໍ້ໂກງເພື່ອຈະໄດ້ຂອງຜູ້ອື່ນມາເປັນຂອງຕົນ, ວັນນຶ່ງລາວພົບກັບພຣະເຢຊູຈຶ່ງເຮັດໃຫ້ຊີວິດລາວປ່ຽນແປງ ໂດຍການຮູ້ສຶກວ່າຕົນເອງໄດ້ເຮັດຜິດໄປແລ້ວຈຶ່ງກັບໃຈຫັນໜີຈາກການໂລພະຕັນຫາ, ຄົນເຮົາສ່ວນຫລາຍກໍເປັນຄືທ່ານພາສີຜູ້ນີ້ຄືກັນ ຫາກບໍ່ພົບກັບພຣະເຢຊູກໍບໍ່ຮູ້ວ່າຕົນເອງເຮັດຊົ່ວ. ວັນນີ້ເຮົາຈະເອົາຊີວິດຂອງຊາຍຄົນນີ້ ທີ່ມີຊື່ວ່າຊັກຂາຍມາເປັນບົດຮຽນ ແລະຮຽນຮູ້ຈາກຊີວິດຂອງລາວເຖິງການກັບໃຈທີ່ແທ້ຈິງ.

### ປີນຂຶ້ນສູງກວ່າຜູ້ອື່ນ ລູກາ 19:1-4

ມັນເປັນຂອງທໍາມະດາພາສີຈະຕ້ອງເປັນຄົນລໍ້າລວຍ ຈາກການເກັບພາສີນອກບັນຊີແລະເກັບພາສີເກີນກໍາໜົດ, ທ່ານຊັກຂາຍກໍແມ່ນຜູ້ນຶ່ງທີ່ເຮັດຢ່າງນັ້ນມາຈົນກາຍເປັນຄົນຮັ່ງມີ, ວັນຕໍ່ວັນລາວຈະໃຊ້ເວລານໍາເງິນຄໍາທີ່ໄດ້ມາໂດຍບໍ່ສົນໃຈຢ່າງອື່ນ. ວັນນຶ່ງລາວໄດ້ຍິນຂ່າວວ່າ ພຣະເຢຊູຈະສະເດັດ ຜ່ານມາຍັງເມືອງເຢຣີໂກຊຶ່ງເປັນເມືອງເກົ່າແກ່ທີ່ສຸດໃນໂລກ ເມືອງນີ້ຕັ້ງຢູ່ພາກຕາເວັນອອກ ສ່ຽງເໜືອຂອງກຸງເຢຣູຊາເລັມ ປະມານສິບແປດໄມ.

ໃນຂະນະທີ່ພຣະເຢຊູສເດັດຜ່ານໄປ ມີຄົນລໍຄອຍເບິ່ງພຣະອົງຕາມຖນົນຫົນທາງຈົນບໍ່ມີຮອດບ່ອນຈະປ່ອນຫົວເບິ່ງເຫັນພຣະອົງໄດ້. ເມື່ອພຣະອົງເດີນມາຮອດຕົ້ນໄມ້ທີ່ມີຊື່ວ່າຕົ້ນຊຸກະໂມ ພຣະອົງກໍຊົງຢຸດຢູ່ທີ່ນັ້ນຈົນຄົນທັງຫລາຍປລາດໃຈວ່າພຣະອົງຢຸດເຮັດຫຍັງ? ພຣະອົງຊົງຢຸດດ້ວຍວ່າມີຊາຍຄົນນຶ່ງກໍາລັງຈ້ອງມອງເບິ່ງພຣະອົງແບບພິເສດ. *"ຝ່າຍພຣະເຢຊູສະເດັດເຂົ້າ ໄປເມືອງເຢຣີໂກ ແລະຊົງຜ່ານເມືອງນັ້ນໄປ ແລະເບິ່ງແມ່ນມີ ຊາຍຄົນນຶ່ງຊື່ຊັກຂາຍເປັນ*

*ນາຍດ່ານພາສີ ແລະເປັນຄົນຮັ່ງມີ, ຊັກຂາຍພະຍາຍາມຈະເຫັນພຣະເຢຊູວ່າເປັນຄົນແນວໃດ ແຕ່ເຫັນບໍ່ໄດ້ ເພາະຄົນໜາແໜ້ນ ດ້ວຍວ່າຕົນເປັນຄົນເຕັ້ຍຊັກຂາຍຈຶ່ງແລ່ນລັດໜ້າໄປຂຶ້ນຕົ້ນຊຸກະໂມເພື່ອຈະໄດ້ ເຫັນພຣະອົງ* "(ຂໍ້ 1-3).

ບົດຮຽນຈາກຊີວິດຂອງຊັກຂາຍຕອນນີ້ມີຢູ່ວ່າ 1. ຊັກຂາຍເປັນຄົນບໍ່ສົນໃຈໄຍດີກັບສິ່ງໃດນອກຈາກເລື່ອງຂອງເງິນ ແຕ່ໃນຂະນະທີ່ພຣະເຢຊູຜ່ານມາລາວກໍປະຖິ້ມເວລາຫາເງິນຄຳເພື່ອຈະເບິ່ງພຣະເຢຊູ. 2. ລາວຕັ້ງໃຈ ຢາກເບິ່ງພຣະເຢຊູແບບພິເສດຈຶ່ງຂຶ້ນຕົ້ນໄມ້ດ້ວຍວ່າລາວເປັນຄົນເຕັ້ຍບໍ່ສາມາດເບິ່ງຕາມແຄມຖນົນໄດ້. 3. ລາວຊອກຫາວິທີເບິ່ງພຣະເຢຊູໃນຖ້າມກາງຄົນໜາແໜ້ນ. ຄຳຖາມສຳລັບເຮົາມີຢູ່ວ່າ ໃນຖານະທີ່ເຮົາເປັນຄຣິສຕຽນເຮົາໄດ້ປະລະວຽກງານຢ່າງອື່ນມາເຂົ້າເຝົ້າພຣະເຢຊູຄືຊັກຂາຍ ຢາກເຫັນພຣະເຢຊູບໍ່? ເຮົາເບິ່ງພຣະເຢຊູແບບໃດ? ຝູງຊົນຫລວງຫລາຍເປັນບັນຫາຂອງຊັກຂາຍທີ່ຈະເຫັນພຣະເຢຊູ ເຮົາເດມີບັນຫາອັນໃດໃນການເຂົ້າເຝົ້າພຣະເຢຊູ? ສິ່ງເຫລົ່ານີ້ແຫລະເຮົາຄວນຮຽນຮູ້ຈາກຊີວິດຂອງຊັກຂາຍນາຍດ່ານພາສີຜູ້ຊຶ່ງຝູງຊົນກຽດຊັງ.

<u>**ຕ້ອນຮັບພຣະເຢຊູ**</u> ລູກາ 19:5-7

"*ເມື່ອພຣະອົງສະເດັດມາເຖິງບ່ອນນັ້ນ ພຣະອົງຊົງແຫງນພຣະພັກ* (ແຫງນໜ້າ) *ເບິ່ງຊັກຂາຍ ຈຶ່ງຊົງກ່າວວ່າຊັກຂາຍເອີຍ, ຈົ່ງຮີບລົງມາ ເພາະວ່າເຮົາຈະຕ້ອງພັກຢູ່ກັບເຮືອນຂອງທ່ານ* "(ຂໍ້ 5). ເຮົາຮູ້ກັນຢູ່ແລ້ວວ່າມີຄົນໜາແໜ້ນໄປຕາມຖນົນຫົນທາງ ແຕ່ພຣະເຢຊູກໍບໍ່ໄດ້ຢຸດເວົ້າກັບຜູ້ໃດເປັນພິເສດ ມາບັດນີ້ພຣະເຢຊູຊົງເຫັນຊັກຂາຍປີນຢູ່ເທິງຕົ້ນໄມ້ດ້ວຍຄວາມຢາກຮູ້, ຢາກເຫັນພຣະອົງຢ່າງຈິງໃຈ ພຣະອົງຈຶ່ງຢຸດແລະເວົ້າກັບຊັກຂາຍໂດຍເອີ້ນຊື່ຂອງລາວ ທັ້ງໆທີ່ພຣະອົງບໍ່ຮູ້ຈັກຊັກຂາຍມາກ່ອນ, ທຳນອງດຽວກັນໃນຂະນະທີ່ພຣະອົງຊົງເອີ້ນສາວົກສິບສອງຄົນນັ້ນພຣະອົງກໍເອີ້ນພວກເພິ່ນດ້ວຍຊື່ຂອງເພິ່ນ. ຂ້າພະເຈົ້າມີບັນຫາເຣື່ອງຊື່ຂອງຄົນໂດຍສະເພາະແມ່ນຊື່ຂອງຄົນຕ່າງຊາດ, ເພິ່ນແນະນຳຊື່ຂອງເພິ່ນແລ້ວກໍຖາມສະບາຍດີກັນບໍ່ທັນເຖິງຫ້ານາທີກໍລືມຊື່ເພິ່ນແລ້ວ, ມາເຖິງບົດຮຽນບົດນີ້ເຮັດໃຫ້ຂ້າພະເຈົ້າອັສຈັນໃຈວ່າພຣະເຢຊູເອີ້ນຊື່ພວກສາວົກແລະຊັກຂາຍໂດຍບໍ່ຮູ້ຈັກກັນມາກ່ອນ ດ້ວຍເຫດນີ້ຂ້າພະເຈົ້າຈຶ່ງເຊື່ອແນ່ວ່າພຣະເຢຊູຊົງເປັນພຣະເຈົ້າ. ສ່ວນຊັກຂາຍກໍຕົກຕະລຶງເພາະພຣະເຢຊູຮູ້ຈັກຊື່ຂອງເພິ່ນ.

ພຣະອົງກ່າວວ່າ "*ຊັກຂາຍເອີຍ, ຈົ່ງຮີບລົງມາ ເພາະວ່າເຮົາຈະຕ້ອງພັກຢູ່ກັບເຮືອນຂອງທ່ານ* " ຊັກຂາຍກໍຟ້າວລົງຈາກຕົ້ນໄມ້ມາຫາພຣະອົງ. ພຣະຄັມພີບອກວ່າຊັກຂາຍລົງມາຕ້ອນຮັບພຣະອົງດ້ວຍຄວາມຍິນດີ, "*ຊັກຂາຍກໍຮີບລົງມາຕ້ອນຮັບພຣະອົງດ້ວຍຄວາມຍິນດີ* "(ຂໍ້ 6). ຄຳວ່າດ້ວຍຄວາມຍິນດີນີ້ມີຄວາມໝາຍວ່າລາວເຕັມໃຈ ແລະເປີດໃຈຕ້ອນຮັບພຣະອົງ ຍ້ອນການເປີດໃຈຕ້ອນຮັບນີ້ເອງພຣະເຢຊູຈຶ່ງໄປພັກເຊົາທີ່ເຮືອນຂອງຊັກຂາຍ. ຮູບພາບຂອງການຮ້ອງເອົາຊັກຂາຍໄດ້ຊີ້ໃຫ້ເຫັນການຊົງເອີ້ນຜູ້ຮັບໃຊ້ຕ່າງໆຂອງພຣະເຢຊູຄຣິດ ຈະຕ້ອງລົງຈາກການເປັນຜູ້ໃຊ້ມາເປັນຜູ້ຮັບໃຊ້. ຫລັງຈາກຊັກຂາຍລົງມາຈາກຕົ້ນໄມ້ແລ້ວເພິ່ນກໍພາພຣະເຢຊູໄປຍັງເຮືອນຂອງເພິ່ນ, ນີ້ແຫລະຄືບົດຮຽນອັນສຳຄັນຂອງຄຣິສຕຽນທຸກຄົນຄືເຮົາຈະຕ້ອງຖ່ອມລົງແລ້ວພຣະອົງກໍຈະຊົງຢູ່ກັບເຮົາ.

"*ເມື່ອຄົນທັງປວງໄດ້ເຫັນດັ່ງນັ້ນກໍພາກັນຈົ່ມວ່າ ເປັນຫຍັງໜໍ, ທ່ານຜູ້ນີ້ຈຶ່ງເຂົ້າໄປພັກຢູ່ກັບຄົນນອກສິນທັມ* "(ຂໍ້ 7). ຄຳວ່າຄົນທັງປວງແມ່ນຮວມທັງພວກຢູ່ໃນສາສນາແລະນອກສາສນາ ພວກໃນສາສນາຈົ່ມເພາະເຂົາຄຶດວ່າພຣະເຢຊູບໍ່ໜ້າຈະໄປພັກເຊົາແລະຢູ່ກິນກັບຄົນບາບຄືຊັກຂາຍ ດ້ວຍໃຈຂອງພວກເຂົາຄຶດວ່າຊັກຂາຍເປັນຄົນຂາຍຊາດເກັບພາສີຈາກຄົນຢິວເພື່ອໄປສົ່ງເສີມກອງທັບຂອງໂຣມັນແລ້ວກັບມາກົດຂີ່ຂົ່ມເຫງຊາດຢິວ ດ້ວຍເຫດນີ້ຊາວຢິວທີ່ຢູ່ໃນສາສນາ ແລະນອກສາສນາຈະພາກັນກຽດຊັງຊັກຂາຍ. ສ່ວນພຣະເຢຊູບໍ່ໄດ້ກຽດຊັງຄົນເກັບພາສີທີ່ຖືວ່າເປັນເປັນຄົນຊົ່ວໃນ ສາຍຕາຂອງຄົນທົ່ວໄປ, ຂ່າວປະເສີດບໍ່ໄດ້ເລືອກໜ້າຜູ້ໃດ ໃຜກໍຕາມຍິນດີຕ້ອນຮັບເອົາຂ່າວປະເສີດຜູ້ນັ້ນກໍຈະພົ້ນ. ບົດຮຽນຕອນນີ້ມີຢູ່ວ່າ ເມື່ອເຮົາຕ້ອນຮັບເອົາພຣະເຢຊູມາເປັນພຣະເຈົ້າຂອງພວກເຮົາແລ້ວ ຍາດພີ່ນ້ອງແລະຄົນອື່ນໆ

ຈະເວົ້າວ່າເຮົາເປັນຄົນຂາຍຊາດ, ຂາຍສາສນາ ຈົນລາງຄົນໄດ້ປະລະຄວາມເຊື່ອຂອງຕົນກັບໄປຍັງຊີວິດເດີມ, ຈົ່ງຮຽນຮູ້ວ່າ ເມື່ອເວລາເຮົາຈົ່ມໃຫ້ພຣະເຢຊູໄປຢູ່ກິນກັບຄົນນອກສາສນາພຣະອົງບໍ່ໄດ້ອອກຈາກເຮືອນຊັກຂາຍເລີຍ.

**<u>ສໍາຄັນກວ່າຮັ່ງມີ</u>** ລູກາ 19:8-10

ຊັກຂາຍໄດ້ປະລະໂຕະເກັບພາສີມາຕ້ອນຮັບພຣະເຢຊູດ້ວຍຄວາມປິຕິຍິນດີ ແລະເພິ່ນກ່າວສາຣະພາບບາບຕໍ່ພຣະເຢຊູວ່າ *"ເບິ່ງແມນາຍເອີຍ, ເຄື່ອງຂອງຂອງຂ້ານ້ອຍ ຂ້ານ້ອຍຍອມໃຫ້ແກ່ຄົນຍາກຈົນເຄິ່ງນຶ່ງ ແລະຖ້າຂ້ານ້ອຍໄດ້ສໍ້ໂກງເອົາຂອງຂອງຜູ້ໃດ ຂ້ານ້ອຍກໍຍອມສົ່ງຄືນໃຫ້ສີ່ທໍ່"* (ຂໍ້ 8). ຊັກຂາຍກ່າວເຊັ່ນນີ້ເພາະລາວຮູ້ໃນໃຈຂອງລາວວ່າລາວໄດ້ເຮັດຜິດແລ້ວເມື່ອລາວພົບພຣະເຢຊູ, ດ້ວຍເຫດນີ້ແຫລະທຸກຄົນທີ່ພົບກັບພຣະເຢຊູກໍຈະຮູ້ຈັກສໍານຶກຜິດ ດ້ວຍວ່າແສງສວ່າງແຫ່ງພຣະທັມໄດ້ສ່ອງແຈ້ງໃຫ້ເຫັນຄວາມຜິດບາບຂອງຕົນ. *"ເຮົານີ້ແຫລະ, ເປັນຄວາມສວ່າງຂອງໂລກ ຜູ້ທີ່ ຕິດຕາມເຮົາມາຈະບໍ່ຫລົງໄປໃນທີ່ມືດ"* (ໂຢຮັນ 8:12). ພຣະຄັມພີບໍ່ໄດ້ບອກວ່າພະເຢຊູໄດ້ລົມກັບຊັກຂາຍແດ່ຢ່າງໃດ ແຕ່ພຣະຄັມພີບອກວ່າຊັກຂາຍອາສາສມັກເອົາເຂົ້າຂອງທີ່ລາວມີໄປແຈກຢາຍໃຫ້ຄົນຍາກຈົນເຄິ່ງນຶ່ງ ແລະຍອມສົ່ງສິ່ງຂອງທີ່ລາວສໍ້ໂກງມານັ້ນສົ່ງຄືນໃຫ້ເຈົ້າຂອງເດີມບໍ່ແມ່ນແຕ່ທໍ່ດຽວ ແຕ່ແມ່ນສີ່ທໍ່ ດ້ວຍຄວາມຈິງໃຈຂອງລາວຊຶ່ງເປັນການສະແດງເຖິງການກັບໃຈຢ່າງແທ້ຈິງ. ບາງທີຊີວິດຂອງທ່ານ ອາດຈະຄ້າຍຊັກຂາຍທີ່ໄດ້ລັກໂລບຫລືສໍ້ໂກງມາແລ້ວ ແຕ່ທ່ານບໍ່ອາດສາມາດຄືນຂອງນັ້ນໃຫ້ເຈົ້າຂອງເດີມໄດ້ ເພາະວ່າບາງທີອາດຈະເປັນເຄື່ອງຈາກໂຮງງານບ່ອນທີ່ທ່ານເຮັດງານ ຫາກທ່ານເອົາໄປສົ່ງຄືນກໍຢ້ານວ່າຈະຖືກໄລ່ອອກຈາກງານ, ບົດຮຽນມີຢູ່ວ່າຕໍ່ໄປຢ່າເຮັດຢ່າງນັ້ນອີກເດັດຂາດກໍຖືວ່າເປັນຫລັກຖານແຫ່ງການເລີ່ມຕົ້ນການກັບໃຈແລ້ວ.

ພຣະເຢຊູຈຶ່ງຊົງກ່າວວ່າ *"ວັນນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ ເພາະຄົນນີ້ເປັນລູກຫລານຂອງອັບຣາຮາມເໝືອນກັນ"* (ຂໍ້ 9). ເປັນການປະກາດຈາກປາກຂອງພຣະເຢຊູເອງວ່າຄົວເຮືອນຂອງຊັກຂາຍໄດ້ພົ້ນຈາກຄວາມຜິດ ແລະຄວາມບາບທັງໝົດແລ້ວ, ຊັກຂາຍກາຍເປັນຜູ້ບໍຣິສຸດໃນສາຍພຣະເນດຂອງພຣະອົງນັບແຕ່ເວລານັ້ນເປັນຕົ້ນມາດ້ວຍການກະທໍາຂອງລາວເປັນຫລັກຖານໃນການກັບໃຈຢ່າງແທ້ຈິງ. ຄໍາປະກາດຮັບເອົາຊັກຂາຍເປັນຄໍາປະກາດທີ່ຄຣິສຕຽນ ທຸກຄົນຢາກໄດ້ຍິນໃນວັນສຸດທ້າຍ ເຮົາຈະໄດ້ຍິນຄໍານີ້ຫລືບໍ່ກໍຂຶ້ນກັບການກັບໃຈຂອງເຮົາແມ່ນດ້ວຍຄວາມຈິງໃຈຄືຊັກຂາຍຫລືບໍ່? ພຣະເຢຊູຊົງກ່າວວ່າ *"ໂຕໂອດໂອຈະເຂົ້າຮູເຂັມ ກໍງ່າຍກວ່າຄົນຮັ່ງມີຈະເຂົ້າໄປໃນແຜ່ນດິນຂອງພຣະເຈົ້າ"* (ມັດທາຍ 19:24). ຄວາມລອດພົ້ນທີ່ພຣະເຢຊູຊົງກ່າວນັ້ນຍິ່ງໄປກວ່າການຢຸດເຮັດສິ່ງຊົ່ວຊ້າມົວໝອງ ຄືຜູ້ທີ່ກັບໃຈແທ້ຈະເຫັນຄຸນຄ່າຂອງພຣະເຢຊູສູງໄປກວ່າສິ່ງຂອງແລະສົມບັດຕ່າງໆ, ຊັກຂາຍໄດ້ເຫັນວ່າພຣະເຢຊູສໍາຄັນກວ່າສິ່ງຂອງທີ່ລາວມີຢູ່ ລາວຈຶ່ງຕັດສິນໃຈສົ່ງໃຫ້ເຈົ້າຂອງເດີມ, ດັ່ງເຮົາຈະເຫັນໃນຄໍາອຸປະມາເຣື່ອງໄຂ່ມຸກດັ່ງນີ້; *"ເມື່ອພົບໄຂ່ມຸກເມັດນຶ່ງທີ່ມີຄ່າຫລາຍ ກໍໄປຂາຍທຸກສິ່ງທີ່ຕົນມີຢູ່ແລ້ວໄປຊື້ໄຂ່ມຸກນັ້ນ"* (ມັດທາຍ 13: 46). ພຣະເຢຊູໄດ້ປຽບເພິ່ນເອງເປັນເໝືອນໄຂ່ມຸກ ເມື່ອຜູ້ທີ່ພົບແລະເຂົ້າໃຈແລ້ວກໍຈະສະລະທຸກສິ່ງແລ້ວຕິດຕາມພຣະອົງ.

ພຣະເຢຊູຍັງປະກາດວ່າຊັກຂາຍເປັນລູກຫລານຂອງອັບຣາຮາມອີກ *"ເພາະຄົນນີ້ເປັນລູກຫລານຂອງອັບຣາຮາມເໝືອນ ກັນ"* ມີຄວາມໝາຍວ່າເພິ່ນມີຄວາມເຊື່ອຄືອັບຣາຮາມແລະເພິ່ນຈະສອນຄອບຄົວຂອງເພິ່ນໃຫ້ປະຕິບັດພຣະເຈົ້າຄື ກັບອັບຣາຮາມສອນຄອບຄົວຂອງເພິ່ນ. *"ດ້ວຍວ່າບຸດມະນຸດໄດ້ເຂົ້າມາເພື່ອຈະຊອກຫາແລະໂຜດເອົາຜູ້ທີ່ຫລົງເສັຽໄປແລ້ວໃຫ້ລອດພົ້ນ"* (ຂໍ້ 10). ດ້ວຍເຫດນີ້ພຣະອົງຈຶ່ງມີອໍານາດໃນການປະກາດວ່າ *ວັນນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້.*

**<u>ຄໍາຖາມ:</u>**

1. ທຸກວັນອາທິດພຣະເຢຊູມີນັດກັບທ່ານທີ່ໂບດ ທ່ານໄດ້ຕັ້ງໃຈໄປພົບກັບພຣະອົງຕາມເວລານັດຫລືບໍ່?

໒. ເມື່ອທ່ານໄປພົບກັບພຣະອົງທີ່ໂບດ ທ່ານໄດ້ເບິ່ງພຣະອົງຄ້າຍຄືຊັກຂາຍຢ່າງໃດ?

3. ເປັນຫຍັງພຣະເຢຊູຈຶ່ງຢຸດເວົ້າກັບຊັກຂາຍ ແລະຍັງພັກເຊົາຢູ່ທີ່ບ້ານຂອງເພິ່ນ?

4. ການທີ່ພຣະເຢຊູໄປພັກເຊົາທີ່ເຮືອນຂອງຊັກຂາຍໄດ້ສອນຫຍັງທ່ານແດ່?

5. ເມື່ອຊັກຂາຍພົບກັບພຣະເຢຊູແລ້ວຄວາມຄິດຂອງລາວປ່ຽນຢ່າງໃດ?

6. ເປັນຫຍັງພຣະເຢຊູຈຶ່ງປະກາດວ່າ ຄວາມລອດພົ້ນໄດ້ມາເຖິງເຮືອນຫລັງນີ້?

໗. ເຮັດແນວໃດພຣະເຢຊູຈຶ່ງຈະປະກາດທີ່ເຮືອນຂອງທ່ານວ່າ ຄວາມລອດພົ້ນມາເຖິງເຮືອນຫລັງນີ້ແລ້ວ?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

## <u>ບົດຮຽນທີ 13</u>
## <u>ເຖິງເປົ້າໝາຍແລ້ວ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ລູກາ 23:32-49

**<u>ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:</u>** ລູກາ 23:13-49

**<u>ຈຸດສໍາຄັນຂອງບົດຮຽນນີ້</u>:** ການຟື້ນພຣະຊົນຂອງພຣະເຢຊູເປັນຄວາມລອດພົ້ນສໍາລັບຜູ້ເຊື່ອ

**<u>ຄໍາຖາມເພື່ອການສໍາຣວດ:</u>** ການຄືນມາຈາກຕາຍຂອງພຣະເຢຊູມີຄວາມສໍາຄັນຫຍັງ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຊອກຄົ້ນຫາວ່າການຄືນມາຈາກຕາຍມີຄວາມໝາຍຫຍັງສໍາລັບຂ້ອຍ

**<u>ໜ້າທີ່ອັນສໍາຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້</u>**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

### <u>ບົດນໍາ</u>

ພາຣະກິດຂອງພຣະເຢຊູສໍາເຣັດທີ່ເທິງກາງແຂນດ້ວຍຄວາມຕາຍຂອງພຣະອົງເພື່ອຊົງໄຖ່ຄົນທັງຫລາຍໃຫ້ລອດພົ້ນຈາກຄວາມຜິດບາບທັງສິ້ນ, ການຕາຍຂອງພຣະອົງແມ່ນການຕາຍແທນຄວາມຜິດບາບຂອງທຸກຄົນທີ່ຍອມຮັບວ່າພຣະເຢຊູຊົງເປັນພຣະເຈົ້າ.

**<u>ຊົງຊໍາຣະໜີ້</u>** ລູກາ 23:32-39

ດັ່ງທີ່ຜູ້ປະກາດພຣະທັມຜູ້ນຶ່ງໃນສມັຍບູຮານມີຊື່ວ່າເອຊາຢາໄດ້ທໍານວາຍໄວ້ວ່າ *"ດັ່ງນັ້ນແຫລະ ເຮົາຈະໃຫ້ລາວໄດ້ຮັບກຽດໄດ້ເປັນ ໃຫຍ່ແລະມີອໍານາດໃນທ່າມກາງຄົນທັງຫລາຍ ລາວຍິນດີສະລະຊີວິດ ແລະມີສ່ວນຮ່ວມຢູ່ນໍາພວກອາຊະຍາກອນ ລາວໄດ້ຮັບແບກເອົາບາບຂອງຄົນຈໍານວນຫລາຍ ແລະໄດ້ທົນຮັບເອົາໂທດທີ່ພວກເຂົາໄດ້ຮັບ"* (ເອຊາຢາ 53: 12). ເອຊາຢາອ້າງຄໍາເວົ້າຂອງພຣະເຈົ້າທີ່ຊົງກ່າວເຖິງພຣະເຢຊູໃນສມັຍບູຮານ ມາບັດນີ້ຄໍາເວົ້າຂອງພຣະເຈົ້າທີ່ເອຊາຢາອ້າງເຖິງນັ້ນກໍກາຍມາເປັນຄວາມຈິງແລ້ວ ຄືພຣະອົງຍອມສະລະຊີວິດຂອງພຣະອົງເປັນເໝືອນອາຊະຍາກອນເພື່ອໄຖ່ໂທດຂອງຄົນທັງຫລາຍຕາມທີ່ໄດ້ກ່າວມາແລ້ວ ພຣະອົງບໍ່ມີຄວາມຜິດໃນການສືບສວນຂອງເຈົ້າໜ້າທີ່ທາງການ ແຕ່ພວກຄົນບາບທັງຫລາຍຕ່າງຫາກທີ່ຂ້າພຣະອົງໃນຖ້າມກາງໂຈນຮ້າຍທັງສອງ ຂ້າງ. ເຣື່ອງຄວາມຕາຍຂອງພຣະເຢຊູນີ້ຍັງລາມມາເຖິງຜູ້ຮັບໃຊ້ຂອງພຣະອົງໃນສມັຍນີ້ດ້ວຍ ຄືຜູ້ຮັບໃຊ້ພຣະອົງ ຍັງຕ້ອງຖືກດ່າວ່າ, ຖືກເຂົ້າຫາ ເຣື່ອງຣາວຕ່າງໆໂດຍບໍ່ມີຄວາມຈິງ ຫລາຍພັນຄົນກໍຖືກຂ້າຕາຍເໝືອນອາຊະຍາ ກອນ. *"ພຣະເຢຊູຊົງກ່າວວ່າ "ຂ້ອຍໃຊ້ບໍ່ທ່ອນໃຫຍ່ກວ່ານາຍຂອງຄົນ ຖ້າເຂົາຂົ່ມເຫງເຮົາ ເຂົາກໍຈະຂົ່ມເຫງ ທ່ານເໝືອນກັນ"* ໂຢຮັນ 15:20).

ພວກທະຫານບັງຄັບພຣະອົງແບກໄມ້ກາງແຂນໄປຍັງໂນນກະໂຫລກຫົວ, ພຣະຄັມພີກ່າວເປັນພາສາເຮັບເຣີວ່າໂຄລະໂຄທາ (ມັດທາຍ 27:33) (ຄົນລາວມັກຈະເອີ້ນບ່ອນແນວນີ້ວ່າຫົວຜີຫລ້ອນ). ພຣະເຢຊູໄດ້ແບກກາງແຂນຂອງພຣະອົງໄປຍັງໂນນພູໂຄລະໂຄທາດ້ວຍຄວາມເຈັບປວດດ້ວຍພວກເຂົາຂ້ຽນຕີພຣະອົງຢ່າງໜ້າເວທະນາສົງສານ ພຣະອົງ

ຊົງຖືກຄຶງໄວ້ທີ່ໄມ້ກາງແຂນຮ່ວມກັບໂຈນຮ້າຍສອງຄົນ, ພວກເຂົາໄດ້ລົງໂທດພຣະອົງຜູ້ທີ່ບໍ່ມີຄວາມຜິດໃດໆ ເໝືອນກັບວ່າພຣະອົງເປັນອາຊະຍາກອນ. ນີ້ແຫລະແມ່ນຮູບພາບຂອງພຣະອົງຊົງຖືກຄຶງໄວ້ແລະຕາຍແທນຄວາມຜິດ ແລະຄວາມບາບຂອງມະນຸດທັງຫລາຍ ພຣະອົງຍອມສະລະຊີວິດຂອງພຣະອົງເອງເພື່ອຄົນທັງຫລາຍທີ່ໄວ້ວາງໃຈໃນພຣະອົງຈະໄດ້ພົ້ນຈາກບຶງໄຟນະຮົກ.

"*ເມື່ອມາເຖິງບ່ອນນຶ່ງທີ່ເອີ້ນວ່າຫົວກະໂຫລກ ເຂົາກໍຄຶງພຣະອົງໄວ້ບ່ອນນັ້ນທີ່ໄມ້ກາງແຂນ ພ້ອມທັງຜູ້ຮ້າຍສອງຄົນເບື້ອງຂວາຄົນນຶ່ງ, ເບື້ອງຊ້າຍຄົນນຶ່ງ ຝ່າຍພຣະເຢຊູຊົງອ້ອນວອນວ່າ ໂອພຣະບິດາເຈົ້າ, ຂໍໂຜດອະພັຍເຂົາ ເພາະເຂົາບໍ່ຮູ້ວ່າເຂົາກຳລັງເຮັດອັນໃດ* " (ຂໍ້ 32-34). ບ່ອນຫົວກະໂຫລກແມ່ນບ່ອນປະຫານນັກໂທດທີ່ພວກໂຣມັນຕັ້ງໄວ້ເພື່ອປະຫານນັກໂທດ. ພຣະເຢຊູຖືກນຳໄປຢ່າງນັກໂທດ ແລະຖືກປະຫານຮ່ວມກັບພວກນັກໂທດປະຫານ, ເຣື່ອງນີ້ເປັນຮູບພາບໃຫ້ເຫັນແຈ້ງວ່າຄວາມຜິດບາບຂອງພວກເຮົາທັງຫລາຍເປັນເຫມືອນນັກໂທດປະຫານ ດ້ວຍວ່າພຣະເຢຊູຊົງຖືກປະຫານເພື່ອໃຊ້ໜີ້ຄວາມຜິດແລະຄວາມບາບຂອງພວກເຮົາ. ໃນເວລານັ້ນພຣະເຢຊູອ້ອນວອນວ່າ *ໂອ ພຣະບິດາເຈົ້າ, ຂໍໂຜດອະພັຍເຂົາ ເພາະເຂົາບໍ່ຮູ້ວ່າເຂົາກຳລັງເຮັດອັນໃດ* (ຂໍ້ 34). ພຣະເຢຊູອ້ອນວອນຂໍໃຫ້ພຣະເຈົ້າອະພັຍພວກທະຫານ ແທນທີ່ພຣະອົງຈະປ້ອຍດ່າເຂົາ ດ້ວຍວ່າພວກເຂົາເຮັດຕາມຄຳສັ່ງຂອງສານແຂນຮີດິນເທົ່ານັ້ນ. ຈາກນັ້ນພວກເຂົາກໍເອົາເຄື່ອງທົງ (ເຄື່ອງນຸ່ງ)ຂອງພຣະອົງໄປຈົກສລາກແບ່ງປັນກັນດັ່ງທີ່ກ່າວໄວ້ແລ້ວໃນບົດເພງສັຣເສີນ 22:18.

ພວກປະຊາຊົນທີ່ຍືນເບິ່ງແລະພວກເຈົ້ານາຍໄດ້ເຍາະເຍີ້ຍຢູ່ສາມປະການຄື; 1. "*ມັນຊ່ອຍຄົນອື່ນໃຫ້ພົ້ນ ຖ້າຄົນນີ້ເປັນພຣະຄຣິດທີ່ພຣະເຈົ້າຊົງເລືອກໄວ້ນັ້ນ ໃຫ້ມັນຊ່ອຍຕົນເອງເສັຽ* " (ຂໍ້ 35). ສັງເກດຄຳເວົ້າຂອງເຂົາວ່າ ຊ່ອຍຄົນອື່ນໃຫ້ພົ້ນ ນັ້ນເປັນຄວາມຈິງເພາະພຣະອົງຊົງຊ່ອຍຄົນທັງຫລາຍໃຫ້ພົ້ນຍ້ອນການທີ່ພຣະອົງຖືກຄຶງນີ້, ເຂົາເວົ້າອີກວ່າຖ້າຄົນນີ້ເປັນພຣະຄຣິດ ແປວ່າຖ້າຄົນນີ້ເປັນພຣະຜູ້ຊ່ອຍໃຫ້ລອດທີ່ພຣະເຈົ້າຊົງເລືອກໄວ້ ຈົ່ງເຮັດໃຫ້ຕົນເອງຫລຸດພົ້ນຈາກໄມ້ກາງແຂນ ຂ້າພະເຈົ້າເຊື່ອວ່າພຣະເຈົ້າມີຣິດອຳນາດຈະອອກຈາກກາງແຂນໄດ້ຢ່າງງ່າຍດາຍ ແຕ່ມະນຸດກໍຈະບໍ່ພົ້ນຈາກຄວາມຜິດບາບ ດັ່ງນັ້ນພຣະອົງຈຶ່ງຍອມຖືກຄຶງໃນຮູບພາບຄືງຄວາມບາບຂອງມະນຸດທົ່ວໂລກທີ່ຍອມຮັບເອົາພຣະອົງເປັນພຣະຜູ້ຊ່ອຍໃຫ້ລອດ ຄວາມບາບຂອງຜູ້ນັ້ນກໍຄຶງໄວ້ທີ່ກາງແຂນແລ້ວ. 2. ເຂົາເຍາະເຍີ້ຍວ່າເປັນກະສັດຊາດຢິວໂດຍກ່າວວ່າ *ຖ້າເປັນກະສັດຊາດຢິວຈົ່ງຊ່ອຍຕົວເອງໃຫ້ພົ້ນເສັຽ* (ຂໍ້ 37). ດ້ວຍວ່າກະສັດມີອຳນາດສັ່ງປ່ອຍແລະສັ່ງຂ້າພວກນັກໂທດ. 3. ນັກໂທດທີ່ກຳລັງຈະຖືກປະຫານກໍເຍາະເຍີ້ຍວ່າ *ເຈົ້າເປັນພຣະຄຣິດບໍ່ແມ່ນຫລື ຈົ່ງຊ່ອຍຕົວເອງແລະຊ່ອຍເຮົາໃຫ້ພົ້ນ* (ຂໍ້ 39). ຂ້າພະເຈົ້າຄິດເຫັນຄົນບາບທຸກວັນນີ້ກຳລັງຈະຕາຍຕົກນະຮົກກໍເຍີ້ຍຄຣິສຕຽນໃນທຳນອງດຽວກັນ, ຫາກເຂົາເຍີ້ຍຄຣິສຕຽນກໍແມ່ນເຍີ້ຍພຣະເຢຊູອີງຕາມພຣະທັມກິຈການ 9:4-5.

**<u>ຄຳສັນຍາມາເຖິງແລ້ວ</u>** ລູກາ 23: 40-44

ຫລັງຈາກນັກໂທດເວົ້າເຍາະເຍີ້ຍພຣະເຢຊູ ນັກໂທດອີກຜູ້ນຶ່ງກ່າວວ່າ "*ໂຕບໍ່ຢ້ານພຣະເຈົ້າຫລື ເພາະໂຕກໍຖືກໂທດເໝືອນກັນ ຝ່າຍເຮົາກໍສົມຄວນກັບໂທດນັ້ນແທ້ ເພາະເຮົາກຳລັງໄດ້ຮັບສົມກັບການທີ່ເຮົາເຮັດນັ້ນ ແຕ່ຜູ້ນີ້ບໍ່ໄດ້ເຮັດຜິດອັນໃດ ແລ້ວຄົນນັ້ນຈຶ່ງທູນວ່າ ພຣະເຢຊູເອີຍ, ເມື່ອໃດທ່ານມາເຖິງແຜ່ນດິນຂອງທ່ານ ຂໍຈົ່ງລະນຶກເຖິງຂ້ານ້ອຍແດ່* " (ຂໍ້ 40-42). ເຮົາເຫັນວ່າຄົນນຶ່ງເວົ້າເຍີ້ຍແລະອີກຄົນນຶ່ງຍອມເຊື່ອເປັນຮູບພາບຂອງຄົນເຮົາໃນເວລນີ້ມີຄົນນຶ່ງເວົ້າເຍີ້ຍ ແລະອີກຄົນນຶ່ງຍອມຮັບເຊື່ອສ່ວນຄົນທີ່ຍອມຮັບເຊື່ອນັ້ນພຣະເຢຊູຊົງກ່າວກັບລາວວ່າ "*ເຮົາບອກທ່ານຕາມຄວາມຈິງວ່າ ວັນນີ້ທ່ານຈະຢູ່ກັບເຮົາໃນທີ່ສຸຂເສີມ* " (ຂໍ້ 43). ນີ້ເປັນຄຳສັນຍາຂອງພຣະເຢຊູທີ່ມີຕໍ່ໂຈນຮ້າຍທີ່ຍອມກັບໃຈໃນລົມຫາຍໃຈຄັ້ງສຸດທ້າຍທີ່ສະແດງໃຫ້ເຫັນວ່າຄົນຊົ່ວປານໃດພຣະເຢຊູກໍຊົງອະພັຍໃຫ້ຫາກຍອມກັບໃຈ. ຄຳສັນຍານັ້ນຍັງລາມມາເຖິງພວກເຮົາທຸກວັນນີ້ ເຮົາຈະເປັນຜູ້ໃດໃນຈຳນວນຜູ້ຮ້າຍສອງຄົນນີ້, ຄຳສາຣະພາບຂອງນັກໂທດຜູ້ທີສອງທີ່ກ່າວວ່າ *ຝ່າຍເຮົາກໍສົມຄວນກັບໂທດນັ້ນແທ້ ເພາະເຮົາກຳລັງໄດ້ຮັບສົມກັບການທີ່ເຮົາເຮັດນັ້ນ.* ດ້ວຍ

ຄໍາສາຣະພາບນີ້ເອງຊາຍຄົນນີ້ຈຶ່ງພົ້ນຈາກບຶງໄຟນະຣົກແລ້ວຂຶ້ນໄປຍັງສວັນຊັ້ນຟ້າຮ່ວມກັບພຣະເຢຊູ. ຄໍາວ່າສຸຂເສີມເປັນພາສາທີ່ແປມາຈາກພາສາເປີຊຽນມີຄວາມໝາຍວ່າ <u>ສວນ</u> ແລະພາສາກຣີກທີ່ແປມາຈາກຊັບຕູຈິນໄດ້ໃຈຄວາມວ່າ <u>ສວນເອເດນ</u> ໃນປະຖົມມະການບົດ 2. ທີ່ສວນເອເດນນັ້ນມີຄວາມອຸດົມສົມບູນທຸກຢ່າງແລະຍັງຢູ່ໃນຄວາມຄຸ້ມຄອງຂອງພຣະເຈົ້າອີກ. ຫລັງຈາກພຣະເຢຊູສັນຍາກັບຜູ້ກັບໃຈແລ້ວກໍມີເຫດການອັນໜ້າຢ້ານເກີດຂຶ້ນ.

*"ເວລານັ້ນພໍມະນານ ທຶກໂມງ* (ຊົ່ວໂມງທີ່ທຶກນັບແຕ່ 6ໂມງເຊົ້າໄປແປວ່າ 12 ໂມງທ່ຽງ) *ກໍບັງເກີດມືດມົວທົ່ວແຜ່ນດິນຈົນເຖິງເກົ້າໂມງ* (ຊົ່ວໂມງທີ່ເກົ້າ ແປວ່າ 3 ໂມງແລງ ) *ແສງຕາເວັນກໍມືດໄປ ແລະຜ້າກັ້ງໃນພຣະວິຫານກໍຊີ່ງຈີກເຄິ່ງກາງ "* (ຂໍ້ 44). ພຣະທັມມັດທາຍ 27:51 ບອກວ່າ ຜ້າກັ້ງນັ້ນຈີກແຕ່ເທິງລົງລຸ່ມ, *"ແລະເບິ່ງແມ, ຜ້າກັ້ງໃນພຣະວິຫານກໍຖືກຊີ່ງຈີກເປັນສອງທ່ອນ ຕັ້ງແຕ່ເທິງລົງລຸ່ມ ແຜ່ນດິນກໍໄຫວ ສີລາກໍແຕກອອກຈາກກັນ ອຸບໂມງຝັງສົບກໍໄຂອອກ ສົບພວກໄພ່ພົນຂອງພຣະເຈົ້າຫລາຍຄົນທີ່ລ່ວງລັບໄປແລ້ວກໍເປັນຄືນມາ "* ມທ 27:51-52). ເຣື່ອງຂອງຟ້າມືດແລະຜ້າກັ້ງໃນພຣະວິຫານຈີກນີ້ເປັນເຣື່ອງໃຫຍ່ຫລາຍສໍາລັບຊາດຢິວດ້ວຍວ່າຜ້າກັ້ງນັ້ນເຮັດດ້ວຍຜ້າແວວແວດຢ່າງດີ ແລະ ຍັງເປັນຜ້າກັ້ງໃນພຣະວິຫານຂອງພຣະເຈົ້າອີກ, ພ້ອມນີ້ຍັງສະແດງໃຫ້ເຫັນຣິດເດດຂອງພຣະເຈົ້າອີກວ່າ ດວງອາທິດມືດກໍຍັງມືດແລະໂສກເສົ້າ ແລະຄວາມມືດນັ້ນຍັງເປັນທີ່ບົ່ງບອກວ່າຄົນໃນໂລກແຫ່ງຄວາມມືດມົນທີ່ເຮັດໄປໂດຍບໍ່ຮູ້ວ່າຕົນເອງເຮັດອັນໃດ.

**<u>ຄືນສູ່ສວັນ</u>** ລູກາ 23:45-49

ພຣະເຢຊູຊົງຮ້ອງໃຫ້ຂຶ້ນວ່າ *"ພຣະບິດາເອີຍ, ຂ້ານ້ອຍຂໍຝາກຈິດວິນຍານຂອງຂ້ານ້ອຍໄວ້ໃນພຣະຫັດຂອງພຣະອົງ ເມື່ອພຣະອົງຊົງກ່າວຢ່າງນັ້ນແລ້ວກໍສິ້ນພຣະຊົນ "* (ຂໍ້ 45-46). ຄໍາເວົ້າຄໍາສຸດທ້າຍໄດ້ສະແດງເຖິງຄວາມສັມພັນໃນຣະວ່າງພຣະບິດາແລະພຣະບຸດໄດ້ມີຄວາມສັມພັນກັນຢ່າງເລິກເຊິ່ງ ໂດຍສເພາະຢ່າງຍິ່ງເຮົາເຫັນວ່າພຣະບຸດຄືພຣະເຢຊູໄດ້ເຮັດສິ່ງນີ້ຕາມນໍ້າພຣະທັຍພຣະບິດາທຸກປະການ ສ່ວນພຣະບິດາກໍຊົງຍອມເສັຽສະລະພຣະບຸດອົງດຽວເປັນຄ່າໄຖ່ ໂທດຄວາມຜິດບາບຂອງຄົນທັງປວງ. ນັກສາສນາລາງຄົນແປຄໍາເວົ້າຂອງພຣະເຢຊູທີ່ເວົ້າວ່າ *" ຂ້ານ້ອຍຂໍຝາກຈິດວິນຍານຂອງຂ້ານ້ອຍໄວ້ໃນພຣະຫັດຂອງພຣະອົງ "* ແປວ່າຊີວິດແລະຈິດວິນຍານຂອງພຣະເຢຊູນັ້ນສຸດແລ້ວແຕ່ພຣະ ບິດາ ຫລືໃຫ້ເປັນຕາມນໍ້າພຣະທັຍຂອງພຣະບິດາ.ເມື່ອມາເຖິງຕອນນີ້ເຮົາຄວນຈະຖວາຍຕົວຂອງເຮົາເໝືອນດັ່ງພຣະ ເຢຊູພຣະອາຈານຂອງພວກເຮົາໂດຍກ່າວວ່າ ຊີວິດແລະຈິດວິນຍານຂອງຂ້ານ້ອຍສຸດແລ້ວແຕ່ພຣະບິດາ, ແຕ່ຫາກເມື່ອ ເຮົາກ້າກ່າວເຊັ່ນນີ້ແລ້ວເຮົາກໍບໍ່ຄວນກັງວົນນໍາອັນໃດເພາະວ່າໄດ້ມອບໃຫ້ພຣະເຈົ້າແລ້ວ. ພວກທະຫານແລະ ປະຊາຊົນທີ່ເຝົ້າຢູ່ໃກ້ຊິດໄມ້ກາງແຂນໄດ້ເຫັນເຫດການນີ້ເກີດຂຶ້ນຈຶ່ງຍອມຮັບວ່າພຣະເຢຊູບໍ່ມີຄວາມ ຜິດ. *"ເມື່ອນາຍຮ້ອຍທະຫານໄດ້ເຫັນການທີ່ເກີດຂຶ້ນນັ້ນ ຈຶ່ງສັຣເສີນພຣະເຈົ້າວ່າ ຈິງແທ້ແລ້ວ, ທ່ານຜູ້ນີ້ບໍ່ມີຄວາມຜິດຄົນທັງປວງທີ່ມາຊຸມນຸມເບິ່ງການແປກປລາດນັ້ນ ເມື່ອໄດ້ເຫັນເຫດການທີ່ເກີດຂຶ້ນນັ້ນ ກໍພາກັນຕີເອິກກັບຄືນໄປ "* (ຂໍ້ 47-48). ນາຍຮ້ອຍທະຫານທີ່ບັງຄັບໃຫ້ທະຫານຂ້ຽນຕີພຣະເຢຊູພ້ອມທັງພວກປະຊາຊົນທີ່ພາກັນເຍາະເຍີ້ຍນັ້ນໄດ້ພາກັນອອກປາກວ່າພຣະເຢຊູບໍ່ມີຄວາມຜິດອັນໃດແລະພວກເຂົາກໍກັບໄປດ້ວຍຄວາມເສັຍໃຈທີ່ໄດ້ເຮັດຜິດ. ເຣື່ອງນີ້ໄດ້ບອກໃຫ້ເຮົາຮູ້ວ່າໃນວັນນຶ່ງຂ້າງໜ້າພວກເຈົ້ານາຍທີ່ກົດຂີ່ຂົ່ມເຫງຄຣິສຕຽນພອມກັບຄົນທັງຫລາຍທີ່ກຽດຊັງຄຣິສຕຽນກໍຈະມີສະພາບແບບດຽວກັນກັບນາຍຮ້ອຍແລະປະຊົນທັງປວງທີ່ໄມ້ກາງແຂນນັ້ນ ຄືພວກເຂົາເຈົ້າຈະເສັຽໃຈທີ່ບໍ່ໄດ້ຮັບເຊື່ອພຣເຢຊູກ່ອນວັນສຸດທ້າຍ, ດັ່ງນັ້ນວັນນີ້ເຮົາຢ່າລໍ່ຊ້າຈົ່ງຍອມຮັບເຊື່ອພຣະອົງເສັຽ.

**<u>ຄໍາຖາມ:</u>**

1. ທ່ານເຄີຍໄດ້ຍິນຄຳວ່າ ຮຽນນຳຄຣູໃດເປັນຄືຄຣູນັ້ນບໍ່? ທ່ານເຊື່ອວ່າແມ່ນບໍ່?

2. ຜູ້ປະກາດພຣະທັມເອຊາຢາກ່າວເຖິງໃຜ?

3. ພຣະເຢຊູຊຶ່ງຜູ້ເປັນພຣະອາຈານເຮົາຖືກຂົ່ມເຫງ ແລ້ວເພິ່ນເຕືອນເຮົາແນວໃດແດ່?

4. ພຣະເຢຊູຜູ້ເປັນພຣະອາຈານເຮົາສິ້ນພຣະຊົນທີ່ໄມ້ກາງແຂນແທນຄວາມຜິດບາບຂອງເຮົາ ແລ້ວວັນຖ້ວນສາມ
   ເພິ່ນກໍເປັນຄືນມາ ແລ້ວກັບຄືນໄປສູ່ສວັນ, ເຮົາຜູ້ເປັນສິດຈະເປັນແນວໃດ?

5. ບ່ອນກະໂຫລກຫົວ ແມ່ນບ່ອນເຮັດຫຍັງ?

6. ເປັນຫຍັງພຣະເຢຊູຈຶ່ງນຳໄປປະຫານຢູ່ຫັ້ນ?

7. ຄຳເວົ້າຄຳສຸດທ້າຍຂອງພຣະອົງມີຄວາມໝາຍຫຍັງສຳລັບທ່ານ?

8. ພວກນາຍຮ້ອຍທີ່ສັ່ງຂຽນຕີພຣະເຢຊູແລະພວກປະຊາຊົນມີຄວາມຮູ້ສຶກແນວໃດເມື່ອເຂົາເຫັນເຫດການ?

9. ການສິ້ນພຣະຊົນຂອງພຣະເຢຊູສຳຄັນຕໍ່ທ່ານຢ່າງໃດ?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

# ຄຣິສມັສ
# ແມ່ນຂ່າວດີທົ່ວໂລກ

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 2:1-20
**ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:** ລູກາ 2:1-20
**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອເຮົາເຂົ້າໃຈເຣື່ອງຂອງຄຣິສມັສເຮົາກໍຈະຍອມເຊື່ອພຣະອົງທັນທີ.
**ຄຳຖາມເພື່ອການສຳຣວດ:** ວັນຄຣິສມັສນຳຄວາມຍິນດີມາສູ່ເຮົາຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າພຣະເຈົ້າສົ່ງພຣະເຢຊູລົງມາເກີດເພື່ອມະນຸດທັງຫລາຍຈະໄດ້ພົ້ນ

**ໜ້າທີ່ອັນສຳຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້**
- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ພຣະເຈົ້າຊົງສ້າງມະນຸດທຸກຄົນໃນຮູບຮ່າງຄ້າຍຄືພຣະອົງ.
- ນຳຄອບຄົວເຖິງຄວາມຈະເຣີນໃນພຣະເຈົ້າ

## ບົດນຳ

ຄຣິສມັສເປັນຣະດູການແຫ່ງຄວາມຊົມຊື່ນຍິນດີຂອງຄົນທີ່ເຊື່ອໃນພຣະເຢຊູ ດ້ວຍວ່າຜູ້ທີ່ເຊື່ອໄດ້ຮຽນຮູ້ວ່າເປັນວັນແຫ່ງພຣະເຈົ້າໄດ້ຊົງເກີດເປັນມະນຸດໂດຍມີນາມວ່າເຢຊູ. ການລໍຄອຍຂອງຜູ້ຊອບທັມໄດ້ມາເຖິງຢ່າງອັສຈັນດ້ວຍເຫດນີ້ຜູ້ທີ່ເຊື່ອຈຶ່ງມີຄວາມຊົມຊື່ນຍິນດີອັນໃຫຍ່ຫລວງ ສ່ວນຜູ້ທີ່ຍັງບໍ່ທັນຮູ້ຈັກຮັກແພງກັບພຣະອົງກໍຄອຍມ່ວນຊື່ນໄປດ້ວຍໂດຍບໍ່ຮູ້ຈັກທີ່ມາຂອງຄຣິສມັສ ດ້ວຍເຫດນີ້ເຮົາທັງຫລາຍມີໜ້າທີ່ເລົ່າເຣື່ອງຄວາມຈິງນີ້ໃຫ້ພວກເຂົາເຈົ້າຟັງ ສ່ວນເພິ່ນຈະເຊື່ອຫລືບໍ່ນັ້ນບໍ່ແມ່ນໜ້າທີ່ຂອງເຮົາ.

**ຍາມພິເສດ** (ລູກາ 2:1-5)

ມີຄຳສັ່ງຈາກກາຍຊາໂອຄຸໂຕ ຈັກກະພັດອົງແຣກຂອງຈັກກະພັດໂຣມທີ່ປົກຄອງປະເທດອິສຣາເອນ ເພິ່ນໄດ້ອອກຄຳສັ່ງສຳຣວດສັມມະໂນຄົວໂດຍໃຫ້ແຕ່ລະຊົນເຜົ່າໄປລົງທະບຽນທີ່ບ້ານເຄົ້າເມືອງເດີມຂອງຕົນ ທັງນີ້ກໍເພື່ອຈະໄດ້ຮູ້ວ່າແຕ່ລະຄົນເປັນມາຢ່າງໃດ ແລະຍັງເປັນຈຸດປະສົງໃນດ້ານພາສີອາກອນອີກ. ຝ່າຍໂຢເຊບພາຄູ່ໝັ້ນຂອງເພິ່ນເດີນທາງໄປຍັງແຂວງຢູດາຍ, ເມືອງຂອງກະສັດດາວິດ ບ້ານເບດເລເຮັມຊຶ່ງໃນເວລານັ້ນນາງມາຣິອາຍິງສາວບໍຣິສຸດຜູ້ເປັນຄູ່ໝັ້ນຂອງໂຢເຊບໄດ້ຮັບການຊົງພຣະເມຕາກະຣຸນາໃຫ້ມີລູກນ້ອຍໃນທ້ອງໂດຍການອັສຈັນ ຄືນາງບໍ່ເຄີຍໄດ້ສູ່ສົມກັບຊາຍໃດຈັກເທື່ອ. ໂຢເຊບລົງທະບຽນເປັນຜົວເມັຽກັບນາງມາຣິອາໃນຂະນະທີ່ນາງພວມຈະເກີດລູກນ້ອຍ ດ້ວຍເຫດນີ້ຈຶ່ງເວົ້າໄດ້ວ່າເປັນຍາມພິເສດ.

ໃນພຣະທັມລູກາບໍ່ໄດ້ບອກວ່ານາງມາຣິອາຕັ້ງຄັນແນວໃດ ດັ່ງນັ້ນຂ້າພະເຈົ້າຈຶ່ງຂໍນຳທ່ານໄປຍັງພຣະທັມມັດທາຍດັ່ງນີ້; ໂຢເຊບເປັນຍິວທີ່ຖືສິນທັມຢ່າງຖືກຕ້ອງ ເພິ່ນໄດ້ຫມັ້ນຫມາຍກັບນາງມາຣິອາແລ້ວກໍຕາມ ເພິ່ນຍັງປະຕິບັດກົດຢ່າງເຄັ່ງຄັດ ຄືເພິ່ນບໍ່ລ່ວງເກີນນາງແມ່ນແຕ່ນ້ອຍ. ໃນຂະນະທີ່ເພິ່ນສງຽມຈຽມຕົວຢູ່ນັ້ນເພິ່ນຮູ້ວ່ານາງມາຣິອາຄູ່ຫມັ້ນຂອງເພິ່ນຕັ້ງທ້ອງ ເພິ່ນຈຶ່ງປ່ຽນໃຈຈະບໍ່ແຕ່ງກັບນາງແລະຕ້ອງຖອນຫມັ້ນເສັຽ, ເນື່ອງຈາກວ່າເພິ່ນເປັນຄົນສິນທັມ

ເພິ່ນຈຶ່ງຄຶດປົກປ້ອງນາງມາຣີອາບໍ່ໃຫ້ຂາຍໜ້າ. ອີງຕາມກົດໝາຍຂອງຢິວແລ້ວໂຢເຊບມີສິດຈະຢ່າຮ້າງຫລືຖອນໝັ້ນນາງ ຫລືຫາກເພິ່ນບໍ່ເປັນຄົນມີສິນທັມແລ້ວເພິ່ນຈະໂວຍວາຍຮອດກົດໝາຍຂອງຢິວ ນາງມາຣີອາຈະຕ້ອງຖືກຄວ່າງໃຫ້ຕາຍ ອີງຕາມພຣະບັນຍັດກ່າວວ່າ " *ສົມມຸດວ່າມີຊາຍຜູ້ນຶ່ງຖືກຈັບໄດ້ໃນເມືອງໃນຂະນະທີ່ລາວສົມສູ່ກັບຍິງສາວທີ່ມີຄູ່ໝັ້ນແລ້ວໃຫ້ນຳເຂົາທັງສອງອອກໄປນອກເມືອງແລະແກວ່ງກ້ອນຫີນໃສ່ໃຫ້ຕາຍຍິງນີ້ຕ້ອງຖືກໂທດເຖິງຕາຍເພາະ ນາງບໍ່ໄດ້ຮ້ອງໃຫ້ຊ່ອຍເຫລືອ ເຖິງແມ່ນນາງຢູ່ໃນເມືອງບ່ອນທີ່ຄົນໄດ້ຍິນສຽງໄດ້* " (ພຣະບັດຍັດສອງ 22:23-24). ສຳລັບນາງມາຣີອາແລ້ວກົດທີ່ມີນັ້ນບໍ່ສາມາດເຮັດອັນຕະລາຍນາງໄດ້ເພາະນາງບໍ່ໄດ້ສົມສູ່ກັບຊາຍໃດ.

ຝ່າຍໂຢເຊບຄົງຄຶດຢ່າງໜັກໃນເຣື່ອງນີ້, " *ແຕ່ເມື່ອໂຢເຊບຍັງຄຶດໃນເຣື່ອງນີ້ຢູ່ ກໍມີເທວະດາຕົນນຶ່ງຂອງອົງພຣະຜູ້ເປັນເຈົ້າມາປາກົດແກ່ໂຢເຊບໃນຄວາມຝັນວ່າ ໂຢເຊບບຸດດາວິດເອີຍ, ຢ່າຊູ່ຢ້ານທີ່ຈະຮັບນາງມາເປັນເມັຽຂອງເຈົ້າເພາະວ່າຜູ້ຊຶ່ງປະຕິສົນທິໃນທ້ອງຂອງນາງກໍເປັນ ໂດຍເດດພຣະວິນຍານບໍຣິສຸດ ນາງຈະປະສູດບຸດແລ້ວຈົ່ງຖວາຍນາມທ່ານວ່າເຢຊູ ເພາະວ່າທ່ານຜູ້ນີ້ແຫລະ, ຈະເປັນຜູ້ໂຜດໄພ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ* " (ຂໍ້ 20-21). ເມື່ອໂຢເຊບຕື່ນຈາກນິມິດຝັນເພິ່ນຈຶ່ງປະຕິບັດຕາມເທວະດາບອກທຸກປະການ.

## <u>ໂລກບໍ່ມີບ່ອນຫວ້າງ</u> (ລູກາ 2:6-7)

" *ເມື່ອເຂົາທັງສອງຍັງຢູ່ທີ່ນັ້ນກໍເຖິງເວລາທີ່ມາຣີອາຈະປະສູດບຸດ ນາງຈຶ່ງໄດ້ປະສູດບຸດຜູ້ກົກ ເອົາຜ້າອ້ອມພັນແລະວາງໄວ້ໃນຮາງຫຍ້າ ເພາະບໍ່ມີບ່ອນຫວ້າງສຳລັບເຂົາໃນໂຮງແຮມ* " (ຂໍ້ 6-7). ເມື່ອໂຢເຊບແລະມາຣີອາເດີນທາງໄປເຖິງເມືອງຂອງດາວິດບ້ານເບດເລເຮັມແລ້ວກໍພາກັນໄປຊອກບ່ອນພັກພາອາສັຍຊົ່ວຄາວ ແຕ່ປາກົດວ່າທຸກບ່ອນກໍເຕັມໄປດ້ວຍຜູ້ຄົນແມ່ນແຕ່ໂຮງແຮມກໍບໍ່ມີຫ້ອງຫວ້າງເລີຽ ດ້ວຍຄວາມຈຳເປັນທັງສອງຈຶ່ງໄດ້ໄປພັກເຊົາທີ່ຄອກສັດແລະປະສູດບຸດນ້ອຍຢູ່ທີ່ຄອກສັດແລະເອົາຜ້າອ້ອມພັນລູກນ້ອຍນອນໃນຮາງຫຍ້າເຟືອງ. ຂ້າພະເຈົ້າເຂົ້າໃຈວ່າໂຢເຊບຄົງຈະລຳບາກໃຈຫລາຍໃນການຊ່ອຍມາຣີອາປະສູດບຸດ ດ້ວຍວ່າໂຢເຊບເອງເປັນຊາຍໜຸ່ມທີ່ບໍ່ເຄີຽມີລູກມີເມັຽມາກ່ອນ ເພິ່ນໄດ້ຊ່ອຍມາຣີອາເກີດລູກຄ້າຍກັບວ່າເພິ່ນເປັນທ່ານໝໍຜູ້ນຶ່ງທີ່ປາສຈາກເຄື່ອງມືໃດໆໃນຄອກສັດ ແລະເພິ່ນເອງກໍຮູ້ຢູ່ເຕັມໃຈວ່າລູກທີ່ເກີດມານັ້ນບໍ່ແມ່ນລູກຈາກການຂອງເພິ່ນ. ຫລັງຈາກປະສູດບຸດນ້ອຍແລ້ວເພິ່ນເອົາຜ້າອ້ອມພັນແລະວາງໄວ້ທີ່ຮາງຫຍ້າ ດ້ວຍວ່າບໍ່ມີບ່ອນຈະວາງ. ນີ້ແຫລະຄືເຣື່ອງຈິງຂອງພຣະຜູ້ໄຖ່ລົງມາເກີດໃນໂລກເພື່ອໄຖ່ໂທດຄວາມຜິດບາບຂອງມະນຸດທັງປວງ, ຄຳຖາມມີຢູ່ວ່າເມື່ອໂລກທີ່ພຣະອົງສ້າງນີ້ບໍ່ມີບ່ອນຫວ້າງສຳລັບພຣະອົງ ໃນຫ້ອງຫົວໃຈຂອງທ່ານມີບ່ອນຢູ່ສຳລັບພຣະເຢຊູບໍ່?.

## <u>ເທວະດາປາກົດຕົວ</u> (ລູກາ 2: 8-20)

ຫລັງພຣະກຸມມານນ້ອຍເຢຊູບັງເກີດແລ້ວກໍມີສັນຍານອັສຈັນເກີດຂຶ້ນແກ່ພວກລ້ຽງແກະ, ໃນສັງຄົມຂອງຄົນອິສຣາເອນນັ້ນພວກລ້ຽງແກະແມ່ນອາຊີບຂອງຄົນທຸກຍາກ ໂດຍສເພາະຢ່າງຍິ່ງຄົນລ້ຽງແກະກຸ່ມທີ່ນອນເຝົ້າແກະຂອງເຂົາໃນເວລາກາງຄືນແມ່ນພວກລ້ຽງແກະສ່ວນຕົວທີ່ບໍ່ມີແກະຫລວງຫລາຍຄືພວກພໍ່ຄ້າ. ໃນຂະນະທີ່ພວກເຂົານອນເຝົ້າແກະຢູ່ນັ້ນກໍມີເຫດການເກີດຂຶ້ນຄື " *ເທວະດາຕົນນຶ່ງຂອງອົງພຣະຜູ້ເປັນເຈົ້າໄດ້ມາປາກົດແກ່ເຂົາ ແລະຣັສມີຂອງອົງພຣະຜູ້ເປັນເຈົ້າໄດ້ສ່ອງຮອບເຂົາ ແລະເຂົາໄດ້ຕົກສະທ້ານຢ້ານໃຈຫລາຍ* " (ຂໍ້ 9). ຄຳວ່າປາກົດຕົວໝາຍຄວາມວ່າເທວະດາມາປາກົດເປັນຕົນເປັນໂຕຕໍ່ໜ້າພວກລ້ຽງແກະ(ບໍ່ແມ່ນພວກເຂົາຝັນເຫັນ) ແລະແສງຣັສມີຂອງພຣະເຈົ້າຜ່ານທາງເທວະດາກໍໄດ້ສ່ອງຮອບເຂົາ ເມື່ອເຂົາເຫັນເຫດການເຊັ່ນນີ້ເຂົາກໍພາກັນຢ້ານຫລາຍ, " *ຝ່າຍເທວະດາຕົນນັ້ນກໍກ່າວຕໍ່ເຂົາວ່າ ຢ່າຊູ່ຢ້ານ ເພາະເຮົານີ້ແຫລະ, ເຮົານຳເອົາຂ່າວດີມາປະກາດໃຫ້ທ່ານຮູ້ ຊຶ່ງເປັນທີ່ຊົມຊື່ນຍິນດີອັນໃຫຍ່ແກ່ພົລເມືອງທັງໝົດ ເພາະວ່າວັນນີ້ພຣະຜູ້ໂຜດໃຫ້ພົ້ນອົງນຶ່ງ ຄືພຣະຄຣິດເຈົ້າມາບັງເກີດໃນເມືອງດາວິດສຳລັບເຈົ້າທັງຫລາຍ* " (ຂໍ້ 10). ພວກລ້ຽງແກະພາກັນຢ້ານດ້ວຍເຂົາຄຶດວ່າແມ່ນຜີມາຫລອກພວກເຂົາ ດັ່ງນັ້ນເທວະດາຈຶ່ງກ່າວ ວ່າ ຢ່າຊູ່ຢ້ານ, ເທວະດາໄດ້ບອກເຂົາເຣື່ອງການເກີດຂອງພຣະຜູ້ໂຜດນັ້ນໝາຍຄວາມວ່າໂຜດຊ່ອຍຄົນທັງ

ຫລາຍໃຫ້ ລອດພົ້ນຈາກຄວາມຜິດບາບຂອງເຂົາ ດ້ວຍເຫດນີ້ເທວະດາຈຶ່ງກ່າວວ່າ *ເປັນທີ່ຊື່ນຊົມຍິນດີອັນໃຫຍ່ແກ່ພົລເມືອງ ທັງໝົດ* ອາດຈະໝາຍຄວາມວ່າພົລເມືອງຊອງອິສຣາເອນ.(ສ່ວນຕົວຂ້າພະເຈົ້າຂ້ອງໃຈຄຳວ່າ *ພຣະຜູ້ໂຜດໃຫ້ພົ້ນ ອົງນຶ່ງ* ດ້ວຍວ່າຫາກເວົ້າວ່າ ພຣະຜູ້ໂຜດອົງນຶ່ງມີຄວາມໝາຍສຳລັບຂ້າພະເຈົ້າວ່າມີພຣະຜູ້ໂຜດອົງອື່ນອີກ ດັ່ງນັ້ນຂ້າພະເຈົ້າຈຶ່ງຂໍອ້າງເອົາຄຳເວົ້າຕໍ່ໄປນີ້ມາສເນີຕໍ່ທ່ານຜູ້ອ່ານ. ຈິງຢູ່ໃນພາສາອັ່ງກິດເວົ້າວ່າ a Savior ແຕ່ບໍ່ໝາຍຄວາມວ່າອົງນຶ່ງ ຫາກຈະເວົ້າວ່າ Savoir ຊຶ່ງກໍບໍ່ເປັນການຄົບຖ້ວນຫລັກໄວຍະກອນພາສາອັ່ງກິດ ຂໍນຳທ່ານອ່ານພາສາໄທ ແປມາດັ່ງນີ້, เพราะว่าในวันนี้พระผู้ช่วยให้รอดของท่านทั้งหลาย คือพระคริสตเจ้ามาบังเกิดที่เมืองดาวิด ສ່ວນພາສາກຣີກຊຶ່ງເປັນພາສາກົກເຄົ້າເວົ້າວ່າ ÎĐõüÓø (Soter) ແປວ່າພຣະເຈົ້າ ຫລືພຣະຄຣິດ ຫລືພຣະຜູ້ຊ່ອຍໃຫ້ລອດ). ສລຸບແລ້ວຂ້າພະເຈົ້າມັກຄຳ ວ່າ **ພຣະຜູ້ໂຜດໃຫ້ພົ້ນ ຄືພຣະຄຣິດເຈົ້າມາບັງເກີດ.**

*"ໃນທັນໃດນັ້ນມີກອງທັບສວັນໝູ່ໃຫຍ່ມາຢູ່ກັບເທວະດາຕົນນັ້ນ ຮ່ວມສັຣເສີນພຣະເຈົ້າວ່າພຣະຣັສມີຈົ່ງມີແດ່ພຣະເຈົ້າໃນທີ່ສູງສຸດ ແລະທີ່ແຜ່ນດິນໂລກຈົ່ງມີສັນຕິສຸກແກ່ມະນຸດທັງທີ່ພຣະອົງຊົງຊອບພຣະທັຍນັ້ນ "* (ຂໍ້ 13-14). ເມື່ອເທວະດາຕົນນັ້ນກ່າວເຊັ່ນນັ້ນກໍມີຝູງເທວະດາເປັນເໝືອນກອງທັບສວັນໝູ່ໃຫຍ່ປາກົດຂຶ້ນພ້ອມກັບເທວະດາຕົນນັ້ນເພື່ອຮ່ວມສລອງຮ້ອງເພງສັຣເສີນພຣະຜູ້ໄຖ່, ຕໍ່ໜ້າຕໍ່ຕາພວກລ້ຽງແກະເພື່ອເປັນການປະກາດວ່າໃຫ້ໂລກໄດ້ຮ້ອງສັຣເສີນພຣະເຈົ້າ ເມື່ອພວກເທວະດາສັຣເສີນພຣະເຈົ້າແລ້ວກໍພາກັນກັບຄືນສູ່ສວັນ. *"ເມື່ອເທວະດາເຫລົ່ານັ້ນໄປຈາກເຂົາຂຶ້ນສູ່ສວັນແລ້ວ ພວກລ້ຽງແກະໄດ້ເວົ້າກັນວ່າ ເຮົາພາກັນໄປເມືອງເບັດເລເຮັມເທາະ ໄປເບິ່ງເຫດການທີ່ເກີດຂຶ້ນຊຶ່ງອົງພຣະຜູ້ເປັນເຈົ້າໄດ້ຊົງແຈ້ງແກ່ເຮົານັ້ນ "* (ຂໍ້ 16-17). ເມື່ອພວກລ້ຽງແກະໄດ້ພົບເຫັນພຣະກຸມມານນ້ອຍແລ້ວພວກເຂົາກໍໄປບອກຄົນທັງຫລາຍ ພວກລ້ຽງແກະຈຶ່ງກາຍເປັນຄົນກຸ່ມແຮກທີ່ປະກາດເຣື່ອງພຣະເຢຊູຄຣິດຕໍ່ຄົນອື່ນຟັງ.

<u>ຄຳຖາມ:</u>

1. ຄຣິສມັສມີຄວາມສຳຄັນຕໍ່ທ່ານແນວໃດ?

2. ຄຣິສມັສໄດ້ສລອງກັນມາຈັກປີແລ້ວ ແລະຍັງຈະສລອງກັນອີກຈັກປີ.

3. ມີໃຜແດ່ໃນໂລກນີ້ສລອງວັນເກີດຮອດ 2000 ເທື່ອ?

4. ຍາມທີ່ພຣະເຢຊູບັງເກີດ ເປັນຫຍັງຈຶ່ງຮ້ອງວ່າຍາມພິເສດ?

5. ເປັນຫຍັງພຣະເຢຊູຈຶ່ງບັງເກີດທີ່ຄອກສັດ?

6. ພວກລ້ຽງແກະຮູ້ໄດ້ແນວໃດວ່າພຣະເຢຊູບັງເກີດຢູ່ທີ່ນັ້ນ?

7. ພວກເທວະດາເຮັດຫຍັງຕໍ່ໜ້າພວກລ້ຽງແກະ?

8. ຫລັງຈາກເທວະດາກັບສູ່ສວັນແລ້ວ ພວກລ້ຽງແກະໄປໃສ?